ມູນເຊື້ອຕໍ່ສູ້

# ສຽງກ້ອງຂອງວັດທີ
# ວິລະຊົນປະຕິວັດ



# ສຽງກ້ອງຂອງລັດທິວິລະຊົນປະຕິວັດ

ຈາກ....ໜັງສືພິມສຽງປະຊາຊົນ

ບຸນສິ່ງ ແກ້ວບົວສາຍ
ສ. ສາຍບຸນມີ

22 MAR 2010

**ສຳນັກພິມຈຳໜ່າຍ ສ.ປ.ປ.ລ.**
**1982**

## ແກ້ຄຳຜິດ

| ໜ້າ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|
| 11 | 2 | ທົວປະເທດ | ທົ່ວປະເທດ |
| 23 | 5 | ມາຢູ | ມາຢູ່ |
| 47 | 3 | ລູກກະສູນ | ລກກະສູນ |
| 68 | 5 | ພິສຸດໄດ້ອ່າ: | ພິສູດໄດ້ອ່າ: |
| 69 | 1 | ກິດຂວາງ | ກີດຂວາງ |
| 72 | 16 | ຖິມລະເບີດ | ຖິ້ມລະເບີດ |
| 73 | 15 | ບ້ ຮູ້ | ບໍ່ຮູ້ |
| 77 | 15 | ກູ້ຊາເຕ້າເມ | ກູ້ຊາເຕ້ານ |
| 98 | 2 | ມາຫີ | ມາທິ |
| 100 | 14 | ເວລານັ້ | ເວລານັ້ນ |
| 110 | 15 | ປະທະກັນດ້ອຍ | ປະທະກັນດ້ວຍ |
| 126 | 2 | ຕາລົ່ງຈັນ | ຕາຫລົ່ງຈົມ |
| — | 13 | ຜູ້ໜູ່ມນ້ຍຍຊົ່ງ | ຜູ້ໜຸ່ມນ້ອຍຊົ່ງ |
| 129 | 9 | ສະລຸຜຸຜ່າຍ | ສະລຸຜຸຜ່າຍ |
| — | 17 | ກະດຸກຜ່າຍ | ກະດູກຜ່າຍ |
| 130 | 6 | ເຂົ້າບ່ອນເກີດເຫດ | ເຂົ້າມບ່ອນເກີດເຫດ |
| — | 11 | ຮູ້ຈັກເຮດ | ຮູ້ຈັກເຮັດ |
| 133 | 2 | ພົລາດລະຫານ | ພົລະອາດຫານ |

| ໜ້າທີ | ແຖວ | ຄຳຜິດ | ຄຳຖືກ |
|---|---|---|---|
| 7 | 9 | ຣ່ອງໃຍ | ຫ່ອງໃຍ |
| 8 | 7 | ການມາຢຸ | ການມາຢູ່ |
| 14 | 7 | ບໍຊິມເຄີຍ | ບໍ່ຊິມເຄີຍ |
| 17 | 5 | ໂລ່ງລອຍ | ລົງລອຍ |
| 26 | 1 | ການມະຕິອັດ | ການປະຕິອັດ |
| 26 | 16 | ໂສດມາດຕະກຳ | ໂສກນາດຕະກຳ |
| 33 | 15 | ບ່ອນລິ | ບ່ອນລື |
| 45 | 17 | ມາສູ້ເຂົາເຈົ້າ | ມາສູ່ເຂົາເຈົ້າ |
| 49 | 4 | ໃນຄວາມເຊືອ | ໃນຄວາມເຊື່ອ |
| 53 | 7 | ຄວາມຕາຍກໍ່ຄາຍ | ຄວາມຕາຍກໍຄອຍ |
| 62 | 18 | ໃນຂັນບຸກ | ໃນຂັ້ນບຸກ |
| 65 | 4 | ອົກສັນ | ອົກສັ້ນ |
| 66 | 18 | ງ້ຫັງອົງ | ງ້ຫ່ງອົງ |
| 73 | 17 | ພະຍະຍາມ | ພະຍາຍາມ |
| 76 | 14 | ອຸ່ນຂອງຄຳ | ຂອງອຸ່ນຄຳ |
| 89 | 13 | ຫັດສະຈັນ | ອັດສະຈັນ |
| 90 | 4 | ເຂົ້າເຈົ້າ | ເຂົາເຈົ້າ |
| 98 | 8 | ເມີອສັດຕູ | ເມື່ອສັດຕູ |
| 102 | 3 | ເມີອ | ເມື່ອ |
| 123 | 6 | ຈາກສີງ | ຈາກສິ່ງ |
| 125 | 11 | ທີສົງ | ທີ່ສິ່ງ |

ບຸນສົ່ງ ...
ສ. ສາຍບຸນມີ

## ສາລະບານ

ໜ້າ

ສຽງກ້ອງຂອງລັດທິວິລະຊົນປະຕິວັດ ........ 1

ພະນັກງານຜູ້ຕິລົບຕິບໄດ້ ........ 10

ສູ້ຊົນກັບຄວາມລຳບາກ ........ 16

ຕາຍດີກ່ວາໄຂຄວາມລັບ ........ 22

ຕາຍຢ່າງມີກຽດ ........ 28

ເຄື່ອນໄຫວຢູ່ກ້ອງປີກເຮືອບິນຂອງສັດຕູ ........ 37

ກ້າຕ້ອງຊະນະ ........ 47

ບ້ານຕະຣອກໃຕ້ໃຈເດັດ ........ 52

ຄວາມພົດພັ້ນຂອງໄວຄະນອງປະຕິວັດ ........ 60

ຣັບໃຊ້ວຽກງານຂອງຊາດຢ່າງສຸດໃຈ ........ 75

ຊີວິດກອງທູອນຂອງ ສະຫາຍ ເນັ້ງຢ່າທ່າວ ........ 88

ຄວາມຈອງຫອງຂອງພວກປະຕິການໄທ ........ 105

ເດັດດ່ຽວສຳເລັດໜ້າທີ່ໃຈກາງ ........ 114

ເຮັດສຳເລັດທຸກວຽກງານຂອງຊາດມອບໝາຍໃຫ້ ........ 121

# ສຽງກ້ອງຂອງລັດທິວິລະຊົນປະຕິວັດ

ຈາກ....ໜັງສືພິມສຽງປະຊາຊົນ

5 ມື້ແລ້ວທີ່ພະຍາດໄຂ້ໄດ້ອາລະວາດສຸຂະພາບຂອງສະຫາຍບຸນແພງແລະກໍແມ່ນໄລຍະນີ້ເອງທີ່ກົມກອງ ເຂົາເຈົ້າໄດ້ຮັບຄຳສັ່ງໃຫ້ໄປຕີສັດຕູຢູ່ທີດພູວຽງຈຸດສູງ 1.500 ບ້ອນແນວນັ້ນ, ທາງກອງຈຶ່ງໄດ້ວິກລິງ ໃຫ້ສະ ຫາຍ ບຸນແພງພັກຜ່ອນເປົ້າສຳນັກ. ສ່ວນສະຫາຍຜູ້ອື່ນໆ ນັ້ນຕ່າງກໍກຽມຕົວຢ່າງຄຶກຄັກ ໃນທ່າ ກຽມ ພ້ອມ ອອກ ເຄື່ອນທັບແລ້ວ, ເວລານັ້ນໃນໜ້າຂອງສະຫາຍເສົ້າລົງຢ່າງກະທັນຫັນ ສະຫາຍພູວລຸກພູດນັ່ງ ດ້ວຍຄວາມກັງວົນຄ້າຍ ກັບວ່າ: ແຜ່ນດິນວອນນ້ອຍໆ ທີ່ສະຫາຍພວມອາໃສຢູ່ນີ້ເຕັ້ນໄປດ້ວຍສັງຫານ. ໃນໜ້າຄົມຄາຍ ແລະເປັນ ໜ້າ ຮັກຂອງໄວໜຸ່ມໃນກະສຽນ 22 ຂວບຜູ້ນີ້ ໄດ້ລະ ບາຍ ຄວາມແຄ້ນອອກມາຢ່າງເຕັມປ່ຽມ. ໃນຫູທັງສອງເບື້ອງຂອງສະ

ຫາຍແດງເປັ່ງເໝືອນກໍ່ໄຟ, ຄູ່ຕາທີ່ແດງໃສຂອງສະຫາຍ ກົ້ງເບິ່ງປ້ອມສູງທາງທິດ ທີ່ກົມກອງພວມຈະເຄື່ອນທັບ ໄປນັ້ນຢ່າງບໍ່ພັບຕາ, ປະກົດວ່າສະຫາຍຢາກໃຊ້ແສງຕາ ທີ່ສະເໝືອນເລົາໄຟຂອງກົນພຸ່ງໄປເຜົາຜານປົດກ້າຍ ຂອງ ສັດຕູ ຢ່າງປະຈຸບັນທັນດ່ວນ, ໄຟແຄ້ນ ທີ່ອັ່ງເຕັມຫົວອົກ ແລ້ວນັ້ນ ເກືອບຈະລົ້ນອອກ ຈາກດວງຕາ, ສະຫາຍອົດບໍ່ໄດ້ ອີກແລ້ວທີ່ຈະຂ້ຽງທວນໄຟທີ່ພວມລຸກພຸ່ງເປັນແປວນີ້ລວກ ລົນຈິດໃຈຕົນເອງຕໍ່ໄປ. ຍ້ອນສິ່ງເຫລົ່ານັ້ນແຫລະ ໄດ້ບັງ ຄັບໃຫ້ສະຫາຍຕ້ອງຝືນຄຳສັ່ງ ແລ້ວຮ້ອງຂໍ ໃຫ້ທາງກອງ ຕ້ອງອະນຸຍາດໃຫ້ສະຫາຍໄດ້ໄປປະຕິບັດໜ້າທີ່ ພ້ອມກັບ ໝູ່ໃນເທື່ອນີ້: ສະຫາຍ ອ້ອນວອນ ຫລາຍຕໍ່ຫລາຍເທື່ອ ທາງກອງຈຶ່ງໄດ້ອະນຸມັດ ແລະ ບັນຈຸສະຫາຍ ຢູ່ໃນຈຸສຳ ຮອງ. ເຖິງແນວນັ້ນກໍ່ຕາມ ບຸນແພງກໍ່ຍັງບໍ່ທັນສົມອົກສົມ ໃຈ. ສະຫາຍໄດ້ສືບຕໍ່ຮ້ອງຂໍໃຫ້ກະນະກອງ ບັນຈຸຕົນເຂົ້າ ໃນໜ່ວຍຕະລຸມບອນ.

ເມື່ອໄດ້ສົມປະສົງແລ້ວ ບຸນແພງ ຈົນລືມຮອດຄວາມ ອິດເມື່ອຍ, ສະຫາຍຕັ້ງໜ້າປະຕິບັດໜ້າທີ່ ຢ່າງເອົາຈິງ ເອົາຈັງ. ດັ່ງນັ້ນໃນບັ້ນຕ້ານການບຸກໂຈມຕີຂອງສັດຕູເທື່ອ ນີ້, ສະຫາຍຂ້າສັດຕູຕາຍ 1 ບັກ, ຍຶດປືນໄດ້ 1 ກະບອກ

ຈາກນັ້ນ ສະຫາຍ ພັດໄດ້ຖືກສັບຊ້ອນໃຫ້ໄປຕີສັດຕູ ຢູ່ຫົດຊຽງລ້ອມອີກ, ຂ້າສັດຕູລາຍອີກ 2 ຄົນ, ບາດເຈັບ 3, ຍຶດປືນໄດ້ 2 ກະບອກ, ໃນບັ້ນນີ້ ເພື່ອຫວັງກູ້ເອົາພວກມັນອອກຈາກການປະລາໄຊຢ່າງຕໍ່ເນື່ອງກັນນັ້ນ, ພວກມັນໄດ້ໃຫ້ບິນຊະນິດຕ່າງໆ ມາຖິ້ມລະເບີດ ຍິງທຳລາຍ ເຜົາຜານດິນດອນດອນຫຍ້າເຫຼົ່ານີ້ຢ່າງປ່ວງບ້າ, ອັນໄດ້ເຮັດໃຫ້ສະຫາຍບຸນແພງຖືກບາດເຈັບຢູ່ຂາເບື້ອງຊ້າຍ ໜັກສົມຄວນ. ເມື່ອເຫັນຄືແນວນັ້ນ ຄະນະກອງຈິ່ງໄດ້ຕົກລົງເອົາສະຫາຍອອກຈາກສະໜາມຮົບ. ມະຕິທີ່ສັ້ນກະທັດລັດນີ້ ຊ່າງເຮັດໃຫ້ນ້ຳຕາແຫ່ງຄວາມຄຽດແຄ້ນ ຂອງສະຫາຍ ບຸກທະລຸອອກຈາກເບົ້າຕາ ຢ່າງບໍ່ຂາດສາຍ, ສະຫາຍ ເວົ້າວ່າ : "ນ້ອງບໍ່ຍອມປະໜ້າທີ່ ເດັດຂາດ, ເຖິງວ່ານ້ອງຖືກບາດເຈັບບໍ່ສາມາດໄລ່ຕີຕາມສັດຕູໄດ້ກໍຕາມ, ແຕ່ນ້ອງຍັງມີຄວາມສາມາດຕີສັດຕູຢູ່ກັບທີ່, ນ້ອງຂ້າສັດຕູໄດ້ອີກຜູ້ໜຶ່ງກໍຫລຸດຜ່ອນຄວາມໜັກອົກໜັກໃຈ ຂອງປະຊາຊົນ ໄປອີກໜ້ອຍໜຶ່ງ ແລະກໍເປັນການລະບາຍຄວາມແຄ້ນຂອງນ້ອງໃຫ້ເບົາໄປອີກໜ້ອຍໜຶ່ງ, ຈິ່ງອະນຸຍາດໃຫ້ນ້ອງໄດ້ພ້ອມກັບໝູ່ຕີສັດຕູຕໍ່ໄປເທາະ". ຍ້ອນຄວາມທໍລະຫົດອົດທົນ ແລະ ຄວາມອົງອາດກ້າກັ່ນຂອງສະຫາຍ, ສະຫາຍຂ້າສັດ

ຕູໄດ້ອີກ 2 ຄົນ, ເຮັດໃຫ້ບາດເຈັບ 3 ຄົນ ແລະທຳລາຍປືນ 5 ກະບອກ.

ມື້ໜຶ່ງໃນທ້າຍເດືອນ 12/73 ສະຫາຍ ໄດ້ຮັບໜ້າທີ່ໄປຕີສັດຕູ ຢູ່ບໍລິເວນທິດຕາເວັນອອກສຽງເໜືອ ເມືອງຊຽງເງິນ, ເຂົາເຈົ້າເຄື່ອນທັບ ໄປໃຕ້ມ່ານມືດຍັງມະຫາສານດ້ວຍຈິດໃຈເຄັ້ງຮ້ອນ.

ໃນຂະບວນດັ່ງກ່າວ ສະຫາຍບຸນແພງ ປະກົດເປັນຜູ້ຮ້ອນອົກຮ້ອນໃຈກວ່າໝູ່. ດັ່ງນັ້ນ ພໍແຕ່ລູກປືນສັນຍານສີແດງພຸ່ງຂຶ້ນສູ່ທ້ອງຟ້າ, ສະຫາຍ ກໍ່ວ່ອງໄວໂດດລົງຂຸມຄອງແລ້ວ ປະທັບປືນໃສ່ບ່າ, ລັ່ນໄກປືນພົ່ນຫົວກະສຸນໄປໃສ່ສັດຕູປານຫ່າຝົນ.

ການບຸກໂຈມຕີ ລະຫວ່າງ ເຂົາເຈົ້າກັບສັດຕູໄດ້ຜັນແປໄປຢ່າງດຸເດືອດ, ກະທັນຫັນ, 15 ນາທີແລ້ວທີ່ການສູ້ກັນໄປໄດກັບມາບັງຄ້າກັນຢູ່, ຮັງປືນທີ່ແໜ້ນໜາຂອງ ສັດຕູທີ່ຢູ່ເຊິ່ງໜ້າຂອງ ສະຫາຍ ຍັງຄົງບົງດ້ານທານຢ່າງຈອງຫອງ, ປະກົດການທີ່ສະຫາຍ ພວມປະເຊີນໜ້າຢູ່ຍາມນີ້ນັບເປັນສິ່ງກີດຂວາງໃຫຍ່ທີ່ສຸດ ແກ່ການເຮັດສຳເລັດໜ້າທີ່ຂອງເຂົາເຈົ້າ, ຫົວໃຈຂອງສະຫາຍ ຮ້ອນເໝືອນພູເຂົາໄຟນ່ຳຈະລະເບີດ, ເມັດເຫື່ອແກມດິນແດງທີ່ຕິດຢູ່ຕາມພວງ

24 / VII

ແກ້ມ ແລະ ໜ້າຜາກຂອງ ສະຫາຍ ກໍຄ່ອຍຂຸຫລົບລົງ
ຕາມຈັງຫວະສະທ້ອນຄືນຂອງປືນກົນນີ້ ທີ່ສະຫາຍຍິງສຸມ
ໃສ່ຮັງປືນຂອງສັດຕູ. ແຕ່ແລ້ວ ສິ່ງທັງໝົດ ທີ່ສະຫາຍໄດ້
ຕັ້ງໃຈຈະເຮັດໃຫ້ມັ້ນທະລົງທະລາຍນັ້ນກໍຍັງຄົງດື້ດ້ານພົ້ນ
ຫົວກະສຸນອອກມາຢ່າງເອົາະປັ່ນເອົາຕາຍ ເວລານັ້ນ ສະ
ຫາຍບໍ່ຄຳນຶງເຖິງຫຍັງໃນຊີວິດ ທີ່ພວມເບັ້ງບານ ແລະ
ສົດຊື່ນຢ່າງເຕັມປ່ຽມຂອງສະຫາຍອີກ, ສະຫາຍ ເຕັ້ນອອກ
ຈາກຂຸມຄອງຢ່າງໄວວາ ບ່າພາຍປືນກົນນີ້, ມືທັງສອງ
ເບື້ອງໂຈນຫໍ່ດີນລະເບີດ ບຸກເລັ່ງເຂົ້າໃສ່ຈຸດຮັງປືນຢ່າງບໍ່
ຫວັ່ນກົວ ສະຫາຍຖືກບາດຕີນໄດ້ພຽງແຕ່ 3–4 ກ້າວ, ລູກ
ປືນທີ່ເໜືອນທ່າຝົນ ກໍໄດ້ສຸມມາໃສ່ ຢ່າງເອົາຕົວລອດໄດ້
ບາກ, ສະຫາຍ ລົ້ມຟຸບລົງເລືອດສີແດງເຂັ້ມຂອງສະຫາຍ
ໄຫລອອກຈາກຂາທັງສອງເບື້ອງ ອຳນາດຄວາມເຈັບປວດ
ໄດ້ບັງຄັບໃຫ້ສະຫາຍຕ້ອງສະຫລົບກັບທີ່,ແຕ່ສຽງປືນຕ້ານ
ທານແບບຊາມຊາດາຍຂອງສັດຕູນັ້ນ ພັດບັງປ່ວງບ້າສຸດ
ຂະໜາດ, ສະຫາຍພະຍາຍາມຟື້ນສະຕິ ຄືນມາ ແລ້ວໃຊ້
ກຳລັງແຮງທັງໝົດທີ່ມີໃນໂຕຊູກັບລຸກຂຶ້ນເພື່ອສືບຕໍ່ ປະຕິ
ບັດໜ້າທີ່, ແຕ່ຄວາມຕັ້ງໃຈທັງໝົດນັ້ນ ລ້ວນແຕ່ມີສິ່ງ
ກີດຂວາງຮ້ອຍຊັ້ນພັນຫລືບ, ຂາທັງສອງເບື້ອງ ທີ່ເຂັ້ມ

ແຂງ, ວ່ອງໄວໃນເມື່ອກ່ອນບໍ່ສາມາດຈະເຄື່ອນຍ້າຍໄປ ໃສ ໄດ້ອີກແລ້ວ.

ການສູ້ຮົບກັບກິນເວລາເກືອບ 1 ຊົ່ວໂມງ, ລູກປືນ ລະເບີດມືທີ່ເຂົາຖືມານຳນັ້ນກໍ່ຈະໝົດແລ້ວ, ຂີ້ເຝື່ອທີ່ຕົບໜາຕາມທ້ອງຟ້າທິດບົວລະພາ ກໍ່ປະກົດວ່າເຜີກໄປ ຫລາຍເຕີບເໝືອນກັບມັນໄດ້ ສັນ ຍານ ໃຫ້ ຮູ້ ວ່າ " ຟ້າກໍ່ຈະສະຫວ່າງແລ້ວໃດ " ພວກສະຫາຍຈົ່ງຟ້າວຕັດສິນສາ "

ເວລານັ້ນສະພາບສະໜາມຮົບ ບັງຄັງຜັນແປໄປຢ່າງສັບສົນກັບດານ, ເຂົາໄດ້ຄິດພໍ້ຄຳເວົ້າປະໂຫຍກ ໜຶ່ງ ວ່າ: " ຮັກສາກຳລັງຂອງຕົນໄວ້ໃນມື້ນີ້, ກໍ່ເພື່ອດັບສູນສັດຕູ ໃນມື້ໜ້າ " ສ່ວນບຸນແພງຜູ້ທີ່ຢູ່ໃຈກາງປົດຂອງສັດຕູ ນັ້ນບັງຄັງສູ້ຮົບກັບສັດຕູ ຢ່າງດຸເດືອດ ແລະບໍ່ທໍ້ຖອຍ, ເມື່ອອ້າຍນ້ອງຈຳນວນທີ່ໄດ້ຮັບໜ້າທີ່ໄປຕ້ອນເອົາ ສະຫາຍບຸນແພງອອກມານັ້ນໄປຮອດ, ລາຍງານສະ ພາບ ແລ້ວ ສະຫາຍບຸນແພງເວົ້າຢ່າງເຄັ່ງຂຶມເໝືອນລັກສະນະ ອອກ ຄຳສັ່ງວ່າ: " ພວກສະຫາຍພ້ອມກັນ ຖອຍສາ, ລູກປືນຂອງພວກສະຫາຍບັງເຫລືອທໍ່ໃດຈົ່ງປະໄວ້ໃຫ້ເຮົາ " ເມື່ອຍິນບຸນແພງເວົ້າແນວນັ້ນ ເຂົາເຈົ້າອິດບໍ່ໄດ້ທີ່ຈະບໍ່ຫລັ່ງນ້ຳ ຕາເຂົາເຈົ້າລະດົມສະຫາຍບຸນແພງ ຈົ່ງປະຕິບັດການຄຳສັ່ງ

ທີ່ທາງກອງໄດ້ມອບໝາຍໃຫ້ເຂົາເຈົ້າ; ແຕ່ບຸນເພງຍັງຄົງເວົ້າດ້ວຍສຳນຽງ ເຂັ້ມແຂງທັງເດັດຂາດ: "ພວກສະຫາຍຈົ່ງພ້ອມກັນຖຽງສາ, ຖ້າເມົາມົວນຳເຮົາຫລາຍຈະພົບອຸປະສັກຫລາຍອີກ". ຄຳເວົ້າອັນຈິງໃຈ, ທ່າທີເຄັ່ງຂຶມ, ເດັດຂາດແລະບໍ່ປານີປານອມກັບສັດຕູໄດ້ເຮັດໃຫ້ບັນດາສະຫາຍ ບໍ່ສາມາດຈະກີດກັ້ນອຸດົມການແຫ່ງລັດທິ ວິລະຊົນປະຕິວັດຂອງສະຫາຍໄດ້. ບັນດາສະຫາຍ ໄດ້ມອບຟັກປືນລູກລະເບີດໃຫ້ ສະຫາຍ ບຸນເພງ ຈຳນວນໜຶ່ງແລ້ວກໍຈຳຕ້ອງຈາກສະຫາຍມາດ້ວຍຄວາມຮ່ວງໃຍອາໄລອາວອນ.

ເພື່ອປ້ອງກັນຄວາມປອດໄພ ຂອງບັນດາສະຫາຍອ້າຍນ້ອງບຸນເພງ ໄດ້ຍິງຕ້ານສັດຕູຄືນ ຢ່າງບໍ່ຫວາດຫວັ່ນສັ່ນສະເທືອນ. ຈົນ 30 ກວ່ານາທີແລ້ວທີ່ສະຫາຍໄດ້ຕ້ານທານສັດຕູຢ່າງດຸເດືອດ, ແຕ່ສັດຕູທີ່ແຫ່ແຫນກັນມາຄືໝູ່ມົດໝູ່ປວກນັ້ນ ກໍຍັງຄົງຄືບໜ້າຂຶ້ນໃກ້ ຊິດສະຫາຍເປັນລຳດັບເວລາ ຫົວລ້ຽວຫົວຕໍ່ນີ້ ລູກປືນທີ່ສະຫາຍທັງຍິງທັງປະປັດໃນ 30 ກວ່ານາທີກ່ອນນີ້ກໍໝົດແລ້ວ. ສັດຕູທີ່ອ້ອມຈອດສະຫາຍຢູ່ນັ້ນ ບາງບັກໄດ້ເຜດສຽງດ່າວ່າ: "ບັກອິດສະຫລະນ້ອຍນີ້, ມຶງບໍ່ເຫັນເກັ່ງປານໃດ" ພ້ອມນັ້ນ ມີບັກໜຶ່ງເວົ້າແບບຕົບຫູແລ້ວຈຶ່ງລຸບຫລັງວ່າ: ຍອມສານ້ອຍເອີຍ!

ຖັນເຈົ້າຍອມແລ້ວ ພວກຂ້ອຍຈະປິ່ນປົວເຈົ້າຈົນດີ " ຕໍ່ຄຳ
ເວົ້າ ທີ່ໜ້າຂີ້ດຽດ ແລະ ລັງກຽດເຊັ່ນນີ້ ເຮັດໃຫ້ ບຸນແພງ
ເລືອດຂຶ້ນໜ້າທີ່ສຸດ, ສະຫາຍຕອບວ່າ: " ເຖິງວ່າກູຕ້ອງ
ຕາຍນີ້ລະຮ້ອຍເທື່ອ ກູກໍ່ບໍ່ຍອມດອກ " ຄຳເວົ້າທີ່ເດັດຂາດ
ບໍ່ຍອມຈຳນົນສັດຕູ ໄດ້ເຮັດໃຫ້ໝາພານພຶງນີ້ ບີງປ່ອງບ້າ
ນີບັກໜຶ່ງທັງເວົ້າທັງກັດແຂ້ວງ້າກາງ ເໝືອນປາກຈີກກິນ
ຊີ້ນບຸນແພງທັນໃດ. ແຕ່ການນາບຂູ່ແບບເກົ່າ ຫລ້າຫລັງ
ນີ້ ມັ່ນຫລ້າສວາຍເກີນໄປສາແລ້ວ, ດັ່ງນັ້ນບຸນແພງຕັດສິນ
ໃຈ ແລະ ຕວງກໍລະນີໄວ້ກ່ອນແຕ່ເທິງແລ້ວ, ບຸນແພງຈິງ
ໄດ້ຈິງລະເບີດມືໜ່ວຍສຸດທ້າຍໄວ້ໜ່ວຍໜຶ່ງ. ພວກສັດຕູ
ຄືດວ່າ ບຸນແພງບໍ່ອາດມີຫຍັງໃນໂຕພໍດີ, ແລ້ວພວກນັ້ນ
ຈິງຫຸ້ມນາຫວັງຈັບເອົາບຸນແພງທັງເປັນ, ເວລານັ້ນສຽງ
ອັນກອງຟ້າ ສະເທືອນດິນ ໄດ້ຫລອນ ລະເບີດຂຶ້ນ ທັນທີ,
ສຽງສັນຍາແຫ່ງຄວາມຈົງຮັກພັກດີ ຕໍ່ຊາດຕໍ່ການປະຕິວັດ
ຢ່າງບໍ່ມີ ຂອບະເຂດ ຂອງສະຫາຍ ບຸນແພງ ໄດ້ກາຍເປັນ
ສຽງເອີ້ນສັ່ງອຳລາ ເພື່ອນຮ່ວມຮົບ, ອຳລາ ຈາກດິນດອນ
ດອນຫຍ້າ ອັນແສນຮັກ ແຫ່ງບ້ານເກີດ ເມືອງນອນ ແລະ
ກໍເປັນສຽງ ອຳລາຄາວຈາກທຸກສິ່ງທຸກຢ່າງ ທີ່ສະຫາຍເຄີຍ
ເຫັນ, ສຽງກັງວານວັ່ງກ່າວ ນອກຈາກໄດ້ເປັນສຽງກ້ອງສຸດ

ທ້າຍ ຂອງລັດທິວິລະຊົນປະຕິວັດແລ້ວ, ບັງເປັນສຽງເອີ້ນ
ເອົາຈ່າບິນພີບານ ໃຫ້ຮີບຮ້ອນ ມາຄຸມຕົວພວກທໍລະບົດ
ກະບົດຊາດ ນີ້ໄປຫາອາວີຈີ, ນັ້ນກໍຄື: ທະຫານສັດຕູ 6 ຄົນ
ຕ້ອງວາຍກອງກັນ ຢ່າງສິນບ້າໜ້າໃນຂະນະນີ້. ສະຫາຍ
ບຸນເພັງ ໄດ້ອຳລາຈາກທຸກສິ່ງທຸກຢ່າງທີ່ສະຫາຍໄດ້ປະ
ສົບພົບພໍ້ ຢ່າງບໍ່ມີວັນຈະກັບຄືນມາ. ແຕ່ດວງວິນຍານ
ແຫ່ງລັດທິວິລະຊົນ ປະຕິວັດຂອງສະຫາຍໄດ້ກາຍເປັນສິ່ງ
ສັກກາລະບູຊາຂອງປວງຊົນລາວທັງຊາດ, ຂອງກອງທັບ
ປົດປ່ອຍປະຊາຊົນລາວ ຜູ້ພິລະອາດຫານ, ເພື່ອຈາລຶກວີ
ລະກຳຂອງສະຫາຍບຸນເພັງ ໃນໂອກາດກອງປະຊຸມໃຫຍ່
ນັກຮົບແຂ່ງຂັນຊຸດທີ 3 ຂອງທົ່ວແຂວງຫລວງພະບາງ
ສູນກາງແນວລາວຮັກຊາດ ໄດ້ຕົກລົງບ້ອງບໍ່ສະຫາຍດ້ວຍ
ການປະດັບຫລຽນໄຊ ອິດສະຫລະຊັ້ນ 1 ໃຫ້ສະຫາຍຢ່າງ
ສົມກຽດ.

ບຸນລົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ພະນັກງານຜູ້ຕິຫລິບຫີບໄດ້

ຈາກ...ໜັງສືພິມສຽງປະຊາຊົນ

ມື້ນັ້ນທ້ອງຟ້າສະຫວ່າງສະໄຫວດີ, ດວງອາທິດ ກໍ ສາດແສງລັດສະໝີຂອງມັນອອກມາຢ່າງເຕັມປ່ຽມ, ຄ້າຍ ກັບວ່າມັນຢາກເຜີຍໂສມໜ້າຂອງມັນອອກມາໃຫ້ເຕັມດວງ ເພື່ອຈະໄດ້ຄຳນັບຮັບຕ້ອນ ບັນດາບຸກຄົນດີເດັ່ນທີ່ ເປັນ ຕົວ ແທນໃຫ້ແກ່ລັດທີວິລະຊົນ ປະຕິວັດໃນບັນດາ ກຳ ລັງ ປະ ກອບອາວຸດທັງ 3 ປະເພດໃນທ່າມກາງບັນຍາກາດທີ່ເປັນ ກຽດປະດັບຫລຽນໄຊປະເພດຕ່າງໆ ໃຫ້ແກ່ບຸກຄົນທີ່ມີສີ ໜ້າເຕັມໄປດ້ວຍຄວາມທະນົງອົງອາດບົນເວທີໃນຄະນະນີ້.

ເວລານັ້ນ ທະຫານ ທິດບຸນທັນ ຫົວໜ້າກອງຫລອນ ຕາແສງ ວັງແບກ, ເມືອງ ໂພນທອງ ແຂວງຫລວງພະ ບາງ ກໍແມ່ນມາລາດວງໜຶ່ງທີ່ພວມເບັ່ງບານ ແລະ ສົດ ໃສ ໃນປ່າດ້າວດົງໜາ ບົນດິນແດນແຫ່ງບ້ານເກີດເມືອງ ນອນຂອງເຂົາເຈົ້າ ທີ່ປະກອບເຂົ້າໃນຈຳນວນດວງດອກໄມ້

ທີ່ຫອມຫວນແຫ່ງລັດທິ ວິລະຊົນປະຕິວັດ ຫລາຍໝື່ນຫລາຍແສນດວງ ທີ່ບານເຮືອໃນທົ່ວປະເທດ.

ເມື່ອເວົ້າເຖິງການເຄື່ອນໄຫວປະຕິບັດໜ້າທີ່ ຕະຫລອດໄລຍະຫລາຍປີຜ່ານມານີ້, ທິດບຸນທັນ ໃນກະສຽນ 37 ຂວບປີນີ້, ກໍເປັນຜູ້ຂະຫຍັນຫັນມັ້ງໃນທຸກວຽກງານບໍ່ແມ່ນປອກ, ເຂົາທັງເປັນພໍ່ເຮືອນ ຜູ້ດຸໝັ່ນຂະຫຍັນພຽນ ແລະກໍທັງເປັນຫົວໜ້າກອງຫລອນຜູ້ອາດຫານ, ຫຸ່ນທ່ຽງແລະມີຄວາມທໍລະຫົດອົດທົນຢ່າງສູງສົ່ງ. ສະນັ້ນບໍ່ວ່າແຕ່ໃນສະພາບການຫຍຸ້ງຍາກໃດ ຫລື ໄດ້ເງື່ອນໄຂແນວໃດ ສະຫາຍ ກໍໄດ້ເປັນຫົວຈັກຫລັກແຫລ່ງຂອງວຽກງານ ນັ້ນສະເໝີ. ບ້ອນແນວນັ້ນເອງ ຄົນທັງຫລາຍ ຈຶ່ງໄດ້ໃສ່ນາມແຝງໃຫ້ສະຫາຍວ່າ: "ຜູ້ວິຫລົບຫົບໄດ້". ສະຫາຍໄດ້ເຝິກຕົນເຂົ້າໃນໜ້າທີ່ວຽກງານຢ່າງມີແບບ ມີແຜນ, ການເຮັດວຽກງານທຸກສິ່ງທຸກຢ່າງ ຕະຫລອດ ເຖິງການດໍາລົງຊີວິດຂອງສະຫາຍປະກົດວ່າ ສະໜິດຕິດພັນ ກັບສິດຜົນປະໂຫຍດລວມ ຂອງຊາດທັງນັ້ນ. ສະຫາຍເຄີຍໄດ້ເວົ້າວ່າ: "ໜ້າທີ່ປົກປັກຮັກສາເຂດປົດປ່ອຍ ແມ່ນໜ້າທີ່ງ ຕົນປະບໍ່ໄດ້, ການປະຕິບັດມະຕິຄໍາສັ່ງ ແມ່ນຕ້ອງເຂັ້ມງວດ ແລະເດັດຂາດ". ດັ່ງນັ້ນ ບໍ່ວ່າເວລາໃດສະຫາຍຈຶ່ງເປັນຜູ້ເຄັ່ງ

ຄັດຕໍ່ຕົນເອງ ຢ່າງບໍ່ມີເວັນມືຄືນ. ມີຫລາຍເທື່ອສະຫາຍ ຕ້ອງຂ້ຽວກ່ຳບ່ຳກືນອອກປະຕິບັດ ໜ້າທີ່ດ້ວຍຄວາມຮັບຜິດ ຊອບຢ່າງເຂັ້ມງວດ ; ຫລາຍເທື່ອສະຫາຍຕ້ອງໄດ້ສູ້ຊົນອົດ ໃຈຫ່າງເຫີນລູກເມຍຂອງຕົນທີ່ພວມເຈັບໄຂ້ໄດ້ພະຍາດຢູ່ ນັ້ນໃຫ້ຊາວບ້ານເບິ່ງແຍງຊ່ວຍ, ສ່ວນສະຫາຍເອງ ຜູ້ຈາກ ໄປ ກໍແມ່ນຕັ້ງອົກຕັ້ງໃຈປະກອບສ່ວນ ປົກປັກຮັກສາ ບ້ານ ຊ່ອງຢ່າງເອົາການເອົາງານ.

ມີເທື່ອໜຶ່ງ ສະຫາຍ ໄດ້ຮັບໜ້າທີ່ ຂຶ້ນປະຈຳຢູ່ ຈຸດ ສູງຕ່າງໆ ໃນຕາແສງຂອງຕົນເຊັ່ນ : ພູຈອມຈັນ ພູຈູງນຸງ, ພູຜາຕ່າງໆ, ບອກນ້ຳມັນ ແລະ ບ່ອນອື່ນໆ ທີ່ເປັນ ຈຸດຍຸດທະ ສາດໃນບໍລິເວນດັ່ງກ່າວ, ເວລານັ້ນ ຟ້າຝົນ ຊົນລະທາໂຮຍ ເມັດຢູ່ບໍ່ຂາດໄລຍະ ເຮັດໃຫ້ຫ້ວຍຮ່ອງ ຄອງບຶງຂອບເຂດ ນັ້ນ ນອງຈົນຫາທາງນບົກໄດ້ຍາກ, ແຕ່ເຂົາພັດຈຳຕ້ອງໄດ້ ອອກເຄື່ອນໄຫວ ຢູ່ເປັນປົກກະຕິ ແລະ ຕ້ອງໄປເຖິງຄູ່ຈອກ ຄູ່ແຈ. ບ້ອນແນວນັ້ນ ເຂົາຈຶ່ງຈຳຕ້ອງໄດ້ຢັ້ງໄດ້ລອຍດ້ວຍ ຄວາມລຳບາກ, ອີກຢ່າງໜຶ່ງນັ້ນ ແມ່ນເຄື່ອງກັນຝົນເຂົາ ພັດບໍ່ພຽງພໍ ດັ່ງນັ້ນ ອຳນາດຂອງທຳມະຊາດ ຈຶ່ງໄດ້ບັງ ຄັບໃຫ້ເຂົາຕ້ອງໄດ້ສູ້ທົນ ກັບ ຄວາມປຽກເປື້ອນໜາວເຢັນ ຈົນຕະຫລອດໄລຍະ, ໃນຕອງກ້ວຍ ທີ່ຂາດສ້ອຍບ້ອນລົມ

ຈອມດອຍ ນັ້ນແຫລະ ສະຫາຍໄດ້ເອົາມາເປັນເສື້ອກັນຝົນ, ເຄື່ອງກິນທັງຈືດ ທັງບູດນັ້ນ ແມ່ນອາຫານທີ່ເຂົາໄດ້ກິນໃຫ້ທຸເລົາຄວາມຫິວ. ແຕ່ຈິດໃຈທີ່ກ້າແກ່ນຂອງສະຫາຍ ບໍ່ໄດ້ປໍ້ທໍ້ ແລະ ບໍ່ຍອມກົ້ມຫົວປູ່ ຕໍ່ໜ້າອຸປະສັກເຫລົ່ານັ້ນ: ບາງເທື່ອເຂົ້າທີ່ເຂົາຖືໄປນຳນັ້ນກໍບັງເຫລືອ ແຕ່ບໍ່ພໍທໍ່ໃດ, ສະຫາຍກໍໄດ້ຈິ່ງໄວ້ປ່ອນໄວ້ໃຫ້ອ້າຍນ້ອງກິນ. ສ່ວນຕົນເອງນັ້ນໄດ້ອົດທົນເອົາ. ສະຫາຍທິດບຸນທັນ ເປັນຜູ້ເປັນຫ່ວງໃຍນຳທຸກການເຄື່ອນໄຫວຂອງອ້າຍນ້ອງ, ສະຫາຍເອົາໃຈໃສ່ໄກ້ຊິດສະໜິດສະໜົມຊຸກຍູ້ການອອກແຮງ ເພີ້ມພູນຜະລິດຜົນ, ການຮ່ຳຮຽນເບິ່ງແຍງການເຈັບໄຂ້ໄດ້ປ່ວຍ, ເອົາໃຈໃສ່ສຶກສາອົບຮົມໃຫ້ອ້າຍນ້ອງເປັນປົກກະຕິ ສະຫາຍ ທິດບຸນທັນ ທັງເປັນຜູ້ບໍລິຫານ ແລະ ທັງເປັນຜູ້ນຳພາວຽກງານຢ່າງທົ່ວເຖິງ, ເປັນຕົ້ນ: ການແບ່ງປັນແຮງງານ ໃນໜ່ວຍເພີ້ມພູນ, ການຊັບຊ້ອນຊາວໜຸ່ມເຄື່ອນໄຫວປົກປັກຮັກສາບ້ານຊ່ອງ ແລະ ການເບິ່ງແຍງ ຊ່ວຍເຫລືອຊຶ່ງກັນແລະກັນ, ກໍລ້ວນແຕ່ໄດ້ແກ້ໄຂດ້ວຍວິທີການທີ່ຄ່ອງແຄ້ວແນບນຽນ, ນອກນັ້ນ, ສະຫາຍເອງຍັງໄດ້ເປັນຕົວຕັ້ງຕົວຕີໃນການຊ່ວຍເຫລືອປະຊາຊົນ ຊົນຊາດລາວເທິງ ທີ່ປ່ຽນຈາກການເຮັດໄຮ່ ລົງມາເຮັດນາຕາມທິດທາງ ທີ່ສູນກາງ

ວາງອອກ.

ເພື່ອສະແດງເຖິງຄວາມຊາບຊຶ້ງ ຢ່າງເລິກເຊິ່ງຕໍ່ທິດ ທາງການຜະລິດຜົນ ຂອງສູນກາງ ແລະ ຄວາມຫ່ວງໃຍ ເຖິງຊາຕາກຳເພື່ອນຮ່ວມຊາດ, ສະຫາຍ ໄດ້ລະດົມອ້າຍ ນ້ອງກອງຫລອນໄປຂຸດເໝືອງແປງຝາຍ ແລະ ແປງທາງ ຊ່ວຍພີ່ນ້ອງເຫລົ່ານັ້ນຢ່າງເປັນຂະບວນດີ. ບ່ອນປະຊາຊົນ ຊົນຊາດລາວເທິງບໍ່ຊິນເຄີຍໃນການເຮັດນາ, ດັ່ງນັ້ນ ອຸປະ ກອນການເພີ່ມພູນຂອງເຂົາເຈົ້າ ຈຶ່ງມີຫລາຍອັນຂາດເຂີນ.

ດ້ວຍຄວາມເອື້ອເຟື້ອເກື້ອກູນ ຂອງເພື່ອນຮ່ວມຊາດ ສະ ຫາຍໄດ້ລົງໄປຈຳນຳເຮັດທຸກສິ່ງທຸກຢ່າງ, ແນະນຳວິທີ ດາດໄຮ່ ໄຖນາໃຫ້ເຂົາເຈົ້າ, ບາງເທື່ອ ສະຫາຍຕ້ອງໄດ້ນາ ເອົາເຄື່ອງມືຮັບໃຊ້ເຮັດນາທັງໝົດທີ່ ມີ ໃນເຮືອນຂອງຕົນໄປ ໃຊ້ ຈົນກະທັ້ງຮອດຄວາຍແກ່ໄຖຂອງຕົນທຸກມື້ ກໍ່ເອົາໄປ ໃຫ້ເຂົາຢືມຈົນສຳເລັດບັ້ນການປ່ຽນອາຊີບຂອງເຂົາເຈົ້າ.

ນອກຈາກຄວາມເອົາໃຈໃສ່ວຽກງານທົ່ວໄປແລ້ວ, ພິ ເສດແມ່ນສະຫາຍ ໄດ້ເອົາໃຈໃສ່ວຽກງານກໍ່ສ້າງທະຫານ ລາວກອງຫລອນ ໃນທ້ອງຖິ່ນຂອງຕົນ ໃຫ້ເປັນຕາໜ່າງ ແໜ້ນໜາ, ລົງເລິກວຽກງານ, ລຶບລ້າງຄວາມບໍ່ຮູ້ໜັງສື, ສ້າງໜ່ວຍກອງຫລອນເຄື່ອນທີ່, ອອກແຮງສ້າງບ້ານແປງ

ປ່າງ ປ່າງວັ້ງໜ້າ. ເປີດບັ້ນອົບຣົມກາບເມືອງ, ການທະຫານ ລະດັບປະຊາຊົນໄປລຳລຽງອົບສົ່ງ ຮັບໃຊ້ແນວໜ້າ ແລະ ອື່ນໆ ເຮັດ ໃຫ້ ທຸກ ຄົນ ຊາບ ຊຶ້ງ ໜ້າ ທີ່ ແນວ ຫລັງ, ພ້ອມນັ້ນ ສະຫາບບັ້ງເປັນພະນັກງານ ອົບຂວາບ ແລະ ເຮັດວຽກພື້ນຖານເກົ່າ, ດັ່ງນັ້ນ ບໍ່ວ່າແຕ່ການລະດົມເຂົ້າຊ່ວບຊາດ, ຫລື ລະດົມວຽກງານອື່ນໆ ສະຫາບ ກໍໄດ້ເປັນຜູ້ຢູ່ແຖວໜ້າສະເໝີ.

ດັ່ງນັ້ນ ໃນຫລາຍປີຜ່ານມານີ້ ສະຫາບ ຈຶ່ງໄດ້ຮັບແຕ່ການສັນລະເສີນຈາກມວນຊົນເປັນປ່າງດີ, ຈາກນັ້ນເພື່ອຕອບສະໜອງກັບຄຸນງານຄວາມດີຂອງສະຫາບ ໃນກອງປະຊຸມໃຫຍ່ນັກຮົບແຂ່ງຂັນສະຫາບ ຈຶ່ງໄດ້ຮັບການບ້ອງບໍ່ສັນລະເສີນຈາກສູນກາງ ດ້ວບການປະດັບຫລຽນໄຊ ອິດສະຫລະຊັ້ນ 2 ປ່າງສົມກຽດ.

ໝົດ

ບຸນລົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ສູ້ຊີບກັບຄວາມລຳບາກ

ເລົ່າໂດຍ : ແກ້ວ ທລອງເສນາ.

ບັນທຶກ : ນາງ ບົວລຽນ

* ບ້ານຂຽດໂງ້ງ ແມ່ນບ້ານໜຶ່ງ ທີ່ຕັ້ງຢູ່ແຄມບຶງຫະອງລັກ ທີ່ເປັນບຶງໃຫຍ່ສົມຄວນ ໃນຂອບເຂດບຶງ ພາຍໃນແຂວງຈຳປາສັກ, ໃນທ້າຍປີ 1948 ຕົ້ນຕໍ່ປີ 1949 ເພື່ອຫວັງແຊກຄຸມລາວ, ປະຕິບັດ ເຈດຈຳນົງ ເອົາລາວເປັນເມືອງຂຶ້ນຂອງພວກມັນອີກຄັ້ງໃໝ່ ຈັກກະພັດປະລັ່ງໄດ້ກະໂດດເຂົ້າມາລາວເປັນຄັ້ງທີ 2. ເພື່ອການຊົງຕົວຢູ່ ແລະບັນລຸຈຸດປະສົງຂອງພວກມັນ, ພວກມັນໄດ້ກໍ່ສ້າງປົດຄ້າຍທີ່ແໜ້ນໜາຢູ່ໃນບ້ານພະໂພ ແລະ ແຫ່ງອື່ນໆ ໃນພາກໃຕ້ຂອງລາວ, ທັງນີ້ກໍເພື່ອຫວັງຄອບຄຸມບໍລິເວນ ບຶງພະໂພ ບຸດທະສາດ ແລະ ແຫ່ງສຳຄັນອື່ນໆ.

ຕໍ່ໜ້າໄພພິບັດທີ່ເລີ່ມອຸບັດຂຶ້ນຄັ້ງໃໝ່ນີ້,ມັນໄດ້ກາຍເປັນເຄາະຮ້າຍທີ່ ແສນຝາດ ແສນຮືນສຳຫລັບຄົນລາວເຮົາທຸກ

ຄົນ. ແຕ່ເຫດການ ທີ່ບໍ່ເພິ່ງປາຖະໜາດັ່ງກ່າວ ນັ້ນພັດແມ່ນ ເປົ້າໝາຍແຫ່ງເຈດຈຳນົງຂອງພວກປຸ້ນຊາດ. ດັ່ງນັ້ນ, ມັນຈຶ່ງເປັນທຳມະດາຢູ່ວ່າ ຈຸດມຸ່ງໝາຍ ແລະ ອຸດົມຄະຕິຂອງຄົນລາວຈຳພວກຄື: ຜູ້ທີ່ຖືກກົດຂີ່ ຂູດຣີດ ແລະ ຜູ້ຂູດຣີດຜູ້ອື່ນເປັນອາຊີບນັ້ນ ບ່ອນບໍ່ມີວັນຈະໄລ່ງລອບກັນໄດ້. ຈາກຂໍ້ຂັດແຍ່ງອັນເປັນພື້ນຖານນີ້ເອງ, ບັນຫາຕ່າງໆ ຈຶ່ງໄດ້ມີຂຶ້ນ ແລະ ພັນແປໄປຢ່າງໃຫຍ່ໂຕ, ສັບສົນ, ແລະ ດຸເດືອດ. ແຕ່ແລ້ວສິ່ງເຫລົ່ານີ້ ກໍ່ບັງຕ້ອງແມ່ນຕົກເປັນພາລະອັນໜັກໜ່ວງຂອງຄົນລາວເຮົາທຸກຄົນ ທີ່ຕ້ອງເປັນຜູ້ສູ້ຊົນ, ເປັນຜູ້ຜ່ານຜ່າ ແລະ ເປັນຜູ້ຜາບແພ້ມານຮ້າຍທີ່ຫວັງກືນກິນຊາດຂອງພວກເຮົາ.

ພາຍຫລັງພວກຈັກກະພັດຝະລັ່ງ ໄດ້ເຂົ້າມາຕັ້ງຫລັກປັກຖານໃນດິນແດນແຫ່ງນີ້ແລ້ວ, ປະຊາຊົນຂົງເຂດນີ້ກໍ່ໄດ້ກາຍເປັນສຸນທາລຸນຂອງພວກເຂົາ, ພວກເຂົາບຸທ່າງບີບບີ້, ຂົ່ມຂູ່, ຂູ້ນຕີຢ່າງໂຫດຮ້າຍປ່າເຖື່ອນເຊັ່ນ : ການກົດຂີ່ເກນກຸລີເປັນຕົ້ນ ຊຶ່ງແມ່ນການບັງຄັບຈັບກຸມເອົາປະຊາຊົນໄປສ້າງທີ່ຕັ້ງຕ່າງໆ ເພື່ອປ້ອງກັນສິດຜົນປະໂຫຍດ ຂອງພວກມັນ ຈາກສິ່ງທີ່ໄດ້ປະສົບພົບພໍ້ບັນດາເຫດການທີ່ຂົມຂື່ນ ເຫລືອວິໃສ ແລະ ອົດບໍ່ລົມທົນບໍ່ໄດ້ຕໍ່ການຂົ່ມເຫັງເຕັງ

ເດັກຂອງຈັກກະພັດຕ່າງດ້າວ. ປະຊາຊົນເຮົາໃນບໍລິເວນດັ່ງກ່າວ, ໂດຍຢູ່ໃຕ້ການນຳພາ ຂອງໜ່ວຍໂຄສະນາປະກອບອາວຸດ·ກອງທັບລາວອິດສະຫລະໃນຄາວນັ້ນ ຊຶ່ງແມ່ນທ່ານ ແກ້ວ ຫລວງເສນາ ເປັນຜູ້ບັງຄັບ ບັນຊາ ໃນເຂດແຄວ້ນນີ້ ກໍໄດ້ນຳພາປະຊາຊົນ ສົມທົບກັບບັນດາໜ່ວຍກຳລັງປະກອບອາວຸດອື່ນໆ ຕັ້ງໜ້າເຄື່ອນໄຫວ ບຸກໂຈມຕີສັດຕູ, ຫລອກສັດຕູ ແລະ ດັບສູນສັດຕູ ຢ່າງຄ່ອງແຄ້ວ ແນບນຽນທີ່ສຸດ.

ເມື່ອຫວນຄືນເຖິງ ຄວາມ ເປັນ ໄປ ໃນ ຍາມ ນັ້ນ ແລ້ວເໝືອນກັບທຸກສິ່ງທຸກຢ່າງໄດ້ພະຍາຍາມ ທົດສອບນານະຈິດປະຕິວັດຂອງເຂົາ ເຈົ້າຢ່າງເຕັມທີ່, ຄວາມຫຍຸ້ງຍາກຮ້ອຍແປດ ພັນປະການ ໄດ້ພັດປ່ຽນກັນສ້າງຄວາມລຳບາກແກ່ເຂົາເຈົ້າຢ່າງເນື່ອງນິດລຽນຕິດ. ຄາວນັ້ນການເປັນຢູ່ນຸ່ງຖືຂາດເຂີນ, ແຕ່ຊ້ຳພັດວ້ອງປະເຊີນໜ້າກັບສັດຕູໂຕໂຫດຫ້ຽມ, ປ່າເຖື່ອນ ແລະ ມີທີ່ກຳລັງອັນແໜ້ນໜາ: ຍ້ອນຄວາມບໍ່ກ້ຳເກິ່ງກັນ ທາງດ້ານປະລິມານ ແລະ ຄຸນນະພາບນັ້ນເອງ: ການດຳເນີນການສູ້ຮົບ ລະຫວ່າງເຮົາກັບສັດຕູຈຶ່ງຈຳຕ້ອງໄດ້ສູ້ຮົບກັນຢ່າງດຸເດືອດ ບົນເສັ້ນທາງ ລະອຽດລະອ້ຽວແລະ ຫວົລ້ຽວຫົວຕໍ່.

ເພື່ອເຮັດ ສຳເລັດ ໜ້າທີ່ ຕາມຄາດໝາຍຕ່າງໆ ດັ່ງກ່າວ, ພະນັກງານ, ນັກຮົບໃນໜ່ວຍປະຕິບັດງານ ຈຶ່ງໄດ້ໝູນໃຊ້ຫົວຄິດປະດິດສ້າງຕ່າງໆ ຫລອກສັດຕູ ແລະ ເຄື່ອນໄຫວບຸກໂຈມຕີສັດຕູ ຢ່າງຂະຫຍັນຂັນແຂງ ໂດຍປະຕິບັດຕາມແຜນການເອົານ້ອຍຊະນະຫລາຍ, ເອົາພິກໄຫວອັນສະຫລາດຄ່ອງແຄ້ວ ຊະນະກຳລັງພົນ ແລະ ອາວຸດທີ່ທັນສະໄໝຂອງສັດຕູ ເຂົາເຈົ້າໄດ້ຈັດຕັ້ງກັບເຄື່ອນໄຫວຫລອກສັດຕູດ້ວຍຮູບການຕ່າງໆ. ຢືນຕໍ່ໜ້າຄວາມດຸເດືອດ ກັບດານ ຄວາມລຳບາກຍາກເຂັນດັ່ງກ່າວ: ເຮັດແນວໃດ ຈຶ່ງຈະສາມາດເອົາຊະນະສັດຕູໄດ້ ? ບັນຫາທີ່ຖືກຕັ້ງຂຶ້ນນັ້ນແມ່ນຂອດເອົາເປັນເອົາຕາຍ ລະຫວ່າງເຮົາ ກັບພວກໂຈນລ່າອານາ ນິຄົມ. ແຕ່ແລ້ວຄາວນັ້ນ ພວກເຮົາບໍ່ສະເພາະແຕ່ບໍ່ມີພາຫະນະ ແລະ ອຸປະກອນ ດ້ານສົງຄາມ ຮຸກຮານຂອງຕ່າງຊາດທີ່ນັ້ນ, ພວກເຮົາຍັງບໍ່ມີທຸກສິ່ງທຸກຢ່າງອີກໝາຍຄວາມວ່າ ພວກເຮົາ ບໍ່ມີປັດໃຈສຳຄັນຫຍັງເລີຍ ທີ່ພໍເປັນເງື່ອນໄຂສະດວກໃນການເຮັດສຳເລັດໜ້າທີ່, ດ້ວຍເຫດນີ້ເອງ ບັນດາຂໍ້ຫຍຸ້ງຍາກທີ່ພະນັກງານ, ນັກຮົບເຮົາໄດ້ປະເຊີນຢູ່ນັ້ນ ກໍ່ຍິ່ງເພີ່ມທະວີຄວາມຝືດເຄືອງ ເຂົາເຈົ້າທັງຕັ້ງໜ້າເຄື່ອນໄຫວຕີສັດຕູ, ທັງຕັ້ງໜ້າປຸກລະດົມ ຂົນ

ຂວາຍກໍ່ສ້າງຮາກຖານປະຕິວັດ ໃນໝູ່ປະຊາຊົນ ແລະ ອີກດ້ານໜຶ່ງຍັງຕ້ອງແບກຫາບພາລະວຽກໄຮ່ ການນາ ເພື່ອຫາລ້ຽງກຸ້ມຕົນເອງ ແລະ ວຽກອື່ນໆ ອີກຢ່າງ ສົນລະວົນ. ແຕ່ດ້ວຍຄວາມເອົາໃຈໃສ່ໃນໜ້າທີ່, ໂດຍໄດ້ຮັບຄວາມຮັກແພງ ເຊື່ອຖື ແລະ ສະໜັບສະໜູນຈາກມວນຊົນ, ປະຊາຊົນ ໃນຂອບເຂດດັ່ງກ່າວ ຈຶ່ງໄດ້ຕື້ນຕົວສະໝັກໃຈປະຢັດເຂົ້າກິນຂອງໂຕເອງ ນໍ້ລະກອບ, ນໍ້ລະກຳ ເພື່ອຊ່ວຍເຫຼືອກອງທັບ ປະກອບສ່ວນອຸທິດເຫື່ອແຮງ ອັນນ້ອຍໆຂອງຕົນເພື່ອພາລະກິດ ປົດປ່ອຍຊາດ. ຈາກຄວາມ ຫ້າວຫັນ ຕະລຸມບອນໃນການອຸ້ມຊູ ຊ່ວຍເຫລືອ ກຳລັງ ປະກອບ ອາວຸດເຮົາໃນທ້ອງຖິ່ນດັ່ງກ່າວ, ມັນໄດ້ກາຍເປັນກຳລັງແຮງ ອັນມະຫາສານ ຊຸກຍູ້ການຄືບໜ້າ ຂອງໜ່ວຍປະຕິບັດ ງານດັ່ງກ່າວໃຫ້ນັບມື້ນັບກ້າວໜ້າ ແລະ ເຕີບໃຫຍ່ເຂັ້ມແຂງ.

ພາຍຫລັງສັດຕູ ຖືກກຳລັງ ປະກອບອາວຸດ ແລະ ປະຊາຊົນເຮົາສັ່ງສອນພວກມັນຢ່າງສະສົມແລ້ວ, ເພື່ອຫວັງປົກປ້ອງ ສິດຜົນປະໂຫຍດຂອງພວກມັນໄວ້ ໃນປະເທດເຮົາຢ່າງດົນນານ ພວກ ຈັກກະພັດ ຝະລັ່ງ ໄດ້ຂຸ້ນຂ້ຽວ ຈັດສົ່ງກອງທະຫານ ອາສາສົ່ງນອກ ຂອງພວກເຂົາ 1 ກອງຮ້ອຍທີ່ມີນາມວ່າ: ກອງທະຫານ "ກົງຊອນແນ" ເຂົ້າມາພາກ

ລາວໄດ້ໂດຍຫວັງບຽດບຶດເອົາ ດິນແດນບຶງ ພະໂພຄົນ. ແຕ່ດ້ວຍຄວາມອະທຳ ບໍ່ສາມາດເອົາຊະນະສິນທຳ ຄືນ້ຳໃຈສູ້ຣົບ ເພື່ອລ່າອານານິຄົມ ຂອງທະຫານລ່າເມືອງຂຶ້ນທີ່ບໍ່ທ້ອນເອົາຊະນະຈິດໃຈຮັກເຊື້ອແພງຊາດຫວງແຫນບ້ານເກີດເມືອງນອນຂອງກຳລັງປະກອບອາວຸດ ແລະ ປະຊາຊົນເຮົາຜູ້ທີ່ມີຄວາມຮັກຊາດອັນສູງສົ່ງນັ້ນໄດ້. ດັ່ງນັ້ນ, ພໍແຕ່ກອງທະຫານ ອາສາສົງນອກ ຂອງ ຈັກກະພັດຝະລັ່ງ ໄດ້ຢ່າງວີນເຂົ້າມາບໍລິເວນດັ່ງກ່າວ ກໍ່ໄດ້ຖືກກອງທັບແລະປະຊາຊົນເຮົາລົງໂທດພວກມັນຢ່າງ ສົມນ້ຳໜ້າ ຈັບເປັນສະເລີຍ 25 ຄົນ, ນອກນັ້ນຖືກດັບສູນກ້ຽງ ຈາກນັ້ນບຶງໜອງລັກ ທີ່ສວຍງາມ ຈຶ່ງໄດ້ກາຍເປັນບ່ອນມ້ຽນສັງຂານທີ່ໜ້າຢ້ານກົວທີ່ສຸດສຳລັບສັດຕູ.

ບ້ານຂຽດໂງ້ງທີ່ ແສນຮັກ ຈຶ່ງໄດ້ກາຍເປັນ ສັນຍາລັກຂອງບັ້ນຮົບປະຫວັດສາດບັ້ນຮົບຂຽດໂງ້ງທີ່ລືຊື່ໄດ້ຮັບນາມມະຍົດເປັນບັ້ນໄຊຊະນະ ທີ່ໃຫຍ່ໂຕຄັ້ງປະຖົມມະລຶກ ແລະ ມີຄວາມໝາຍທາງປະຫວັດສາດໃນການດັບສູນຈັກກະພັດຝະລັ່ງຜູ້ຮຸກຮານ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ຕາຍດີກ່ວາໄຂຄວາມລັບ

ອຸທິນ ບຸນຍາວົງ

(ເລື່ອງຂອງນາງ ເດມ ບ້ານປາກແຊ ເມືອງຂວາ ແຂວງຜົ້ງສາລີ)

ແມ່ຍິງຄົນນັ້ນຖືກຝັງເຄິ່ງໂຕມືສອງເບື້ອງຖືກມັດໄຂ່ວຫລັງໄວ້. ໃຜກໍຕາມທີ່ມີມະໂນທຳເຫັນພາບແນວນີ້ແລ້ວຈະຕ້ອງຮູ້ສຶກອະນາດໃຈເປັນລົ້ນເຫລືອ ແລະຖ້າຫາກຮູ້ຕື່ມອີກວ່ານາງພວມຖືພາ 7 ເດືອນ ຄວາມຮູ້ສຶກທີ່ມີຕໍ່ນາງຄົງຈະບໍ່ສາມາດພັນລະນາອອກມາເປັນຕົວອັກສອນໄດ້.

ແມ່ຍິງທີ່ປະສົບເຄາະຮ້າຍລາຍນີ້ແມ່ນນາງເດນ.

ຊາວບ້ານປາກແຊທີ່ໄດ້ຮູ້ເຫັນເປັນພິຍານໃນການທໍລະມານມະນຸດຕາວ່າງ ໂດຍນ້ຳມືຂອງພວກຂາຍຊາດ ຕ່າງກໍນຶກຍົກຍ້ອງຊົມເຊີຍນ້ຳໃຈເດັດດ່ຽວ ຂອງນາງເດນທີ່ບໍ່ຍອມໄຂຄວາມລັບໃດໆ ແລະ ເຂົາເຈົ້າສຸມຄວາມຄຽດແຄ້ນທັງໝົດໃສ່ພວກໂຈນຂາຍຊາດກຸ່ມນັ້ນ ທີ່ບໍ່ມີມະນຸດສະທຳປະຈຳໃຈເລີຍ.

ບໍ່ສະເພາະ ແຕ່ນາງເຄນຜູ້ດຽວທໍ່ນັ້ນ ປະຊາຊົນໝົດບ້ານປາກແພຊຶ່ງຂຶ້ນກັບເມືອງຂວາ ແຂວງຜົ້ງສາລີກໍ່ຖືກຂູ່ເຂັນຕ່າງໆ ນາໆ ເພື່ອໃຫ້ບອກບ່ອນລີ້ບ່ອນເຊື່ອງ ບອກຊື່ພວກປະເທດລາວທີ່ເຄື່ອນໄຫວຢູ່ອ້ອມແອ້ມບ້ານປາກແພ ແຕ່ເຖິງຈະຖືກ ກຳຣາບປາບຂູ່ປານໃດກໍຕາມ ຊາວບ້ານກໍບໍ່ຍອມບອກໃຫ້ພວກມັນ.

" ບໍ່ມີ ບໍ່ຮູ້! " ນີ້ເປັນຄຳຕອບຂອງນາງເຄນ ແລະ ຊາວບ້ານທັງໝົດ.

" ຖ້າຕອບວ່າບໍ່ມີ ບໍ່ຮູ້ກໍຕ້ອງຝັງຈັ່ງຊີ້ກໍ່ໄປ " ຫົວໜ້າໂຈນຂາຍຊາດວ່າ.

" ເຊີນລະບໍ, ເຖິງຊິຝັງ ຫລື ບໍ່ຝັງ ກໍບໍ່ມີອັນບອກ. ຊິດົນໝົດໂຕນີ້ກໍບໍ່ມີອັນບອກຄືເກົ່າ " ນາງເຄນວ່າ.

" ປົວະ ! " ຫົວໜ້າທະຫານຫຸ່ນ ໃຈຮ້າຍວໍ້ ແລ້ວຕົບໜ້ານາງໝົດແຮງ " ມຶງຢ່າປາກແຂງຫລາຍເນີ, ຊິບອກລະບອກມາ ຖ້າບໍ່ດັ່ງນັ້ນ ຊິເອົາມີດເຈາະທ້ອງແລ້ວຝັງກັບໜີ້ ! "

" ເຊີນເລີຍ ! ຖ້າສູກ້າພໍ, ຖ້າຈິດໃຈສູຕ່ຳຊ້າຂ້າປະຊາຊົນໄດ້ໂດຍບໍ່ລັງເລມືກໍ່ະຊື້ນ " ຄຳເວົ້າຂອງນາງເຮັດໃຫ້ເຂົາຊຶງໄປຂະນະໜຶ່ງ.

"ຜູ້ໃດເປັນໃຈໃຫ້ສັດຕູກໍ່ຕ້ອງຂ້າຖີ້ມຂ້າໝົດໂຄດພຸ້ນ?" ທະຫານຍຸ່ນອີກຜູ້ໜຶ່ງວ່າ.

ນາງເຮັດເສີຍໆຄືດັ່ງບໍ່ໄດ້ຍິນ, ຫົວໃຈຂອງນາງຍັງເຂັ້ມແຂງຫຸ່ນທ່ຽງບໍ່ຫວັ່ນໄຫວຕໍ່ຄຳເວົ້ານາບຂູ່ໃດໆ ນາງຄິດຫ່ວງປະຊາຊົນ ເພາະຢ້ານເຂົາໄດ້ຮັບອັນຕະລາຍເຖິງແກ່ຊີວິດໂດຍນ້ຳມືຂອງທະຫານຍຸ່ນ. ຊາວບ້ານປາກແພມີການຈັດຕັ້ງກັບເປັນຢ່າງດີ ມີສະມາຄົມແມ່ຍິງ. ມີກອງຫລອນໂດຍການຈັດຕັ້ງ ແລະ ປັບປຸງຂອງນາງເອງ ນອກນັ້ນນາງຍັງຂົນຂວາຍເອົາຊາວໜຸ່ມໄປເປັນທະຫານຕໍ່ຕ້ານຈັກກະພັດອາເມລິກາຜູ້ຮຸກຮານ ພາລະກິດຂອງນາງນັບວ່າເປັນສ່ວນປະກອບອັນສຳຄັນ ໃຫ້ແກ່ການປະຕິວັດປົດປ່ອຍຊາດ. ໃນການເຮັດວຽກດັ່ງກ່າວນີ້ ນາງຖືກຈັບສອງເທື່ອ. ເທື່ອນີ້ເປັນເທື່ອທີສາມ.

ການຂູ່ເຂັນເອົາຄວາມລັບຈາກນາງ ຢຸດໄປຊົ່ວຂະນະໜຶ່ງ. ທະຫານຍຸ່ນໄດ້ປຶກສາຫາລືກັນ ເຖິງແຜນການຕໍ່ຊ້າຂອງພວກເຂົາ, ບໍ່ດົນຕໍ່ມາເຂົາກໍ່ປະກົດຕົວຕໍ່ໜ້ານາງອີກ.

"ຖ້າບໍ່ຍອມບອກ ກໍຈຳເປັນ.... ມຶງມີຫຍັງສັ່ງໃຫ້ບອກມາ" ທະຫານຍຸ່ນຄົນໜຶ່ງວ່າ

"ບໍ່ມີອັນບອກ ບໍ່ມີອັນສັ່ງ ປາກເຮົາຫຍັງກໍ່ເຊີນ!".

ເມື່ອສຸດປະໂຫຍກຂອງນາງ ທາດແທ້ຂອງທະຫານຫຸ່ນກໍ່ສະແດງອອກມາໃຫ້ເຫັນຄວາມໂຫດຮ້າຍ ປ່າເຖື່ອນສຸດທີ່ຈະພັນລະນາ. ເຂົາໃຊ້ມີດແຫລມຄົມແຫງທ້ອງ ແລ່ເນື້ອເຖືອໜັງຂອງນາງ ແລ້ວຄວັກລູກໃນທ້ອງອອກມາໃຫ້ເຫັນຕໍ່ໜ້າຕໍ່ຕາ. ນາງສຸດທີ່ຈະເຈັບປວດທໍລະມານ ແຕ່ກໍບັງໃຈແຂງພຽງພໍ່ຈຶ່ງຮ້ອງໃສ່ໜ້າເຂົາວ່າ :

" ສູຄົນຂາຍຊາດ ຂາຍປະຊາຊົນ ! ເຈາະເອົາລູກກູອອກເຮັດຫຍັງ ສູປາກກິນກໍ່ກິນທະແມ້ ! ສູຂົ່ມເຫັງໄດ້ແຕ່ແມ່ຍິງກັບປະຊາຊົນທີ່ບໍ່ມີອາວຸດຫັ້ນແຫລະ ບ້າໜ້າຄົນປະລາໄຊສູກໍ່ຈະປະລາໄຊຕະຫລອດໄປ "

ຕໍ່ປະຊາຊົນ ທີ່ຖືກເກນມາໃຫ້ເບິ່ງຕົວຢ່າງຄວາມໂຫດຮ້າຍທາລຸນ ເພື່ອວ່າໃຫ້ເຂົາເຈົ້າຢ້ານແລ້ວໄຂຄວາມລັບ, ນາງເຄີຍໄດ້ເວົ້າວ່າ :

"ພໍ່ແມ່ອ້າຍເອື້ອຍນ້ອງຢ່າເສຍກໍາລັງໃຈ, ຈົ່ງເຊື່ອໝັ້ນການນໍາພາຂອງສູນກາງ, ໃຜຍັງມີຊີວິດໃຫ້ສືບຕໍ່ເຮັດການປະຕິວັດ ສືບຕໍ່ຕີສັດຕູຂອງຊາດຕໍ່ໄປ, ໄຊຊະນະຕ້ອງເປັນຂອງເຮົາ. "

ຕໍ່ຈາກນັ້ນນາງກໍ່ຮ້ອງຄໍາຂວັນວ່າ :

" ກາລ ະເຕີວັດຈົ່ງມີໄຊ! ທ່ານສຸພານຸວົງຈົ່ງໝັ້ນຍືນ ! ໝັ້ນຍືນ !.... "

ສຽງຂອງນາງໄດ້ຄ່ອຍລົງຄ່ອຍລົງ ແລະໃນທີ່ສຸດກໍງຽບສະຫງົບ, ຄົງມີແຕ່ສຽງຂອງພວກທະຫານຫຸ່ນຮ້ອງປ່າວໄຄສະນາຕໍ່ໜ້າປະຊາຊົນ ທີ່ມາເຕົ້າໂຮມກັນເປັນສັກຂີພະຍານໃນເຫດການອັນປ່າເຖື່ອນຄັ້ງນີ້.

ປະຊາຊົນຖືກຂູ່ເຂັນໃຫ້ໄຂຄວາມລັບອີກແຕ່ບໍ່ມີຜູ້ໃດໄຂອອກມາແມ່ນແຕ່ຄວາມດຽວ. ຄົງມີແຕ່ວ່າ: ບໍ່ຮູ້ຈັກ.

ບ້ານນີ້ບໍ່ມີໃຜເປັນອິດສະຫລະຈັກຄົນຊິຂ້າກໍ່ວາຍລ້າງ.

ປະຊາຊົນບ້ານນີ້ ເປັນໃຈດຽວກັນກໍບໍ່ຍອມໄຂຄວາມລັບໃຫ້ສັດຕູຂອງຊາດເດັດຂາດ ເປັນຫຍັງກໍ່ເປັນກັນ. ນີ້ຕໍ່ມາປະຊາຊົນໝົດບ້ານທັງເດັກນ້ອຍ ແລະຜູ້ໃຫຍ່ປະມານ 40 ຄົນຖືກຕ້ອນໄປໂຮມຢູ່ແຄມນ້ຳຖືກຂູ່ເຂັນອີກແຕ່ກໍບໍ່ເປັນຜົນ, ດັ່ງນີ້ສັດຕູ ຈຶ່ງໃຊ້ປືນຍິງກວາດໃສ່ລົ້ມລະຍ ລະນາດແລ້ວເອົາຖິ້ມລົງນ້ຳໄຫລໄປ.

ໃສຍາດວະກຳຄັ້ງນັ້ນທີ່ບ້ານປາກແຍ ມີຜູ້ລອດຊີວິດມາໄດ້ຫ້າຫົກຄົນ. ທີ່ລອດມາໄດ້ກໍຍ້ອນຕີເຮັດວ່າຕາຍໂດຍມີເລືອດຂອງຄົນອື່ນຕິດເປື້ອນຕາມສົ້ງເສື້ອ ແລ້ວກໍຖືກ ແກ່ລົງນ້ຳໄຫລລ່ອງໄປ. ພໍໄປໄດ້ໄກກໍລອຍເຂົ້າຝັ່ງ ໂດຍ ຕະ

ຫລອດປອດໄຟ.

ທີ່ຜົ້ງສາລີ ໃຜຄຶດເຫັນບ້ານປາກແພກໍ່ຄຶດເຫັນນາງເຄນ ແລະ ຄຶດຍົກຍ້ອງຊົມເຊີຍນ້ຳໃຈເດັດດ່ຽວຂອງ ນາງທີ່ຍອມຕາຍດີກ່ວາໄຂຄວາມລັບ.

ສຸດ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ຕາຍຢ່າງມີກຽດ

ອຸທິນ ບຸນຍາວົງ

(ເລື່ອງຂອງ ເບນຊອງ ເມືອງລອງແຂວງຫລວງນ້ຳທາ).

ໃນຫົວໃຈຂອງປະຊາຊົນເມືອງລອງແຂວງຫລວງນ້ຳທານັ້ນ ສະຫາຍ ເບນ ຊອງ ບໍ່ໄດ້ລື້ມຫາຍຕາຍຈາກເຂົາເຈົ້າເລີຍ ເຖິງວ່າໃນຄວາມເປັນຈິງນັ້ນສະຫາຍໄດ້ເສຍສະຫລະຊີວິດໄປແລ້ວແຕ່ປີ 1969 ເປັນການເສຍສະຫລະທີ່ສະແດງເຖິງທາດແທ້ຂອງນັກປະຕິວັດ ຊຶ່ງ ບານ ໃດ ກໍ່ພ້ອມປູ່ສະເໝີທີ່ຈະຕາຍເພື່ອປະຊາຊົນເພື່ອປະເທດຊາດ.

ປະຊາຊົນເມືອງລອງ ແລະ ເຂດອ້ອມແອ້ມລະນຶກເຖິງສະຫາຍເບນຊອງ ດ້ວຍຄວາມອາໄລອາວອນ ຄຶດຮອດຄຶດເຖິງປູ່ສະເໝີ ແລະ ຮູ້ສຶກຕື້ນຕັນໃຈໃນຄຸນຄວາມດີ ທີ່ສະຫາຍໄດ້ສ້າງໄວ້, ອັນນີ້ເປັນມູນເຊື້ອອັນປະເສີດຂອງປະຊາ

ຊົນລາວທົ່ວໄປ ເວົ້າສະເພາະຂອງຊົນຊາດລາວສູງກໍ່ ອັນ
ເປັນຕົ້ນກຳເນີດຂອງສະຫາຍເອງ.

ເວົ້າເຖິງປະຊາຊົນເມືອງລອງ ທີ່ປະກອບດ້ວຍຫລາຍ ຊົນຊາດຊົນເຜົ່າ ນັບວ່າເປັນເລື່ອງບໍ່ແມ່ນຂອງງ່າຍ ທີ່ຈະ ຈັດຕັ້ງເຂົາເຈົ້າ ໃຫ້ເປັນກ້ອນກຳລັງອັນເຂັ້ມແຂງເຮັດການ ປະຕິວັດ ແຕ່ດ້ວຍຄວາມເຊື່ອໝັ້ນຕໍ່ແນວທາງ ຂອງສູນ ກາງພັກດ້ວຍຄວາມມີຫົວຄິດປະດິດສ້າງຂອງຕົນເອງ ສະ ຫາຍເບບຊອງໄດ້ອົບຮົມສ້າງແນວຄິດໃຫ້ບັນດາຊົນຊາດ ມູ ເຊີ, ລານແຕນ, ລາວສູງກໍ່, ລາວເທິງ ແລະ ອື່ນໆໃນ ເມືອງລອງເປັນຈິດໜຶ່ງໃຈດຽວກັນ, ແລ້ວຕັ້ງເປັນຂະບວນ ການອັນເຂັ້ມແຂງ ຕໍ່ສູ້ເຮັດການປະຕິວັດ ຈົນປົດປ່ອຍປະ ເທດຊາດສຳເລັດ.

ດ້ວຍຈິດໃຈໂອບອ້ອມອາລີ ຮັກແພງຄົນອື່ນຄື ຮັກອ້າຍ ເອື້ອຍນ້ອງລູກຫລານຕົນເອງເສຽສະຫລະທຸກຢ່າງເພື່ອຜົນ ປະໂຫຽດຂອງຜູ້ອື່ນຖືຄວາມສູນເສຽຂອງຜູ້ອື່ນ ເປັນຄວາມ ສູນເສຍຂອງຕົນເອງ ແຕ່ພ້ອມດຽວກັນກໍ່ເດັດດ່ຽວບໍ່ຍອມຕໍ່ ສັດຕູເດັດຂາດ, ສະຫາຍເບບຊອງໄດ້ກາຍເປັນຈຸດລວມ, ເປັນ ຈຸດດຶງດູດຂອງຊົນຊາດ ກໍ່ເປັນທີ່ຮັກແພງຂອງ ເຂົາ ເຈົ້າ, ສັດຕູຂອງສະຫາຍກໍ່ຄືສັດຕູຂອງຊົນຊາດທັງມວນ.

ຈາກຈຸດນີ້ເອງ ຊົນຊາດກໍ່ໃນເມືອງລອງໄດ້ຢືນຢູ່ອ້ອມຂ້າງສະຫາຍແລ້ວທຳການຕໍ່ສູ້ຢ່າງມີປະສິດທິພາບ. ຂະບວນການຕໍ່ສູ້ຂອງຊົນຊາດກໍ່ໃນເມືອງລອງໄດ້ກາຍເປັນພື້ນຖານອັນແໜ້ນໜາໃຫ້ແກ່ການປະຕິວັດໃນຂົງເຂດນີ້. ສັດຕູຂອງການປະຕິວັດ ກໍ່ເປັນສັດຕູຂອງຊົນຊາດມູເຊີ, ລານແຕນ, ລາວເທິງ ແລະ ຊົນຊາດອື່ນໆ ໃນເມືອງລອງຄືດຽວກັນ, ດັ່ງນີ້ຄວາມສາມັກຄີແບບສູ້ຮົບໄດ້ເຟືອຟັ້ນ, ເຂົາເຈົ້າເປັນຈິດໜຶ່ງໃຈດຽວປຽບຄືຊ້ອກຫລາຍໆແກວກອດກ້ຽວໃສ່ກັນ ບໍ່ມີອັນໃດຈະມາດຶງໃຫ້ຂາດໄດ້. ສະຫາຍເບບຊອງໄດ້ເວົ້າແຈ້ງເຖິງຄວາມ ຫລ້າຫລັງຂອງບັນດາຊົນຊາດຕ່າງໆ ອັນເນື່ອງມາຈາກລັດທິລ່າຫົວເມືອງຂຶ້ນ ທັງເກົາ ແລະ ໃໝ່. ພວກຈັກກະພັດສົມທົບກັບພວກຫຸ່ນຂາຍຊາດ ໄດ້ປິດຫູປັງຕາ ແລະ ເຮັດທຸກວິທີທາງໃຫ້ບັນດາຊົນຊາດຊົນເຜົ່າຕ່າງໆ ໃນປະເທດລາວເຮົາ ຈົມຢູ່ໃນເຫວແຫ່ງຄວາມໂງ່ຈ້າຫລ້າຫລັງ, ບໍ່ໃຫ້ເງີຍຫົວຂຶ້ນມາ ເພື່ອພວກເຂົາຈະໄດ້ກົດຂີ່ຂູດຮີດໄດ້ຕໍ່ໄປເລື້ອຍໆ.

ປາກອອກຈາກສະພາບອັນຕ່ຳຕ້ອຍນີ້ ບັນດາຊົນຊາດຕ່າງໆ ມີແຕ່ລຸກຂຶ້ນແລ້ວຈັບອາວຸດທຸກຢ່າງນັບແຕ່ຫອກຫ່າວຫລາວແຫລມ, ປືນແກັບປືນເພີງໜ້າໜ້ອງ ແລະ

ອື່ນໆ ແລ້ວເຮັດການປະຕິວັດ. ມີແຕ່ການປະຕິວັດເທົ່ານັ້ນທີ່ຈະເຮັດໃຫ້ປະຊາຊົນ ບັນດາຊົນຊາດຕ່າງໆ ຫລຸດພົ້ນຈາກເຫວແຫ່ງຄວາມໄຮ້ກຽດສັກສີນີ້.

ລຸກຂຶ້ນ ! ລຸກຂຶ້ນ ! ແລ້ວຈັບອາວຸດ.

ໄຟປະຕິວັດ ໄດ້ລຸກຂຶ້ນໃນຫົວໃຈ ຂອງບັນດາຊົນຊາດເຫລົ່ານີ້ ແລະ ບໍ່ມີກຳລັງອັນໃດຈະມາມອດໄດ້ຈົນກ່ວາມັນຈະເຜົາໄຫມ້ ສິ່ງທີ່ຝືນປະຕິວັດ ສັດຈະທຳໃຫ້ຫມົດກ້ຽງພຽງຮາບໄປກ່ອນ.

ການປະຕິວັດເປັນການຕໍ່ສູ້ທີ່ລຳບາກຍາວນານ ມີອຸປະສັກຮອບດ້ານ. ນັກປະຕິວັດຕ້ອງສະຫລະ ໄດ້ທຸກຢ່າງເພື່ອມອບໃຫ້ແກ່ຊາດ. ສະຫາຍເບຽຊອງ ບໍ່ພຽງແຕ່ມອບເຫື່ອແຮງມອບທຸກສະຕິປັນຍາ ມອບວັດຖຸສິ່ງຂອງ ໃຫ້ແກ່ປະເທດຊາດເທົ່ານັ້ນ, ແມ່ນແຕ່ຊີວິດສະຫາຍເອງ ກໍໄດ້ມອບໃຫ້ແກ່ປະເທດຊາດ.

ລະບະຕົ້ນຂອງການປະຕິວັດ ສັດຕູມີກຳລັງແຮງ ຈຳເປັນຕ້ອງໃຊ້ໄຫວພິບ, ມີແຜນການສະຫລາດສ່ອງໃສດີກັບສັດຕູຈຶ່ງຍາດໄດ້ໄຊຊະນະ. ມີບາງເທື່ອກໍປະລາໄຊ ແຕ່ນັກປະຕິວັດບໍ່ທໍ້ຖອຍໃຈ. ສະຫາຍເອງ ເຄີຍຖືກຈັບ ແລະ ຖືກທໍລະມານຢູ່ເຂັ້ນໃຫ້ເປີດຄວາມລັບ , ແຕ່ບໍ່ມີທາງທີ່

ສັດຕູຈະໄດ້ຄວາມລັບມີແຕ່ຄວາມຕົວະ ແລະ ຮ່າງກາຍທີ ໄຮ້ວິນຍານທໍ່ນັ້ນທີສະຫາຍຈະມອບໃຫ້ແກ່ສັດຕູ, ມີແນວ ເລືອກປູ່ສອງອັນທໍ່ນີ້. ໃນທີ່ສຸດສັດຕູຫລົງເອົາຄວາມຕົວະ ແລ້ວປ່ອຍສະຫາຍຄືນ ໄປຫາອ້ອມກອດຂອງ ບັນດາຊົນ ຊາດເຫລົ່ານັ້ນຄືນອີກ.

ສຽງໄຊໂຍໂຮ່ຮ້ອງດ້ວຍຄວາມຊົມຊື່ນຍິນດີດັງສະນັ່ນໄປ ທົ່ວຂະບວນການຕໍ່ສູ້ຂອງປະຊາຊົນເມືອງລອງແລ້ວການຕໍ່ ສູ້ກໍ່ສືບມາ, ຕໍ່ໄປເລື້ອຍໆ ຈາກໄຊຊະນະນີ້ໄປສູ່ໄຊຊະນະໃຫມ່. ທຸກຄົນເຊື່ອໝັ້ນຕໍ່ໄຊຊະນະບັ້ນສຸດທ້າຍ, ເຊື່ອໝັ້ນຕໍ່ແນວ ທາງນະໂຍບາຍຂອງສູນກາງ.

ສະຫາຍເບງຊອງ ນຳພາສົງຄາມປະສິດທິພາບ ເປັນ ຕົວຢ່າງໃຫ້ນັກປະຕິວັດອື່ນໆ ໃນການສ້າງຄວາມສາມັກຄີ ລະຫວ່າງຊົນຊາດ ໃຫ້ເປັນກ້ອນກຳລັງ ອັນແຂງແກ່ນແກ່ ການປະຕິວັດ. ສະຫາຍເປັນຈຸດລວມຫລື ເປັນຜູ້ທີ່ປະຊາ ຊົນບັນດາຊົນຊາດ ໃນເມືອງລອງມີຄວາມເຫລື້ອມໃສ ແລະ ເຊື່ອໝັ້ນຢ່າງດາຍໃຈ. ຈາກຜົນຕົວຈິງເຫລົ່ານີ້ສະຫາຍ ຖືກປະຊາຊົນມອບໝາຍໃຫ້ ເປັນເລຂາຄະນະພັກ ເມືອງ ເມືອງລອງ, ແຂວງຫລວງນ້ຳທາ.

ແຕ່ຜູ້ໃດທີ່ປະຊາຊົນສ່ວນຫລາຍ ມີຄວາມເຫລື້ອມໃສ

ໄວ້ໃຈນັ້ນ ກໍເປັນຜູ້ ທີ່ສັດຕູໝາຍຫົວໄວ້ ຢ່າງເອົາເປັນເອົາຕາຍ, ບົນເສັ້ນທາງ ຂອງການປະຕິວັດນັ້ນ ເຕັມໄປດ້ວຍຄວາມກັນດານ, ຄວາມຕາຍອາດເກີດຂຶ້ນໄດ້ທຸກເມື່ອ, ແຕ່ນັກປະຕິວັດກໍບໍ່ໄດ້ຫວັ່ນໄຫວ ຜູ້ໜຶ່ງຕາຍອີກຜູ້ໜຶ່ງສືບຕໍ່ບຸກໜ້າຕໍ່ໄປ. ຕາຍເພື່ອອຸດົມການ ເຖິງຈະເອົາຫົວໝູນດິນຕີນຈຸ່ມນໍ້າແຕ່ກໍເປັນກຽດປະຫວັດໃຫ້ລູກຫລານໄດ້ເອກອ້າງ ແລະ ເປັນມູນເຊື້ອໃຫ້ແກ່ເຂົາໄດ້ເອົາເປັນແບບຢ່າງຕໍ່ໄປໃນອານາຄົດ.

ວັນໜຶ່ງສະຫາຍເບຽຊອງ ໄປສັກເຂົ້າໄຮ່ ໂດຍມີທະຫານພະນັກງານ ແລະ ປະຊາຊົນໄປຊ່ວຍສັດຕູຊຶ່ງໝາຍເອົາຊີວິດສະຫາຍແຕ່ດົນມາແລ້ວນັ້ນ ກໍຮູ້ການໄປແລ້ວຈອບຢູ່ເປີ້ນພູກົງກັນຂ້າມ. ເວລາທີ່ການສັກເຂົ້າໄຮ່ດຳເນີນໄປນັ້ນທັນໃດສຽງປືນກໍດັງຂຶ້ນ ສັດຕູໄດ້ ຍິງສຸມໃສ່ ຜູ້ຄົນທີ່ພວມສັກເຂົ້າໄຮ່ຢູ່ນັ້ນຢ່າງປ່ວງບ້າ, ເຮັດໃຫ້ເກີດສະພາບຊຸນລະມຸນເພາະທຸກຄົນ ແລ່ນຫາບ່ອນລີ້ບ່ອນບັງ. ເມຍຂອງສະຫາຍເບຽຊອງ ຊຶ່ງລົງໄປຕັກນໍ້າທີ່ຫ້ວຍນ້ອຍຕີນໄຮ່ຖືກຍິງຈົນເຖິງແກ່ຄວາມຕາຍຢ່າງໜ້າເວດທະນາ.

ເຫດການຢູ່ໃນຂັ້ນຄັບຂັນທີ່ສຸດ, ມີບາງຄົນ ຖືກບາດເຈັບນອນຢູ່ກາງໄຮ່ ບາງຄົນບັງຢູ່ບ່ອນມີຂອນໄມ້ແດ່ ບັງຢູ່

ບ່ອນນີ້ຈົນປວກແດ່, ສະຫາຍເບງຊອງເຫັນສະພາບເປັນແນວນັ້ນຈຶ່ງກັດສິນໃຈເຮັດວິທີໃດ ວິທີໜຶ່ງ ເພື່ອຊ່ວຍໃຫ້ບັນດາອ້າຍເອື້ອຍນ້ອງເອົາຕົວລອດໄປໄດ້. ໄດແດ່ແດ່ສະຫາຍນອນໝູບຢູ່ບໍ່ໄກ ຈາກປ່າແຄມໄຮ່ ຈຶ່ງພະຍາຍາມ ລີ້ເລືອເຂົ້າປ່າ, ລູກປືນຫວີດຂ້າງຫວີດແອວ. ບາງເທື່ອສະຫາຍຕ້ອງໝູບຢູ່ດົນໆ ເພາະປືນຂອງສັດຕູຍິງສຸມມາຕິດໆ ນິດສຽງປືນກໍລີ້ເລືອຕໍ່ຈົນໃນທີ່ສຸດກໍເຂົ້າເຖິງປ່າໄດ້. ຜູ້ອື່ນກໍພະຍາຍາມລີ້ເລືອເຂົ້າແຄມໄຮ່ແຕ່ກໍຖືກສັດຕູ ຍິງສະກັດຢ່າງບໍ່ລົດລະ ສະຫາຍເບງ ຊອງໄດ້ເຮັດອຸບາຍ ໂດຍແລ່ນລີ້ໄປສູ່ແຄມໄຮ່ອີກດ້ານໜຶ່ງແລ້ວ ສະຫາຍ ກໍຮ້ອງໂຮກະໂດດໂລດເຕັ້ນສັ່ນພຸ່ມໄມ້ບາງເທື່ອກໍປາກົດຕົວໃຫ້ສັດຕູ ເຫັນເປັນລິບລັບໂດຍບຸ່ງເສື້ອແດ່ເປືອຍໂຕເຄິ່ງຄິງແດ່ ເອົາພົດໄມ້ຫຸ້ມໂຕແດ່ ເຮັດແນວນີ້ໃຫ້ສັດຕູເຫັນຫລາຍເທື່ອ ເພື່ອໃຫ້ເຂົາເຂົ້າໃຈວ່າມີຫລາຍຄົນ ແລ່ນໄປບ່ອນດັ່ງກ່າວ. ອຸບາຍໄດ້ຜົນຕາມຄາດໝາຍສັດຕູສຸມປືນໃສ່ແດ່ບ່ອນ ສະຫາຍເບງຊອງເປັນສະນັ່ນຟັ່ນເຟື້ນ. ສ່ວນບັນດາ ເອື້ອຍອ້າຍນ້ອງ ທີ່ນອນໝອບຢູ່ກໍລີ້ເລືອເຂົ້າປ່າແຄມ ໄຮ່ໄດ້ເທື່ອລະຄົນ ສອງຄົນ. ເພື່ອແກ່ຍາວເວລາໃຫ້ເອື້ອຍອ້າຍນ້ອງ ມີໂອກາດເຂົ້າຫາທີ່ປອດໄພ ສະຫາຍເບງຊອງ ຍັງຄົງສືບຕໍ່ເຮັດອຸບາຍຕໍ່ໄປ

ສະຫາຍແລ່ນຫລົບບ່ອນນັ້ນບ່ອນນີ້. ສຽງປືນຂອງສັດຕູກໍ່ສຸມໃສ່ຕິດໆ ຈົນວ່າບໍ່ມີຫຍັງເຄື່ອນໄຫວ ໃນບ່ອນດັ່ງກ່າວແລ້ວທຸກຢ່າງກໍ່ໄດ້ສະຫງົບລົງ. ນາຮອດຕອນນີ້ ບັນດາເອື້ອຍອ້າຍນ້ອງໄດ້ເລືອເຂົ້າປ່າໝົດແລ້ວ.

ເຫດຮ້າຍໄດ້ຜ່ານໄປ, ຄວາມສະຫງົບ ໄດ້ກັບຄືນມາສູ່ພູຜາປ່າໄມ້ບໍລິເວນໄຮ່ແຫ່ງນີ້ອີກ. ສຽງນົກເລີ່ມດັງເຈື້ອຍແຈ້ວ ສຽງທະນີໄຫຍຮ້ອງເປັນເປືອກກ້ອງປ່າ ພະນາໄພເໝືອນເປັນການບອກຂ່າວເສົ້າສະຫລົດໃຈວ່າ ສະຫາຍເນຍຊອງ ໄດ້ເສຍສະຫລະຊີວິດໄປແລ້ວ ເພື່ອກູ້ເອົາຊີວິດຂອງບັນດາເອື້ອຍອ້າຍນ້ອງ, ຮ່າງອັນໄຮ້ວິນຍານຂອງ ສະຫາຍນອນສະຫງົບປູ່ປ່າແຄມໄຮ່ ບ່ອນ ທີ່ສະ ຫາຍເຮັດອຸບາຍໃຫ້ສັດຕູຍິງສຸມໃສ່ນັ້ນເອງ. ສ່ວນເມຍສະຫາຍນອນສະຫງົບປູ່ຫົວນຕີນໄຮ່, ເລືອດແດງໆຂອງນັກຕໍ່ສູ້ໄຫລເຈືອຈານໄປກັບສາຍນ້ຳຫ້ວຍລ່ອງໄປເລື້ອຍໆ.

ນອກຈາກສະຫາຍເນຍຊອງ ແລະ ເມຍແລ້ວບໍ່ມີຜູ້ໃດເສຍຊີວິດ ມີແຕ່ບາດເຈັບຈຳນວນ 12 ຄົນ. ການເສຍສະຫລະຊີວິດຂອງສະຫາຍນັບວ່າກູ້ມຄ່າ ແລະ ບໍ່ມີໃຜຈະລືມວິລະກຳຂອງສະຫາຍລົງໄດ້.

ປະຊາຊົນເມືອງລອງເວົ້າວ່າ ສະຫາຍໄດ້ມອບສົມບັດ

ອັນສຸດທ້າຍໃຫ້ແກ່ປະເທດຊາດແລ້ວ ນັ້ນຄືຕົນໂຕຂອງສະຫາຍເອງ, ແຕ່ຊື່ສຽງຂອງເບນຊອງຍັງຢູ່ໃນຫ້ວງນຶກຂອງທຸກຄົນ.

ສຸດ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ເຄື່ອນໄຫວຢູ່ກ້ອງປີກເຮືອບິນຂອງສັດຕູ

(ເລື່ອງຂອງລຸງຊຽງແພງ ບ້ານດອນຈ້ ຫລວງພະບາງ)

ໂດຍ ອຸທິນ ບຸນຍາວົງ

ການກໍ່ວິນາດສະກຳ ເດີ່ນ ບິນ ຫລວງ ພະ ບາງ ໃນປີ 1969 ອັນໄດ້ເຮັດໃຫ້ເຮືອບິນສັດຕູຖືກທຳລາຍ 9 ລຳ ສາງອາວຸດຖືກເຜົາຈຳນວນໜຶ່ງນັ້ນເປັນ ວິລະກຳ ອັນເດັ່ນຂອງກອງຮ້ອຍ 303 ຊຶ່ງເປັນກອງໂຈມຕີພິເສດ. ແຕ່ຜູ້ທີ່ມີສ່ວນປະກອບອັນສຳຄັນ ເຮັດໃຫ້ວຽກງານດຳເນີນໄປເປັນຂັ້ນ ໆ ແລະ ບັນລຸເຖິງຜົນສຳເລັດນັ້ນ ທຸກໆ ຄົນທີ່ໄດ້ສ້າງວິລະກຳດັ່ງກ່າວຄົງຈະປະຕິເສດບໍ່ໄດ້ວ່າ ແມ່ນ ລຸງ ຊຽງ ແພງ ຊາວນາແຫ່ງ ບ້ານ ດອນ ຈ້ ຊຶ່ງເປັນບ້ານຕັ້ງຢູ່ສົ້ນເດີ່ນບິນນັ້ນເອງ.

ລຸງເປັນຄົນຕຸ້ຍຕ່ຳເກິງ ຜົມຫງອກຂາວທົ່ວຫົວເປັນພໍ່ບາ ຢູ່ເຮືອນຝາໄມ້ເຮັ້ຍມຸງຫຍ້າ ເປັນບຸກຄົນອາວຸໂສທີ່ໝົດບ້ານນັບຖື ແລະ ຮັກແພງ.

ເວລານັ້ນເດີນບິນຫລວງພະບາງ ເປັນຖານທັບສຳຄັນຂອງສັດຕູ, ມີເຮືອບິນ ເຕ–28 ເຮລີກັອບແຕ ແລະ ເຮືອບິນບັນທຸກຕ່າງໆ ຂຶ້ນລົງເປັນ ສິບໆ. ປູ່ຈອມພູແຕ່ລະໜ່ວຍອ້ອມແອ້ມຫລວງພະບາງສັດຕູໃຊ້ບິນເຮລີກັອບແຕເອົາກຳລັງໄປປ່ອນລົງເພື່ອຕ້ານການແຊກຊຶມຂອງກຳລັງປະຕິວັດ. ພູບາງໜ່ວຍສົງໃສຖືກແຊກຊຶມສັດຕູກໍໃຊ້ບິນຣົບບິງ ແລະຫວ່ານ ລະ ເບີດ ລົງ ທຳລາຍສຽງລະນັ່ນຟັ່ນຟື້ນ. ບາງຄັ້ງບາງຄາວສັດຕູກໍອອກກວາດລ້າງ ແລະ ປະຊາຊົນທີ່ອາໃສຢູ່ໃນບໍລິເວນນັ້ນກໍຖືກຈັບເປັນມະບຶງມະບຶດ, ຖືກທໍລະມານຕ່າງໆນາໆ, ຖືກຂ້າປິດປາກ ເພື່ອປົກປິດຄວາມໂຫດຮ້າຍທາລຸນຂອງເຂົາ. ເບິງຜິວເຜີນແລ້ວສັດຕູຄວບຄຸມຫລວງພະບາງໄວ້ໄດ້ຢ່າງໝັ້ນຄົງ, ແຕ່ເບິງເລິກລົງໄປນັ້ນກຳລັງປະຕິວັດໄດ້ເຄື່ອນໄຫວໄປມາຢ່າງເປັນລະບົບ, ເວົ້າໃຫ້ຄັກກໍແມ່ນວ່າເຄື່ອນໄຫວຢູ່ກ້ອງປີກເຮືອບິນຂອງສັດຕູນັ້ນເອງ.

ລຸງຊຽງແພງ ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວປິດລັບດັ່ງກ່າວນີ້ຢ່າງແນບນຽນ. ລຸງມີວິທີການສັບຊ້ອນພະນັກງານປິດລັບຢູ່ພາຍໃນບ້ານ, ມີເລ່ຫລ່ຽມຫລອກສັດຕູໃຫ້ຕາຍໃຈ ແລະ ເຊື່ອໝັ້ນຕໍ່ລຸງສະເໝີມາ. ລຸງເຄີຍຮັບລ້ຽງພະນັກງານປິດລັບທີ່ທາງແຂວງ ແລະ ສູນກາງສົ່ງມາ.

ເຄື່ອນໄຫວຢູ່ຫລວງພະບາງ ແຕ່ປີ 1955 ຫາ 1957 ຈຳນວນ 7 ຄົນ, ໃນປີໂຮມລາວ 1962 ຈຳນວນ 3 ຄົນ ນອກນັ້ນຍັງໄດ້ເຄື່ອນໄຫວຮັບໃຊ້ວຽກງານ ທີ່ເປັນປະໂຫຍດ ກລວງຫລາຍໃຫ້ແກ່ການປະຕິວັດຫລາຍຄັ້ງຫລາຍຄາວ. ຍາມໃດສັດຕູຈະອອກກວາດລ້າງ ລຸງກໍເປັນຜູ້ບອກໃຫ້ພະນັກງານປີ.ກລັ້ບທີ່ອາໄສຢູ່ກັບລຸງ ຫລືທີ່ອາໄສຢູ່ນຳຄົນອື່ນໆ ໃຫ້ ອອກ ໄປ ສູ່ ທີ່ ປອດ ໄພ. ຫລາຍເທື່ອລຸງເປັນຜູ້ນຳພາອອກ ໄປ ເອງ. ເມື່ອຫວິດຈາກການກວາດລ້າງແລ້ວລຸງກໍພາກັບມາຍັງບ້ານ ມີບາງເທື່ອຖືກສັດຕູສອບຖາມ, ລຸງກໍບອກວ່າເປັນລູກຫລານມາແຕ່ບ້ານອື່ນ ເພື່ອຊ່ວຍເຮັດໄຮ່ເຮັດນາຫລືວ່າມາຢ້ຽມຢາມ.

ວຽກເດັ່ນອັນໜຶ່ງທີ່ລຸງໄດ້ປະກອບກໍ່ຄືໃນປີ 1970 ນີ ພະນັກງານປະຕິວັດ 3 ຄົນໂດຍໜີຈາກຄຸກຫລວງພະບາງ, ລຸງໄປພໍ້ສາມຄົນນີ້ຢູ່ແຄມນ້ຳ. ລະຍະນັ້ນສັດຕູໄດ້ປະກາດຫ້າມເຈົ້າຂອງເຮືອບໍ່ໃຫ້ຂ້າມໄປມາ ໂດຍບໍ່ໄດ້ຮັບອະນຸຍາດເດັດຂາດ. ແຕ່ລຸງຕ້ອງຊ່ວຍເຫລືອ 3 ຄົນນີ້ໃຫ້ໄດ້ ແລະ ຕ້ອງສົ່ງຂ້າມນ້ຳ. ເມຍຂອງລຸງອອກປາກຫ້າມເພາະສ່ຽງຕໍ່ອັນຕະລາຍ, ລຸງ ບໍ່ ຍອມ ຟັງ ສຽງ ຂອງເມຍ ແລະ ເວົ້າວ່າຂໍໃຫ້ໄດ້ຊ່ວຍເຫລືອອ້າຍນ້ອງສາມຄົນ

ນີ້ໄປພົ້ນອັນຕະລາຍ ເຖິງວ່າໂຕເອງຈະເປັນຈະຕາຍແນວ
ໃດກໍ່ຢ່າ, ແລ້ວລຸງກໍ່ຈັດການສົ່ງສານຄືນນີ້ຂ້າມນ້ຳຈີນຕະ
ຫລອດປອດໄພ. ຂາກັບມາລຸງຖືກສັດຕູສອບຖາມແຕ່ລຸງ
ກໍແກ້ໄຂໄດ້.

ນອກຈາກການເຄື່ອນໄຫວຮັບໃຊ້ ແລະ ຊ່ວຍເຫລືອ
ພະນັກງານ ປິດລັບແລ້ວ ລຸງຊຽງແພງ ຍັງໄດ້ອົບຮົມຊາວ
ບ້ານດອນຈ້ ຈຳນວນໜຶ່ງໃຫ້ຮູ້ຈັກ ຮັກປະເທດຊາດບ້ານ
ເມືອງ, ຮູ້ຈຳແນກມິດກັບສັດຕູໃຫ້ມີຄວາມສາມັກຄີກັນເປັນ
ອັນໜຶ່ງອັນດຽວ ແລະ ເສຍສະຫລະເພື່ອປະເທດຊາດ. ສະ
ຖານທີ່ອົບຮົມແມ່ນຢູ່ບອກຫ້ວຍ ໃກ້ບ້ານດອນຈ້, ເຮືອບິນ
ຂອງສັດຕູບິນຂ້າມຫົວທຸກມື້. ການອົບຮົມດຳເນີນໄປດ້ວຍ
ດີສະເໝີມາໂດຍທີ່ສັດຕູບໍ່ຮູ້ໄດ້ເລີຍ.

ລະຍະກ່ອນທີ່ເດີ່ນບິນຈະຖືກບຸກທຳລາຍ, ມີຊາຍແປກ
ໜ້າຄົນໜຶ່ງ ນຸ່ງເຄື່ອງທະຫານຫຸ່ນ ໄປຫາລຸງຊຽງແພງ.
ເປັນເລື່ອງທຳມະດາທີ່ທະຫານຫຸ່ນໄປຫາລຸງ, ແຕ່ເທື່ອນີ້
ເປັນເລື່ອງແປກປະຫລາດ ແລະ ສັບສົນ ເພາະທະຫານ
ຫຸ່ນລາຍນີ້ ຊ້ຳພັດບອກໃຫ້ລຸງໄປພົວພັນກັບກຳລັງປະຕິ
ວັດທີ່ພວມຄອບຢູ່ປ່າ ໄກຈາກບ້ານສົມຄວນ. ຊາຍແປກ
ໜ້າສະເໜີຕົວວ່າຊື່ສາຍ ວ່າເຄີຍມາພົບກັບລຸງເທື່ອໜຶ່ງ

ເມື່ອຫລາຍປີມາແລ້ວ ພ້ອມກັບໝູ່ເພື່ອເຄື່ອນໄຫວປົດລັບ ກາບກັບຄືນມາອີກເທື່ອນີ້ກໍເພື່ອວຽກງານອັນສຳຄັນ ເປັນພິເສດ ແລະ ຈຳເປັນຕ້ອງການຄວາມຮ່ວມມືຂອງລຸງຢ່າງຂາດບໍ່ໄດ້.

ລຸງຊຽງແພງລັງເລໃຈ, ລຸງຈື່ສະຫາຍສາຍບໍ່ໄດ້ເພາະພະນັກງານ ປົດລັບທີ່ມາພົວພັນກັບລຸງນັ້ນ ມີຫລາຍຄົນ, ບາງຄົນມາພັກນຳ, ບາງຄົນມາຕິດຕໍ່ ພຽງລະຍະສັ້ນໆແລ້ວກໍຫາຍໄປ. ລຸງເປັນຮ້ອນໆໜາວໆ ແລະ ຄິດວ່າປ້ານເປັນແຜນຂອງສັດຕູຖ້ານິດພາດກໍໝາຍເຖິງຄວາມຕາຍ.

ສະຫາຍສາຍ ໄດ້ເວົ້າຫລາຍສິ່ງຫລາຍແນວ ເພື່ອໃຫ້ລຸງຕາຍໃຈ, ລຸງເຮັດອຸມອື້ອຸມອຶດຢູ່ດົນ, ໃນທີ່ສຸດກໍວົກລົງໄປນຳແຕ່ກໍຍັງບໍ່ເຊົາສົງໄສ. ຫລັງຈາກຈັດແຈງແຕ່ງເອົາເຄື່ອງທີ່ຈຳເປັນຕິດຕົວໄປນຳແລ້ວ ທັງສອງກໍມຸ່ງໜ້າສູ່ຈຸດທີ່ໝາຍໂດຍລັດໄປຕາມປ່າ. ລຸງເຊີດຊູສະຕິລະວັງຕົວສູງສາຍຕາກວາດໄປທົ່ວ ແລະ ຕັດສິນໃຈວ່າຖ້າຕົກຖືກແຮ້ວສັດຕູກໍຈະຍອມຕາຍດີກ່ວາໄຂຄວາມລັບ. ລຸງຫລຽວເບິ່ງສະຫາຍສາຍເທື່ອໃດກໍຮູ້ສຶກຂ້ອງຄາໃນຫົວໃຈ, ເຂົາເປັນທັງມິດເປັນທັງສັດຕູສຳລັບລຸງ. ເຫັນເຄື່ອງທະຫານຫຸ່ນທີ່ເຂົາສວມໃສ່ແລ້ວ ລຸງກໍຄຶດຢາກຖອຍຫລັງ ແຕ່ກໍມີສິ່ງໃດ

ສິງໜຶ່ງໃນຕົວຂອງເຂົາບູ້ຫລັງລູງໄວ້ແລ້ວຊຸກໃຫ້ກ້າວເດີນຕໍ່ໄປຕໍ່ໄປ....

ເມື່ອໄປຮອດຈຸດທີ່ໝາຍ. ເຖິງວ່າຈະເຫັນຄົນໃນຊຸດນັກຮົບປົດປ່ອຍ ແຕ່ລູງຊຽງແພງ ກໍບັງບໍ່ເຊົາສົງໃສ ງ່າຍໆ ຕາມສັນຊາດຍານຂອງພະນັກງານປະຕິວັດທີ່ດີ.

" ອາດເປັນທະຫານຫຸ່ນ ປອມຕົວເປັນທະ ຫານ ປົດປ່ອຍ " ລູງຄິດແລະພະຍາຍາມເຮັດທ່າທາງໃຫ້ເປັນປົກກະຕິ ບໍ່ສະແດງອາການຫວາດຫວັ່ນຫຍັງໝົດ.

ທະຫານຄົນໜຶ່ງ ຍ່າງອອກມາຕ້ອນຮັບລູງ ດ້ວຍທ່າທາງເປັນມິດ. ສະຫາຍສາຍແນະນຳວ່າ:

" ແມ່ນສະຫາຍຄຳອ່ອນ ຜູ້ບັງຄັບກອງຮ້ອຍຂອງພວກເຮົາ "

ການໂອ້ລົມຂັ້ນຕົ້ນແມ່ນກ່ຽວກັບເລື່ອງເກົ່າ ເລື່ອງຫລັງຄັ້ງທີ່ສະຫາຍສາຍ ແລະ ສະຫາຍຄຳອ່ອນ ເຄີຍໄປຢ້ຽມຢາມລູງເທື່ອໜຶ່ງເມື່ອຫລາຍປີມາແລ້ວ. ລູງຫລຽວເບິ່ງໜ້າສະຫາຍຄຳອ່ອນ ແລະ ສະຫາຍສາຍແລ້ວທົບທວນຄືນຫລັງ ຄິດຫາໃບໜ້າຂອງຜູ້ຄົນທີ່ລົງເຄີຍຕິດຕໍ່ພົວພັນມາກ່ອນ. ລູງຮູ້ສຶກວ່າທັງສອງໃບໜ້ານີ້ເປັນສິຄຸ້ນເຄີຍ, ໃນທີ່ສຸດລູງກໍຍອມຮັບ ແລະເຊື່ອໃຈໃນບຸກຄົນທັງສອງວ່າເປັນ

ນັກຮົບປະຕິວັດແທ້. ຕໍ່ໄປການໂອ້ລົມກ່ຽວຂ້ອງເຖິງວຽກງານຕົວຈິງ. ສະຫາຍຄຳອ່ອນສະເໜີໃຫ້ລູງຊຽງແພງໄປເກັບກຳສະພາບການພາຍໃນເດີ່ນບິນ ໃຫ້ລະອຽດ ເທົ່າທີ່ຈະເກັບກຳໄດ້ເຊັ່ນກຳລັງຂອງສັດຕູທີ່ຮັກສາເດີ່ນມີເທົ່າໃດ, ສາງອາວຸດຕັ້ງຢູ່ບ່ອນໃດ, ບິນຮົບທີ່ປະຈຳຢູ່ເດີ່ນ ແລະ ບິນຂົນສົ່ງມີຈຳນວນເທົ່າໃດ. ລູງຄຶດຢູ່ດົນເຕີບ ຄຶດເຫັນລູກຫລານທີ່ເຮັດການຢູ່ໃນເດີ່ນ ຊຶ່ງພໍທີ່ຈະຕິດຕໍ່ພົວພັນໄດ້. ລູງເຫັນວ່າວຽກງານນີ້ຈະເປັນປະໂຫຍດຫລວງຫລາຍໃຫ້ແກ່ການປະຕິວັດ ລູງຈຶ່ງຕອບຮັບດ້ວຍຄວາມເຕັມໃຈແລ້ວກໍກັບເມືອເຮືອນຢ່າງປົກກະຕິທຳມະດາ.

ນັ້ນມາ ລຸງຊຽງແພງໄດ້ເຂົ້າໄປຍັງເດີ່ນບິນ. ທຳທ່າໄປຫາລູກຫລານທີ່ເຮັດການຢູ່ພາຍໃນເດີ່ນ. ເພາະລູງເປັນຄົນຊາວໄຮ່ແຫ່ງບ້ານດອນຈັ້ ຄົນຍາມປະຕູຈຶ່ງສອບຖາມພຽງເລັກນ້ອຍແລ້ວກໍປ່ອຍໃຫ້ເຂົ້າໄປ. ເປັນອັນວ່າບັດນີ້ກັບໄດໄສ້ພຸງຂອງສັດຕູຖືກໄຂອອກ ເພື່ອໃຫ້ລຸງໄດ້ສຳຫລວດກວດກາ, ລຸງເຫັນບິນຮົບເຕ 28 ຈອດຮຽງກັນເປັນຊ້າຍລ້າຍ, ມີລູກລະເບີດແຂວນໂອ້ນໂຕ້ນຢູ່ກ້ຽງປີກ, ອັນນີ້ແມ່ນຈຳນວນຫນຶ່ງໃນສາມລ້ານໂຕນ ທີ່ຈັກກະພັດອາເມລິກາສົ່ງມາທຳລາຍເພົາຜານປະເທດລາວເຮົາ. ແຕ່ລະລຳກຽມພ້ອມຈະ

ບິນຂຶ້ນສູ່ທ້ອງຟ້າຖ້າໄດ້ຮັບຄຳສັ່ງ, ຍົນເຮລິກັອບແຕຈອດຢູ່ເປັນບ່ອນໆ ບາງລຳພວມຕິດຈັກກຽມຈະບິນ, ຍົນສະປຸກກີ້ສີລາຍຂຽວແຫລ້ລຳໜຶ່ງຈອດຢູ່ຢ່າງສະຫງົບ.

ເທິງຟ້າຍົນກາລິບູພວມບິນເວີ່ນລີ້ງເພື່ອນຳສະບຽງອາຫານມາສົ່ງໃຫ້ອາເມລິກາເປັນປະຈຳເກືອບທຸກມື້.

ລຸງຊຽງເພງອອກບ່ອນໜຶ່ງເຂົ້າບ່ອນໜຶ່ງ ເພື່ອຖາມຫາຄົນທີ່ຮູ້ຈັກ ເມື່ອພົບແລ້ວກໍ່ຖາມຫາອີກຜູ້ໜຶ່ງ.

"ປູ່ພຸ້ນ" ທະຫານໜຸ່ມຄົນໜຶ່ງບອກທັງຊີ້ມືໄປພ້ອມ.

"ໂອຍກະບໍ່ກ້າໄປແລ້ວ ມັນໃກ້ສາງລະເບີດປ້ານແຕກຕຸ້ມໃສ່ ຂໍໃຫ້ລູກໄປເອີ້ນໃຫ້ພໍ່ແດ່". ລຸງເວົ້າຫລອກ.

"ລຸງໄປໂລດ ບໍ່ຕ້ອງຢ້ານດອກສາງລະເບີດມັນປູ່ພຸ້ນ" ທະຫານໜຸ່ມຊີ້ມືໄປຫາສາງອາວຸດຕົວຈິງ.

ລຸງທຳທ່າສີ້ທິດໆ ແລ້ວຍ່າງໄປດ້ວຍຄວາມລະມັດລະວັງ, ມີທັງຄວາມຮູ້ສຶກຢ້ານໆ ແລະ ຮູ້ສຶກພໍອົກພໍໃຈສັບປົນກັນໄປເມື່ອໄດ້ລາຍລະອຽດສົມຄວນແລ້ວ ກໍກັບຄືນບ້ານພ້ອມດ້ວຍແຜນທີ່ຂອງເດີ່ນຍົນບັນຈຸໄວ້ໃນສະໝອງ, ຈາກນັ້ນກໍລາຍງານຕໍ່ສະຫາຍຄຳອ່ອນ ແລະ ສະຫາຍສາຍ, ທັງສອງຕ່າງກໍພໍໃຈໃນການເກັບກຳຂອງລຸງ.

ນອກຈາກເຂົ້າໄປໃນເດີ່ນແລ້ວ ລຸງຍັງໄດ້ໄປພົບກັບບຸກ

ຄົນອື່ນໆ ທີ່ລາວເຊື່ອໃຈໄດ້ ພາຍໃນເມືອງຫລວງພະບາງ ເພື່ອຖາມສະພາບການຕ່າງໆ ແລ້ວກໍນຳມາວິດກ່ປະສົມ ປະສານໃສ່ກັນ ຫລັງຈາກເກັບກຳສະພາບການໄດ້ຫລາຍ ສົມຄວນແລ້ວ ລາວກໍໄດ້ຮ່ວມວາງແຜນໃນການກໍ່ວິນາດສະ ກຳ ເຊັ່ນການສົ່ງກຳລັງເຂົ້າໄປໃນເດີ່ນ, ການສະກັດກັ້ນກຳ ລັງສັດຕູທີ່ຈະມາຊ່ວຍໜູນກັນ, ການຫລອກສັດຕູອອກໄປ ສູ່ວົງສະກັດ, ການກຳນົດຈຸດນັດພົບຫລັງຈາກບຸກທຳລາຍ ເດີ່ນ ບິນ ແລ້ວ. ອາໄສທີ່ລາວຮູ້ຈັກສະພາບພື້ນ ທີ່ດີແຜນ ການຈຶ່ງດຳເນີນໄປຢ່າງມີຜົນ.

ໃນທີ່ສຸດ ມື້ທີ່ສັດຕູ ໄດ້ຮັບບົດຮຽນ ອັນເຈັບແສບກໍມາ ເຖິງ. ສຽງລູນການດັງຂຶ້ນ ແສງແປບມາຈາກ ປາຍປືນ ປະກົດຢູ່ທົ່ວ, ເດີ່ນບິນສັ່ນສະເທືອນຄືແຜ່ນດິນຊີ່ປີ້ນ. ມີ ແສງໄຟ, ມີຄັວນລະເບີດ ກັ້ນເປັນເລົາຂຶ້ນ ສູ່ທ້ອງຟ້າ.ຊາວ ຫລວງພະບາງຖືກປຸກໃຫ້ຕື່ນຂຶ້ນ ເມື່ອຮູ້ວ່າອັນໃດເປັນອັນ ໃດແລ້ວ ກໍບໍ່ມີນົບເພາະຫລິງເຫັນວ່າ ຕໍ່ໄປສັດຕູ ຈະບໍ່ໄດ້ ເອົາ ບິນ ຮົບ ມາ ປະ ຈຳຢູ່ເດີ່ນແຫ່ງນີ້ ອີກ ອັນເປັນການນຳ ຄວາມເດືອດຮ້ອນມາສູ່ເຂົາເຈົ້າ.

ນັກຮົບປົດປ່ອຍໄດ້ເປັນເຈົ້າການ ແລະ ບຸກໂຈມຕີສັດ ຕູຢ່າງຕັ້ງຕົວບໍ່ຕິດ. ກຳລັງຈຳນວນໜຶ່ງໄປລະເບີດທຳລາຍ

ຍົນລຸກເປັນໄຟສີງແສງສະຫວ່າງ ແຈ້ງໄປທົ່ວບໍລິເວນໃກ້ຄຽງ. ການບຸກທຳລາຍດຳເນີນໄປຢ່າງວ່ອງໄວແລະຖືກຕ້ອງຕາມແຜນ. ແລ້ວໜ່ວຍໂຈມຕີພິເສດ ກໍຮີບຖອຍອອກຢ່າງທັນການກ່ອນທີ່ກຳລັງໜູນຂອງສັດຕູຈະມາຮອດ.

ຜົນຂອງການບຸກໂຈມຕີເທື່ອນີ້ ມີຍົນຖືກທຳລາຍ 9 ລຳ ສັດຕູຕາຍກັບທີ່ບໍ່ຕ່ຳກ່ວາ 10 ຄົນນອກນັ້ນຍັງໄດ້ຮັບບາດເຈັບອີກຈຳນວນໜຶ່ງ. ນັບເປັນບົດຮຽນອັນເຈັບແສບໃຫ້ແກ່ສັດຕູໂດຍສະເພາະອາເມລິກາ ເພາະເຊື່ອໝັກໝາວ່າໄດ້ວາງແຜນປ້ອງກັນເດີນຍົນໄວ້ຢ່າງຄັກແນ່ແລ້ວ.

ມື້ຕໍ່ມາ ສັດຕູໄດ້ອອກທຳການກວາດລ້າງໄປທົ່ວເຂດອ້ອມແອ້ມ ລວມທັງບ້ານດອນຈ້ ແຕ່ບໍ່ພົບນັກຮົບປົດປ່ອຍແມ່ນແຕ່ຄົນດຽວ. ລຸງຊຽງແພງຍິ້ມຢູ່ໃນໃຈແຕ່ເຮັດໃຫ້ ໃບໜ້າເປັນປົກກະຕິທຳມະດາ ເມື່ອຖືກສັດຕູ ສ້ຖາມວ່າເຫັນທະຫານແນວລາວຜ່ານໄປທາງນີ້ບໍ? ລຸງ ຊີ້ໄປທາງນັ້ນທາງນີ້, ແລ້ວສັດຕູກໍແລ່ນໄປຕາມທິດທາງທີ່ລຸງບອກຊຶ່ງໃນຕົວຈິງເປັນທິດກົງກັນຂ້າມທີ່ນັກຮົບປົດປ່ອຍຜ່ານໄປ.

ລຸງຊຽງແພງ ເປັນທີ່ນັບຖືຂອງຊາວບ້ານເປັນທີ່ເຊື່ອຖືຂອງສັດຕູກໍເພາະ ລຸງເປັນທັງນາຍບ້ານດອນຈ້ ຊຶ່ງແຕ່ງຕັ້ງໂດຍອຳນາດປົກຄອງຂອງສັດຕູນັ້ນເອງ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ກ້າຕ້ອງຊະນະ

ອຸທົມ ບຸນຍາວົງ

(ເລື່ອງຂອງລຸງຕະວິ ຕາແສງສະແກນ ເມືອງນາແລ ແຂວງຫລວງນ້ຳທາ )

ເປັນນັກຮົບເຮັດການປະຕິວັດນັ້ນ ການສະແດງຄວາມກ້າຫານໃຫ້ສັດຕູໄດ້ຮູ້ເຫັນເປັນສິ່ງຈຳເປັນ ເພື່ອຮັບປະກັນໄຊຊະນະ, ບາງເທື່ອລູກກະສຸນບໍ່ໄດ້ເສຍຈັກນັດ ສັດຕູກໍ່ປົບໜີໄປຢ່າງເສຍຂວັນ. ລຸງຕະວິເປັນຕົວຢ່າງທີ່ດີໃນການເຮັດໃຫ້ສັດຕູຢ້ານກົວ ໂດຍສະແດງຕົນບໍ່ຮູ້ຮ້ອນຮູ້ໜາວຕໍ່ການກຳຣາບປາບຂູ່ຂອງສັດຕູ. ແມ່ນແທ້ຕອນຈົບຕາແຈ ລຸງເຮັ່ງສະແດງວ່າກ້າຫານເດັດດ່ຽວບໍ່ຢ້ານພື້ນຢ້ານໄຟ.

ຄວາມກ້າຫານນີ້ເປັນຄຸນສົມບັດອັນດີເດັ່ນຂອງຊົນຊາດຮອກ ຊຶ່ງເປັນລາວເທິງເຜົ່າໜຶ່ງ. ລຸງຕະວິໄດ້ສືບທອດມູນເຊື້ອອັນນີ້ມາ ເຮັດໃຫ້ບົດບາດຂອງຊົນຊາດຮອກເດັ່ນຢູ່ໃນພາລະກິດການປະຕິວັດປົດປ່ອຍຊາດ.

ຕົວຢ່າງຄວາມກ້າຫານຂອງລຸງຕະວີ ທີ່ບໍ່ຫວັ່ນໄຫວຕໍ່ສັດຕູຄືນີ້ເທື່ອໜຶ່ງ ລຸງແບກປືນຍ່າງໄປຕາມທາງ. ສັດຕູທີ່ລັ້ດຢູ່ແຄມທາງ ປ່ອຍໃຫ້ລຸງກາຍໄປກ່ອນ ແລ້ວກໍຕິດຕາມໄປນຳຫລັງ ເມື່ອໄປຈຳໂຕແລ້ວສັດຕູກໍຈັບດຶງປືນລຸງທີ່ແບກຢູ່ບ່າ ລຸງຄ້ວາໄດ້ພ້າເໜັບຢູ່ແອວຟັນມືສັດຕູຂາດກັບບ່ອນອັນນີ້ເປັນເຫດການໜຶ່ງທີ່ສະແດງໃຫ້ເຫັນຄວາມກ້າຫານເດັດດ່ຽວບໍ່ອ່ອນຍອມຕໍ່ສັດຕູ.

ຍັງມີເຫດການຫລາຍໆເທື່ອທີ່ລຸງຕະວີເອົາຊະນະສັດຕູໄດ້ຢ່າງໜ້າຍົກຍ້ອງຊົມເຊີຍ ເດັ່ນກ່ວາໝູ່ກໍແມ່ນການເອົາຖ່ານໄຟໂພະໃສ່ໂຕ. ຍ້ອນລຸງເປັນນັກຮົບທີ່ເດັ່ນສັດຕູຈຶ່ງພິປອງຈັບຫລາຍເທື່ອ. ມື້ໜຶ່ງຂອງລະດູໜາວ ລຸງຕະວີນັ່ງຢູ່ຂ້າງເຕົາໄຟມີສັດຕູຈຳນວນໜຶ່ງລ້ອມຈັບລຸງໂດຍທີ່ລຸງບໍ່ໄດ້ຄາດຝັນ ພໍຮູ້ສຶກຕົວກໍປາກົດວ່າ ຕົນເອງຢູ່ໃນວົງລ້ອມແລ້ວ, ຈະແລ່ນໜີກໍບໍ່ທັນຈະສູ້ກໍບໍ່ໄຫວ, ລຸງນັ່ງຄິດໃຊ້ສະໝອງຢູ່ຄາວໜຶ່ງແລ້ວກໍຕັດສິນໃຈເຮັດແນວໃດ ແນວໜຶ່ງລົງໄປ. ລຸງຢືນຂຶ້ນດ້ວຍທ່າທາງອົງອາດແກ້ເສື້ອອອກຢ່າງຫ້າວຫານ ສາຍຕາຂອງລຸງຈ້ອງໄປທາງໜ້າຢ່າງບໍ່ຫວາດຫວັ່ນ ຄືດັ່ງແສງຕາຂອງເສືອຮ້າຍ ທີ່ເພັ່ງໄປຍັງເບື້ອງໜ້າບ່ອນທີ່ມີຄູ່ຕໍ່ສູ້. ລຸງຈົ່ມນຸ່ມໆ ພໍສົບເໝັງຟັງບໍ່

ໄດ້ຖ້ອຍໄດ້ຄວາມ, ສັດຕູເຫັນອາການ ສະແດງ ອອກຂອງລູກກໍຮູ້ສຶກລັງເລໃຈ, ຈິດໃຈບໍ່ເຊື່ອໝັ້ນ. ພວກມັນເຂົ້າໃຈວ່າພວກກຳລັງຈີນມີນພວມສະແດງອະພິນິຫານ ແລະ ໃນບໍ່ຊ້ານີ້ກໍຈະແຜງລິດໃຫ້ເບິ່ງ. ໃນຄວາມເຊື່ອຂອງສັດຕູນັ້ນລູກຕະວີແມ່ນເປັນຄົນໜັງໜຽວ ຟັນບໍ່ເຂົ້າຍິງບໍ່ອອກ, ມີຂອງດີໃສ່ລອງຄົນຈົນຕາຍໄດ້ເຊັ່ນເອົາກະດູກ ຫລື ໜັງຄວາຍເຂົ້າທ້ອງຄົນໃຫ້ເຈັບປ່ວຍໄຊເຊແລ້ວຕາຍໄປໃນທີ່ສຸດນາມລູກແຜງລິດນັ້ນຄົນເປັນສິບເປັນຊາວແມ່ນກຸມບໍ່ຢູ່ ຄວາມເຊື່ອເຊັ່ນນີ້ເຂົ້າຫູສັດຕູຈາກຜູ້ໜຶ່ງໄປຍັງຫູຜູ້ໜຶ່ງ ແລະຕໍ່ໆໄປ ແລະຊົນຊາດຣອກກໍເປັນທີ່ຫວາດຫວັ່ນຂອງສັດຕູປານໜູຢ້ານແມວ.

ທັນໃດນັ້ນລູກຕະວີກໍຫອບເອົາກອງໄຟທີ່ມີຖ່ານແດງໆມີໄຟລຸກຢູ່ແລ້ວໂພະໃສ່ຕົນໂຕທັງດີດ ທັງເຕັ້ນ ທັງຮ້ອງແຜດສຽງ. ສັດຕູເຫັນແນວນັ້ນກໍຢ້ານສັ່ນເຊັນທີດງ ເພາະຄິດວ່າລິດເດດຂອງລູກພວມແກ່ກ້າຂຶ້ນສູງ ແລະ ບໍ່ມີອຳນາດອັນໃດຈະມາປາບໃຫ້ລົງໄດ້. ມີທາງດຽວທີ່ຈະປອດໄພຄືປົບໜີ, ດັ່ງນີ້ສັດຕູຈຶ່ງແລ່ນໜີໄວສຸດຂີດ ເອົາການເປັນນັກກິລາແລ່ນໄວທີ່ສຸດເທົ່າທີ່ໂລກເຄີຍເຫັນມາ.

ອັນນີ້ ເປັນ ອັນ ໜຶ່ງ ຂອງການສະແດງຄວາມກ້າຫານ

ຂອງລຸງຊຶ່ງບໍ່ມີໃຜຈະເຮັດໄດ້. ມັນທັງເປັນຕາຫົວເປັນຕາຢ້ານແລະເປັນໄຊຊະນະ.

ນອກຈາກຕໍ່ສູ້ກັບສັດຕູແລ້ວ ລຸງຕະວີຍັງຕໍ່ສູ້ກັບ ພະຍາດບາດເບົາ, ລຸງໃຊ້ປຸກຢາພື້ນເມືອງປິ່ນປົວຜູ້ເຈັບໄຂ້ໄດ້ປ່ວຍ, ເບິ່ງແຍງຮັກສາເຂົາເຈົ້າຄືດັ່ງລູກດັ່ງຫລານ. ເທື່ອໜຶ່ງມີການປະທະກັບສັດຕູ, ອ້າຍນ້ອງທະຫານຖືກບາດເຈັບ 4 ຄົນ, ລຸງຕະວີໄດ້ປິ່ນປົວຮັກສາປູ່ເປັນເວລາ 2 ເດືອນທະຫານກໍ່ສ່ວງເຊົາມີສຸຂະພາບດີ ສາມາດກັບຄືນເມືອກິນກອງໄດ້. ມີຊື່ສຽງໃນຖານະເປັນນັກຮົບຕໍ່ສູ້ແລ້ວລຸງຍັງມີຊື່ສຽງດ້ານໝໍຢາພື້ນເມືອງນຳອີກ. ປະຊາຊົນໃນເຂດອ້ອມແອ້ມເຈັບໄຂ້ໄດ້ປ່ວຍກໍ່ແລ່ນໄປຫາຂໍຢາ ຫລືຂໍໃຫ້ລຸງປິ່ນປົວໃຫ້. ການປິ່ນປົວແມ່ນບໍ່ຕ້ອງເອົາຫຍັງຕອບແທນ, ອ້າຍເອື້ອຍນ້ອງໄດ້ມີສຸຂະພາບເຂັ້ມແຂງ ເພື່ອຕໍ່ຕ້ານກັບສັດຕູໄດ້ນັ້ນລະຄືຄວາມພໍໃຈຂອງລຸງ, ບໍ່ມີອັນໃດເໜືອໄປກ່ວານີ້.

ຊີວິດການຕໍ່ສູ້ຂອງລຸງຕະວີ ເຖິງຈະກັນດານ ແລະຖືກພີປອງຈັບຫລາຍເທື່ອແຕ່ບັ້ນສຸດທ້າຍ ກໍ່ລອດໄປໄດ້ ແລະຍືນຍົງອາຍຸການ 66 ປີມາແລ້ວ. ລຸງຍັງບໍ່ລືມໄດ້ເມື່ອປີ 1955 ລຸງຖືກຈັບແລະຖືກສົ່ງຈາກຫລວງນ້ຳທາ ນາວຽງ

ຈັບ ແລະ ຖືກຂັງປູ່ຄ້າຍຈີນາຍໃນ້ ເປັນເວລາ 2 ເດືອນ. ຕອນນັ້ນ ລຸງເປັນປະທານຕາແສງສະແກນ ເມືອງນາແລ ແຂວງຫລວງນ້ຳທາ.

ເວລາທີ່ຮັບໜ້າທີ່ເປັນປະທານຕາແສງ ລຸງໄດ້ປຸກລະດົມຊົນຊາດຮອກໃຫ້ກາຍເປັນກຳລັງອັນສຳຄັນ ໃຫ້ແກ່ການປະຕິວັດ ແລະ ຊົນຊາດນີ້ ກໍມີ ວິລະກຳຫລາຍໆ ນັ້ນຝາກໄວ້ໃນປະຫວັດສາດຂອງການປະຕິວັດປົດປ່ອຍຊາດ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ບ້ານຕະຣອກໃຕ້ໃຈເດັດ

ໂດຍ: ອຸທິມ ບຸນຍາວົງ

ວັນໜຶ່ງໃນປີ 1951 ຄ້ອນໄຟກຸ້ມຂຶ້ນບໍລິເວນອ້ອມຄ້າຍປະລັ່ງ ທີ່ຕັ້ງຮັກສາການຢູ່ບ້ານຕະຣອກໃຕ້ ຕາແສງໂຈະ ເມືອງຕະໂອ້ຍ ແຂວງສາລະວັນ ໄຟໄດ້ໄໝ້ປ່າງວ່ອງໄວ ເພາະແມ່ນປ່າຫຍ້າຄາແລະລຸກລາມໄປ ຈົນເຖິງຄ້າຍໂດຍບໍ່ມີໃຜທັນມອດໃຫ້ດັບລົງໄດ້. ທະຫານປະລັ່ງເກີດໂກລະຫົນວົນວາຍແລ່ນໃຕ້ແລ່ນເໜືອ ເພື່ອຂົນຍ້າຍເຄື່ອງຂອງແດ່, ເພື່ອຕໍ່ສູ້ມອດໄຟແດ່ ຟັງສຽງຮ້ອງບອກສັ່ງກັນ, ສຽງຮ້າຍດ່າກັນດັ່ງເປັນວົນໆ ປະສົມກັບຄ້ອນໄຟທີ່ກຸ້ມໄປທົ່ວບໍລິເວນພາຍໃນຄ້າຍ ເບິ່ງແລ້ວມັນຄືໜ້ນະຮົກ ທີ່ພວມໝົກໄໝ້ຜູ້ທີ່ໄດ້ກະທຳຄວາມຊົ່ວຊ້າເລວຊາມ.

ແປວໄຟໄດ້ສູງຂຶ້ນເລື້ອຍໆ ເພາະໄຟເລີ່ມໄໝ້ຕົວຄ້າຍ. ສຽງສົບລະວົນຂອງຜູ້ຄົນເຣ່ງດັງບັນນອງ ຟັງບໍ່ໄດ້ຖ້ອຍໄດ້ຄວາມ. ທ່າມກາງຄວາມຊຸນລະມຸນວຸ່ນວາຍ ທີ່ເກີດຂຶ້ນໃນ

ຖ້າຍ, ບ້ານຕະຣວກໄດ້ຊ້ຳພັດຢູ່ໃນຄວາມສະຫງົບມິດມີ່ບໍ່ມີການແຕກຕື່ນບໍ່ມີການໃຫ້ຄວາມຊ່ວຍເຫລືອໃດໆແກ່ຄົນໃນຖ້າຍ, ເບິ່ງຄືວ່າບ້ານນີ້ບໍ່ມີຜູ້ຄົນອາໄສຢູ່ແມ່ນແຕ່ຄົນດຽວ.

ເມື່ອຄວບຄຸມໄຟໃຫ້ດັບມອດບໍ່ໄດ້ຟະລັ່ງ ແລະລູກມືຮັບໃຊ້ກໍພາກັນໜີອອກຈາກຖ້າຍ ຫົວເຄືອງຫົວຂອງເປັນນະຢຸ່ງນະບ່າງມຸ່ງໜ້າສູ່ບ່ອນປອດໄພ ແຕ່ໄປບໍ່ທັນຮອດຈຸດທີ່ໝາຍຄວາມຕາຍກໍຄອຍຖ້າຢູ່ກ່ອນແລ້ວ. ບໍ່ມີຄວາມປານີບໍ່ມີຄວາມສົງສານ ສຳລັບຜູ້ຮຸກຮານ ທີ່ມາເອົາບ້ານເພີ່ນເປັນບ້ານໂຕ. ຜູ້ຮັກຊາດຈຳນວນໜຶ່ງທີ່ຈອບຢູ່ແຄມທາງໂດຍມີໄມ້ຄ້ອນເປັນອາວຸດໄດ້ພຸດອອກ ຈາກ ພຸ່ມ ໄມ້ ແລ້ວຫລຸບໃສ່ຟະລັ່ງນັກລ່າຫົວເມືອງຂຶ້ນ ທີ່ບໍ່ທັນຕັ້ງໂຕ, ສຽງບຸບບັບບຶມບຳຂອງໄມ້ຄ້ອນ ທີ່ຟາດບ່ອນບີລົງໃສ່ກະບານຫົວແລະຕົນຕົວຂອງນັກລ່າຫົວເມືອງຂຶ້ນດັງປົນເປກັບສຽງຮ້ອງຈົ້ກຈ້າກໄດ້ດຳເນີນໄປເປັນເວລາສົມຄວນ, ແລ້ວສຽງໄຊໂຍໂຮ່ຮ້ອງກໍດັງກ້ອງຂຶ້ນຢ່າງຟົດສະນັ່ນ. ນັນແມ່ນສຽງໂຮ່ຮ້ອງຂອງຊາວບ້ານຕະຣວກໄດ້ຊຶ່ງກ່ອນໜ້ານີ້ໜ້ອຍໜຶ່ງນັ້ນພາກັນມິດມີຄົງຫອບໄຂ້. ບັດນີ້ເຂົາເຈົ້າເປັນຜູ້ຍາດໄດ້ໄຊຊະນະໂດຍການໃຊ້ອາວຸດພື້ນຖານ ຂອງຍຸກດຶກດຳບັນສູ້ກັບຜູ້ມີອາວຸດທັນສະໄໝທີ່ມາກົດຂີ່ຂົ່ມເຫັງເຂົາເຈົ້າ ແລະ

ສົງພວກນັກລ່າເມືອງຂຶ້ນ ຜະລັ່ງໄປລົງນະຣົກຈຳນວນ 9 ຄົນ.

ປະກົດການອັນອົງອາດກ້າຫານຄັ້ງນີ້ເກີດຂຶ້ນໄດ້ກໍຍ້ອນນ້ຳໃຈຮັກຄວາມເປັນເອກະລາດ ຮັກຄວາມເປັນທຳ ຮັກອິດສະລະພາບ, ເກີດຂຶ້ນໄດ້ຍ້ອນນ້ຳໃຈສາມັກຄີເດັດດ່ຽວຢາກຂັບໄລ່ສັດຕູອອກຈາກເຂດບ້ານຂອງເຂົາເຈົ້າ. ຊາວບ້ານນີ້ເລີ້ມຕ້ານກັບຜະລັ່ງນັບແຕ່ປີ 1950 ເປັນຕົ້ນມາໂດຍໃຊ້ອາວຸດພື້ນບ້ານພື້ນເມືອງທຸກຊະນິດທີ່ຫານາໄດ້, ທີ່ໄຄແດ່ກໍມີປືນແກັບ ປືນເພີງ ໜ້າ:ໜ້ອງ. ວິທີທີ່ໄດ້ຜົນກໍຄືການລັດຈອບຍິງໂດຍທີ່ສັດຕູບໍ່ທັນຮູ້ຕົວເຮັດໃຫ້ສັດຕູ ຢູ່ຍາກໄປຍາກ ມີຄວາມເດືອດຮ້ອນບໍ່ປຸດບໍ່ຢ່ອນ ບ່ອນໃດກໍບໍ່ມີຄວາມປອດໄພສຳລັບເຂົາ.

ຫລັງຈາກຄ້າຍຖືກຈູດແລ້ວ ຜະລັ່ງກໍບໍ່ມາຕັ້ງຄ້າຍໃສ່ບ້ານນີ້ອີກ. ດົນໆ ກໍສົ່ງທະຫານມາກວາດລ້າງເທື່ອໜຶ່ງ ແຕ່ທຸກເທື່ອທີ່ມາກວາດລ້າງແນວລາວ ພວກເຂົາກໍພົບກັບຄວາມລົ້ມແຫລວ ແລະ ຫລາຍໆເທື່ອເຂົາຫາບຄວາມຕາຍຂອງທະຫານເຂົາເອງກັບຄືນເມືອ. ບໍ່ມີທາງທີ່ເຂົາຈະຈັບແນວລາວໄດ້ ເພາະຊາວບ້ານເອງ ເປັນໃຈພວກແນວລາວຊຸກເຊື່ອງແນວລາວ, ສົ່ງເຂົ້າປາອາຫານໃຫ້ແນວລາວ

ແລະ ສົ່ງລູກຫລານໄປເປັນທະຫານແນວລາວ ຈຳນວນ ຫລາຍທີ່ສຸດເພື່ອຕໍ່ສູ້ປົດປ່ອຍຊາດ.

ເພາະບ້ານຕະຮອກໄດ້ເປັນຈຸດຍຸດທະສາດສຳຄັນ, ປະລັ່ງ ນັກລ່າຫົວເມືອງຂຶ້ນ ບໍ່ຍອມງ່າຍໆ ທີ່ຈະເຊົາຄອບຄຸມຂົງເຂດແຫ່ງນີ້ ເຖິງວ່າຈະໄດ້ຮັບບົດຮຽນອັນເຈັບແສບປານໃດກໍຕາມ. ຕົກມາໃນປີ 1952 ປະລັ່ງໄດ້ມາຍັງບ້ານນີ້ອີກ ເພື່ອວາງແຜນຈະຕັ້ງຄ້າຍຄືດັ່ງທີ່ເຄີຍຕັ້ງມາ ໂດຍຈະເອົາທະຫານມາລົກ ລູກມືທີ່ບອກໄດ້ໃຊ້ຟັງມາປະຈຳ. ອັນຊື່ສຽງຂອງພວກທະຫານມາລົກນັ້ນ ປະຊາຊົນລາວເຮົາຮູ້ຈັກດີວ່າ ເກັ່ງໃນດ້ານຂົ່ມເຫັງເດັງເດັກ, ຂົ່ມຂືນຊຳເລົາແມ່ຍິງທັງທີ່ມີຜົວແລ້ວຫລືຍັງເປັນແສ້ເປັນສາວຢູ່, ເປັນໄພໃຫຍ່ຫລວງສຳລັບປະຊາຊົນເຮົາ, ຊາວບ້ານຮູ້ຈຸດປະສົງຄືແນວນັ້ນ ກໍເປັນຈິດໜຶ່ງໃຈດຽວກັນເດັດຂາດ ບໍ່ຍອມໃຫ້ຄ້າຍຕັ້ງຂຶ້ນໄດ້ອີກ. ແຕ່ການທີ່ຈະຕໍ່ສູ້ໂດຍກົງກັບສັດຕູ ຊຶ່ງມີອາວຸດທັນສະໄໝ ຈະເກີດຜົນເສຍຫາຍລົ້ມຕາຍຫລາຍ ໂດຍສະເພາະຊີວິດ ຂອງ ຊາວບ້ານລາດສະດອນ, ຖ້າຈະຕໍ່ສູ້ໂດຍເຮັດເປັນກອງຫລອນ ນາໂຈມຕີເປັນບາງຄັ້ງບາງຄາວ ສັດຕູກໍຈະຕັ້ງຄ້າຍຂຶ້ນຢ່າງໜັ້ນໜາ ແລະ ເປັນເຈົ້າການໃນແຖບນີ້ ແລ້ວກົດຂີ່ຂົ່ມເຫັງ ຊາວບ້ານ ຕາມລຳເພີໃຈຂອງ

ເຂົາ ອັນເປັນເລື່ອງທີ່ຍອມບໍ່ໄດ້. ໃນທີ່ສຸດ ຊາວບ້ານທັງໝົດ ກໍຕັດສິນໃຈເຮັດແບບສັດຕູຄາດຄິດບໍ່ເຖິງ. ເຂົາເຈົ້າພາກັນຈູດບ້ານຖິ້ມເປັນເຖົ້າຖ່ານ, ແປວໄຟລຸກວົງສົ່ງຄວັນສີດຳລອຍສູງຂຶ້ນໄປໃນທ້ອງຟ້າ, ມັນເປັນການເສຍສະຫຼະຄັ້ງມະຫາສານເພື່ອແລກເອົາຄຳວ່າ ອິດສະລະພາບທີ່ເຂົາເຈົ້າ ສຸດທີ່ຮັກ ສຸດທີ່ຫວງແຫນ. ບໍ່ມີອິດສະລະພາບກໍແຫນງວ່າ ບໍ່ມີບ້ານຢູ່ດີກວ່າ, ມີຄ້າຍຟະລັ່ງກໍແຫນງວ່າ ບໍ່ມີບ້ານຕະຣອກໄດ້ດີກວ່າ, ເຂົາເຈົ້າ ໄດ້ຕັດສິນໃຈ ຄືແນວນີ້ແລ້ວ ເຂົ້າປ່າຫາຢູ່ຫາກິນຕາມພູຜາປ່າໄມ້ຢ່າງອິດສະລະເສລີ ປາດສະຈາກການກົດຂີ່ຂົ່ມເຫັງໃດໆ.

ບັນດາ ຜູ້ບໍ່ຍອມກົ້ມຫົວ ໃຫ້ນັກລ່າຫົວເມືອງຂຶ້ນເຫລົ່ານີ້ພາກັນປຸກຕູບນ້ອຍຢູ່ຕາມກ້ອງຮົ່ມໄມ້ ຫາຫົວເຜືອກຫົວມັນ ປູກມັນຕົ້ນປູກສາລີກິນ ແລະ ຫາລ່າສັດປ່າ ທີ່ມີຢ່າງອຸດົມສົມບູນ ເພື່ອມາລ້ຽງຊີບ. ເຂົາເຈົ້າຢູ່ກິນຢ່າງເປັນລະບຽບ ເຊື່ອຟັງຕໍ່ຜູ້ນຳ ແລະ ທຸ່ນທ່ຽງສະເໝີຕົ້ນສະເໝີປາຍ ບໍ່ມີໃຜຄອນແຄນ. ເພື່ອຕິດຕາມຂ່າວການເຄື່ອນໄຫວຂອງສັດຕູກໍມີການຈັດຕັ້ງພາກສ່ວນລອດແນມ, ພາກສ່ວນນີ້ໄດ້ເຄື່ອນໄຫວທຸກລະບະ ເພື່ອຕິດຕາມເບິ່ງວ່າ ສັດຕູຈະຕັ້ງຄ້າຍໃສ່ບ້ານຕະຣອກໄດ້ຫລືບໍ່. ເວລາໄດ້ຜ່ານໄປເປັນດົນໆ

ກໍບໍ່ມີວີແວວວ່າຄ້າຍຈະເກີດຂຶ້ນໄດ້, ແມ່ນແຕ່ເງົາຂອງສັດ ດູກໍບໍ່ເຫັນມາຜ່ານມາກາຍ.

ໃນທີ່ສຸດຊາວບ້ານກໍອອກຈາກປ່າຄືນສູ່ບ່ອນທີ່ເຄີຍເປັນ ບ້ານຕະຮອກໄຕ້ ພາກັນສືບສ້າງ ປຸກຕັ້ງເຮືອນຊານຂຶ້ນໃໝ່, ອອກແຮງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ຕາມປະເພນີອັນດີງາມ. ບໍ່ເຫິງບ້ານຕະຮອກໄຕ້ກໍກັບຟື້ນຄືນຊີບຂຶ້ນມາໃໝ່ ມີນ້ຳໃຈເດັດດ່ຽວກ້າແຂງຄືເກົ່າ. ສຽງໄກ່ຂັນ ສຽງເປັດຮ້ອງ ສຽງໝາເຫົ່າ ສຽງຕຳເຂົ້າ ດັ່ງປະສົມປະສານກັນ ສະແດງວ່າ ຊີວິດຂອງຊາວບ້ານ ດຳເນີນໄປຢ່າງເປັນປົກກະຕິ ອີກເທື່ອໜຶ່ງ.

ບ້ານຕະຮອກໄຕ້ ກາຍເປັນບ່ອນອີງ ໃຫ້ແກ່ ການປະຕິວັດປົດປ່ອຍຊາດ ເປັນແຫຼ່ງເຂົ້າປາອາຫານ ໃຫ້ພະນັກງານປະຕິວັດ ເປັນແຫຼ່ງກຳລັງຄົນ ເພື່ອເສີມຂະຫຍາຍກຳລັງປະຕິວັດ, ເປັນແຫຼ່ງຂອງນັກຕໍ່ສູ້ທີ່ເດັດດ່ຽວໝຽວແໜ້ນ. ເຂົາເຈົ້າມີແນວຄິດກ້າວໜ້າ ເຫັນແຈ້ງທິດທາງເດີນເສັ້ນທີ່ປອດໃສ ແລະ ມີວິທະຍາສາດ ທັງນີ້ກໍໂດຍການຮຽນຮູ້ແນວຄິດໃໝ່ໆ ຈາກພະນັກງານປະຕິວັດ ທີ່ມາຂົນຂວາຍພົວພັນຢູ່ບ້ານເຂົາເຈົ້າເປັນປະຈຳ. ປະກົດການອັນໜຶ່ງ ທີ່ສະແດງເຖິງແນວຄິດກ້າວໜ້າບໍ່ງົມງວາຍກໍຄືເຂົາ

ເຈົ້າໄດ້ພາກັນແຫ່ຂະບວນປະນາມ ຜີອາຮັກຫລັກເມືອງຜີເຊື້ອຜີດ້າແລະບັນດາຜີຕ່າງໆທີ່ຊາວບ້ານເຄີຍນັບຖືກັນມາ, ວ່າ ຜີເຫລົ່ານີ້ ພາກັນຂັດຂວາງ ຄວາມກ້າວໜ້າ ເຮັດໃຫ້ຊາວບ້ານ ທຸກຍາກ ລຳບາກໄປໜ້າຊັກໄຊ້ ເພາະຕ້ອງໄດ້ເສຍເງິນ ເສຍຄຳ ເສຍສັດລ້ຽງເຊັ່ນ ໝູ, ໄກ່, ງົວ ຄວາຍໂດຍການເອົາໄປແກ້ບະ ຫລື ຂ້າສັງເວີຍປະຈຳປີ.

ພາກັນກ່າວປະນາມແລ້ວ ເຂົາເຈົ້າກໍກ່າວ ປະຕິຍານຈະປຸດເຊົາການນັບຖື ຜີສາງນາງໄມ້ຕ່າງໆ ອັນນີ້ເປັນຕົວຢ່າງໃຫ້ແກ່ປະຊາຊົນໃນບ້ານອື່ນໆ ທີ່ຍັງງົມງວາຍເຊື່ອສິ່ງທີ່ຝືນວິທະຍາສາດ.

ຕົກມາສະໄໝສົງຄາມ ຕໍ່ຕ້ານຈັກກະພັດ ອາເມລິກາບ້ານຕະຮອກໃຕ້ ກາຍເປັນບ້ານຕ້ອງຫ້າມໝາຍຄວາມວ່າທະຫານຫຸ່ນ ຜ່ານກາຍໄປແມ່ນບໍ່ໄດ້, ຖ້າດື້ດ້ານກໍແມ່ນຕາຍຫລືຖືກຈັບເປັນ, ດັ່ງນີ້ ເວລາໃດສັດຕູເຄື່ອນໄຫວໄປເຂດບ້ານຕະຮອກໃຕ້ ຈຶ່ງພົບແຕ່ຄວາມປະລາໄຊຄວາມຫາຍະນະ. ເມື່ອເຫັນວ່າມີແຕ່ເສຍປຽບ ເປັນທີ່ອັບອາຍຂາຍໜ້າ ຈັກກະພັດອາເມລິກາ ກໍສະແດງຄວາມ ໃຈດຳອະມະຫິດ ໂດຍໃຊ້ອາວຸດເຄມີທຳລາຍບ້ານຕະຮອກໃຕ້ ເພື່ອຫວັງດັບສູນກຳລັງປະຕິວັດໃຫ້ໝົດສິ້ນໄປຈາກບ້ານນີ້, ຜົນລະ

ປູກຖືກທຳລາຍຕົ້ນໄມ້ໃບຫຍ້າຕາຍແຫ້ງຫ່ຽວ, ຫລຽວໄປທາງໃດມີແຕ່ພາບອັນເສົ້າສະຫລົດຫົດຫູ່ໃຈ, ຊີວິດສ່ວນໜຶ່ງລົ້ມຫາຍວາຍໄປ ແຕ່ຊີວິດທີ່ຍັງຢູ່ລຸກຂຶ້ນສືບຕໍ່ມູນເຊື້ອພິລະອາດຫານ, ເດັດດ່ຽວໜຽວແໜ້ນກ່ວາເກົ່າ.

ຜ່ານການທົດສອບໃນແປວໄຟແຫ່ງສົງຄາມຕໍ່ສູ້ກູ້ຊາດ ຊາວບ້ານດະຣອດໃຕ້ ຊຶ່ງປັດຈຸບັນມີຢູ່ 78 ຄອບຄົວບຳກັບຢືນຢູ່ປ່າງສະງ່າອົງອາດ, ເຂັ້ມແຂງຄືຫີນຜາ, ພາກັນບຸກໜ້າບືນຕົວ ເພື່ອກໍ່ສ້າງ ສັງຄົມນິຍົມ ອັນເປັນຈຸດໝາຍປາຍທາງ ຂອງເຂົາເຈົ້າ.

ບຸນລົ້ງ ແກ້ວບົວສາຍ
ສ. ສາຍບຸນມີ

# ຄວາມຟິດຟື້ນຂອງໄວຄະນອງປະຕິວັດ

* ເມື່ອເວົ້າເຖິງການ ກຸມສະໜາມ ໃຫ້ແກ່ບັ້ນຮົບ ຫ້ວຍໃຍ ພວກເຮົາແມ່ນບໍ່ອາດລືມສະຫາຍ ສະແຫວງໄດ້, ເວົ້າແທ້ ສະຫາຍສະແຫວງ ບໍ່ແມ່ນນັກຮົບວິຊາສະເພາະ ສືບຂ່າວດອກ, ແຕ່ສະຫາຍ ກໍເຄີຍໄດ້ເຂົ້າຮ່ວມປະຕິບັດ ວຽກງານສືບຂ່າວມາຄັ້ງຫລາຍຄັ້ງຫລາຍຫົນ ແລະ ກາຍ ເປັນຜູ້ຄົ້ນຄໍໃນການເຮັດສຳເລັດໜ້າທີ່ມາຄັ້ງຫລາຍເທື່ອ.

ພູຫ້ວຍໃຍ ເປັນຜາຫີນໜ່ວຍໜຶ່ງ ທີ່ສູງຊັນຫາທາງ ຂຶ້ນໄດ້ຍາກ.. ດັ່ງນັ້ນການເຄື່ອນໄຫວສືບຂ່າວຂອງເຂົາເຈົ້າ ຈຶ່ງເປີດໂອກາດໃຫ້ຄວາມຫຍຸ້ງຍາກຕ່າງໆ ບາງ ບູທ່າງ ທົດສອບຈິດໃຈປະຕິວັດຂອງເຂົາເຈົ້າ. ໃນບັ້ນນີ້ ກ້າວທຳ ອິດທີ່ເຂົາໄດ້ພົບນັ້ນຄື: ຕ້ອງເຮັດຂັ້ນໄດເພື່ອກ່າຍຂຶ້ນຫລັງ ຜາຈົນເຖິງ 45 ວັນຈຶ່ງສຳເລັດ: ເມື່ອກ່າຍຂັ້ນໄດຂຶ້ນແລ້ວ, ເຂົາເຈົ້າຄຶດວ່າຈະໄດ້ປະຕິບັດໜ້າທີ່ແຕ່ລະບາດກ້າວ ຕາມ ທີ່ໄດ້ວາດໄວ້ກ່ອນ, ແຕ່ສິ່ງທີ່ເຂົາໄດ້ພົບ ແລະ ພວມພົບ

ຢູ່ໃນຂະນະນີ້, ເຖິງວ່າເປັນອຸປະສັກຂັ້ນຕົ້ນ ແຕ່ກໍແມ່ນຫລາຍຫລິບຫລາຍຕ່າວແລ້ວ, ຂັ້ນໄດທີ່ເຂົາໄດ້ເຮັດຂຶ້ນດ້ວຍຄວາມມານະພະຍາຍາມ ແລະ ເວລາຍາວສົມຄວນນັ້ນ ດອກມັດບາງບ່ອນກໍໄດກກໍຸ່ ອັນເຮັດໃຫ້ມີສຽງດັງໃນເວລາທີ່ເຂົາປີນຂັ້ນໄດເພື່ອເຄື່ອນໄຫວປະຕິບັດໜ້າທີ່. ເມື່ອຍິນສຽງຜິດປົກກະຕິດັ່ງຂຶ້ນສັດຕູເທິງປິດ ກໍພາກັນປ່ອງບ້າຍິງປືນ, ຄ່ວາງລະເບີດສຸມມາໃສ່ທິດທີ່ເປັນຕາສົງໄສນັ້ນຢ່າງດຸເດືອດ.

20 ນາທີແລ້ວທີ່ສັດຕູ ໄດ້ເຮັດຟ້າ ເຮັດໄຟນຳລົມນຳແລ້ງ ຕາມຄວາມຫວັ້ນກົວຂອງພວກເຂົາ. ໃນສະພາບແນວນັ້ນ ເຂົາຈຳຕ້ອງໄດ້ຫລົບຫລີກ, ລີ້ຊ່ອນຕາມຕີນຜານິ່ງນັ້ນໃນທ່າກຽມພ້ອມຮັບມືກັບທຸກສິ່ງ ທຸກຢ່າງທີ່ອາດຈະເກີດຂຶ້ນ; ແຕ່ແລ້ວເຫດການທີ່ເກີດຂຶ້ນນັ້ນພັດງຽບສະຫງັດລົງໃນຫ່ວງເປົ່າປ່ຽວຂອງທຳມະຊາດ.

ເມື່ອສະພາບປົກກະຕິແລ້ວ, ເຂົາເຈົ້າຈຶ່ງສືບຕໍ່ແປງຂັ້ນໄດອີກເພື່ອໃຫ້ຮັບປະກັນດີ, ແລະ ພ້ອມກັນໄປສືບສະພາບອີກເປັນຄັ້ງທີ່ສອງ. ເຂົາຄ່ອຍຄືບ, ຄ່ອຍຄານຕາມພູຫີນລາງດ້ວຍຄວາມລຳບາກ. ຍາມນັ້ນຮ່າງກາຍ ແລະ ມານະຈິດໃນໄວຄະນອງຂອງເຂົາເຈົ້າ ບອກຈາກເຂົາຕ້ອງປະ

ສົບພົບພໍ້ກັບອຸປະສັກຂອງທຳມະຊາດທົດສອບແລ້ວ, ເຂົາຍັງໄດ້ອາດຫານຜ່ານຜ່າ ທ່າກະສຸນອັນຮ້າຍແຮງຂອງສັດຕູ. ອຸປະສັກເຫລົ່ານັ້ນເຖິງວ່າ ເປັນເລື່ອງທີ່ທຸລະກັນດານ ແລະ ເປັນເລື່ອງ ທີ່ຍ່າງຜ່າໄປດ້ວຍຄວາມຝືດເຄືອງປານໃດກໍຕາມ, ແຕ່ມັນກໍບໍ່ສາມາດທີ່ຈະເອົາຊະນະກັບຄວາມອາດຫານ ທຸ່ນທ່ຽງບົນຈິດໃຈກ້າສູ້ ແລະກ້າເອົາຊະນະກັບສັດຕູຂອງໂວຄະນອງປະຕິວັດນີ້ໄດ້, ຈິດໃຈຮັກຫອມຊີວິດໃໝ່ໃນເຂດປົດປ່ອຍ ແລະ ຄວາມບານແປ້ນຂອງທັດສະນີຍະພາບແຫ່ງບ້ານເກີດເມືອງນອນ ໄດ້ຊຸກຍູ້ໃຫ້ຈິດໃຈຂອງເຂົາເຈົ້າຮູ້ສຶກສົດຊື່ນ ແລະ ເປັນກຽດໃນຊີວິດແຫ່ງຄວາມກ້າວໜ້າທີ່ເຂົາໄດ້ຢືນຢູ່ແຖວໜ້າຂະບວນ ຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ແລະ ລູກມື. ດັ່ງນັ້ນເຖິງວ່າເຂົາຈະຕ້ອງຕາກໜອກແຂ່ງຝົນ, ນອນດິນເກືອກຝຸ່ນ ແລະ ເປັນເຫຍື່ອຮິ້ນ ເຫຍື່ອຍຸງຈົນເກືອບໄລຍະ 2 ເດືອນ, ເຂົາກໍມີຄວາມກະຕືລືລົ້ນທີ່ສຸດ ທີ່ເຂົາໄດ້ເປັນຜູ້ກະກຽມເງື່ອນໄຂສະດວກຕ່າງໆ ໃຫ້ແກ່ໄຊຊະນະທີ່ຈະມາເຖິງເຂົາເຈົ້າໃນບໍ່ຊ້ານີ້.

ໃນບັນບຸກໂຈມຕີເທື່ອນີ້ ເຂົາໄດ້ແບ່ງອອກເປັນ 2 ປີກ. ສ່ວນສະຫາຍສະແຫວງ ໄດ້ຖືກບັນຈຸເຂົ້າໃນປີກທີ 1 ທີ່

ເປັນປີກຈຸດໜັກ ແລະ ທັງເປັນປີກທີ່ໃຊ້ດິນລະເບີດເຂົ້າເລິກ ເພື່ອທຳລາຍເຮືອນກອງບັນຊາການ ແລະ ເຮືອນສື່ສານຂອງສັດຕູ. ໃນຄ່ຳຄືນທີ່ເດິກດື່ນ ແລະ ງຽບສະຫງັດນັ້ນ ສະພາບອ້າບບ້ອງຢູ່ໃດ ກໍ່ຖ້າສຽງສັນຍານອັນໜັກແໜ້ນ ແລະ ແນ່ນອນທີ່ຈະກ້ອງກັງວານ ຂຶ້ນໃນໃຈກາງປີກຂອງສັດຕູດ້ວຍຈິດໃຈເຄັ່ງຮ້ອນ ອີທີ່ລະອີກລໍ. ແຕ່ບາທີ່ແຫ່ງການຄອງຄອຍນັ້ນ ພັດປະກົດວ່າຢູ່ຫ່າງໄກເຂົາເອົາເທ້ງ. ຈົນເຖິງ 1 ໂມງດອນເດິກສຽງກ້ອງຂອງດິນລະເບີດທີ່ເປັນສຽງສັນຍານໃຫ້ແກ່ການເປີດສາກບຸກໂຈມຕີສັດຕູເທື່ອນີ້ ຈຶ່ງລະເບີດຂຶ້ນຈົນກ້ອງຟ້າສະເທືອນດິນ ແລະ ເຮັດໃຫ້ເຮືອນແຖວຢູ່ເຄິ່ງກາງປົດ 2–3 ຫລັງນັ້ນຫັກພັງທະລາຍ.

ພ້ອມໆກັບສຽງແຜດເໝືອນຟ້າຜ່າ ທີ່ເປັນໜ້າຢ້ານກົວສຳຫລັບສັດຕູນັ້ນ, ສຽງປືນບຸກໂຈມຕີແບບທາງໃນຕີອອກທາງນອກຕີເຂົ້າ ກໍດັງຂຶ້ນຢ່າງສິບລະວົນ, ເຮັດໃຫ້ສັດຕູຕ້ອງຫງາຍຄາງກິນນ້ຳໝອກຢູ່ເທິງຈຸດສູງນັ້ນ 28 ຄົນ,ທຳລາຍສາງລູກປືນສາງໜຶ່ງ, ທຳລາຍເຮືອນ 9 ຫລັງໂທລະເລກເຄື່ອງໜຶ່ງ, ທຳລາຍປືນເດກາ 2 ກະບອກ, ຍຶດປືນກົນມື 28 ບອກ ຈັບສັດຕູເປັນສະເລີຍ 2 ຄົນໃນນັ້ນສະຫາຍສະແຫວງເອງຂ້າສັດຕູ ຄາທີ່ 4 ຄົນ, ທຳລາຍເຮືອນຫລັງ

ໜຶ່ງ, ໂຫລະເລກເຄື່ອງໜຶ່ງປືນ ເດກາ 1 ກະບອກ ແລະ ເຄື່ອງຂອງຕ່າງໆຈຳນວນໜຶ່ງອີກ.

ຈາກເຫດການທີ່ເວົ້າມາແລ້ວນັ້ນ: ພວກເຮົາຍັງຈື່ໄດ້ດີຢູ່ວ່າ: ໃນເນັ້ນຣົບ ນາຫໍ່ໄຊໃນທ້າຍເດືອນ 3 ປີ 1973. ສະໜາມຣົບດັ່ງກ່າວ ເຖິງວ່າມີສິ່ງກີດຂວາງເຖິງ 2 ຊັ້ນຄື ລ້ອມດ້ວຍສະລາມໄມ້ 2 ຊັ້ນ ແລະ ລວດໜາມອີກ 2 ຊັ້ນ, ແຕ່ສະຫາຍກໍ່ຜ່ານຜ່າ, ສືບສະພາບໄດ້ຢ່າງລະອຽດລະອໍ ໃນບັນໂຈມຕີສັດຕູເທື່ອນີ້, ສະຫາຍເອງ ນອກຈາກໄດ້ສຳເລັດໜ້າທີ່ໃຈກາງແລ້ວ ສະຫາຍຍັງເປັນນັກຍິງປືນຕ້ານລົດຖັງ ແລະ ທັງເປັນນັກຣົບດີນລະເບີດຜູ້ສຳຄັນອີກ.

ໃນທ່າມກາງຄວັນເຫມື້ ຄວັນເຈນກຸ້ມກື້ໄປທົ່ວບໍລິເວນ ສຽງລະເບີດ ລູກປືນດັງວັ່ນໄມ້ ໃນຫ້າຂອບເຂດນັ້ນ ຈົນກຸດຈົນທັງນ້ອຍສຽງດັງນາບຊູ່ເປັນຕາຢ້ານ ແຕ່ສະຫາຍກໍ່ບໍ່ໄດ້ຫວາດຫວັ່ນ ແລະງ້ຳທ່ຽງສິ່ງເຫລົ່ານັ້ນແຕ່ປະການໃດ, ສະຫາຍໄດ້ແລ່ນຕະລຸມບອນກ່ອນໝູ່ແຕ່ບັງເອີນສັດຕູ 2 ນັກ ກໍ່ກະໂດດເຂົ້າມາປໍ້າສະຫາຍ, ເວລານັ້ນ ເຖິງວ່າສະຫາຍລົ້ມຟຸບລົງ ແລະ ຖືກສັດຕູນັກໜຶ່ງເອົາທ້າຍປືນແອນ 16 ທັບແອວສະຫາຍໜັດແຮງ ແຕ່ສະຫາຍກໍ່ຍັງບໍ່ຍອມປະສັດຕູທີ່ຢູ່ໃນວົງແຂນ ແລະ ພວມລອງລິດ ລອງເດດກັນ

ຢ່າງເອົາເປັນເອົາຕາຍຢູ່ ການລອງແຮງກັນໃນໄລຍະຫຼາຍນາທີ ແລະ ຜັນແປໄປຢ່າງດຸເດືອດກັບດານ. ເພື່ອເອົາຕົວລອດ, ສັດຕູຜູ້ຢູ່ໃນທ່າຄອນແຄບນັ້ນກໍຟ້າວປິບຕາຍໜີຢ່າງອົກສັ່ນຂວັນເສຍ, ແຕ່ແລ້ວຊາຕາກຳຂອງພວກມັນທັງສອງນັ້ນເຖິງວ່າຈະມີປີກບິນ ກໍ່ຫາກບໍ່ສະມາດຫລີກໃຫ້ພົ້ນໜ້ນະຣົກໄດ້.

ພາຍຫລັງໄດ້ລົງໂທດສັດຕູຢ່າງສົມນ້ຳໜ້າແລ້ວ, ຍ້ອນຄວາມອິດເມື່ອຍ ແລະ ເຈັບປວດເຫລືອວິໄສ, ສະຫາຍໄດ້ສະຫລົບໄປຈົນ 10 ກວ່ານາທີຈຶ່ງຮູ້ເມື່ອຄືງ. ໃນບັ້ນຮົບບັ້ນນີ້ເຂົາເຈົ້າຂ້າສັດຕູຕາຍ 10 ຄົນ, ເຮັດໃຫ້ບາດເຈັບ 8 ຄົນຈັບໄດ້ 4 ຄົນ, ຢຶດປືນກົນມື 11 ບອກທຳລາຍເຮືອນສັດຕູ 13 ຫລັງ, ຈັກໂຟນີ 2 ເຄື່ອງ ເວົ້າສະເພາະ ສະຫາຍສະແຫວງ ຂ້າສັດຕູ 2 ຄົນ, ຈັບໄດ້ຜູ້ໜຶ່ງ, ທຳລາຍຈັກໂຟນີເຄື່ອງໜຶ່ງ ແລະທຳລາຍເຮືອນສັດຕູ 4 ຫລັງ.

ບັນດາເພື່ອນແລະ ສະຫາຍທີ່ຮັກແພງ, ບົດເລົ່າເລື່ອງຈາກເລື່ອງຂອງສະຫາຍສະແຫວງບໍ່ທັນໝົດເທື່ອ.

ເມື່ອທວນຄິດຄືນເຫດການຕ່າງໆ ທີ່ຜັນແປໃນບັ້ນຮົບຜາກຸງ, ຮູບພາບທີ່ສະຫງ່າອົງອາດເປັນເງົາບາງໆກໍ່ໄດ້ສາງຜ່ານຮ່ວງນຶກຄິດຂອງພວກເຮົາ ໄປຢ່າງໄວວາທີ່ສຸດ, ແຕ່

ເຫດການທີ່ໄດ້ຜ່ານຂ້າມໄປດ້ວຍຄວາມຫຍຸ້ງຍາກກັນດານ ແຕ່ສຸດທີ່ພິລະອາດຫານນັ້ນ ມັນພັດໄດ້ສ່ອງແສງໃຫ້ເຫັນຄຸນສົມບັດສິນທຳປະຕິວັດ ຂອງໄວກະນອງປະຕິວັດ ອັນເຮືອງຮຸ່ງແຫ່ງລັດທິວິລະຊົນປະຕິວັດ ນີ້ຢ່າງໝົດຈິດໝົດໃຈ.

ສະຫາຍ ສະແຫວງແມ່ນແພດປະຈຳປູ່ກອງຮ້ອຍ ຣ. ແຂວງຫລວງພະບາງ, ໃນເວລາທີ່ເຂົາເຈົ້າປະຈຳປູ່ຈຸດສູງດັ່ງກ່າວ, ອຸປະສັກຕ່າງໆນາໆ ໄດ້ພັດປ່ຽນກັບສະແດງແຜງລິດຢ່າງບໍ່ມີມື້ຢ່າມື້ເຊົາ. ຈິດໃຈທີ່ກ້າຫານຂອງເຂົາເຈົ້າຍິ່ງໄດ້ປະສົບພົບພໍ້ກັບຄວາມທຸລະກັນດານຫລາຍທໍ່ໃດ ກໍຍິ່ງເສີມໃຫ້ບົດບາດ ແລະ ຄຸນສົມບັດປະຕິວັດຂອງເຂົາເຈົ້າມີຄວາມສຳຄັນຢ່າງໜ້າອັດສະຈັນຍິ່ງຂຶ້ນ.

ມີເທື່ອໜຶ່ງ ໃນຂະນະທີ່ສະຫາຍປະຕິບັດໜ້າທີ່ປູ່ຜາຫຸງ ບ່ອນທີ່ມີເງື່ອນໄຂຫຍຸ້ງຍາກສັບສົນກວ່າໝູ່ໃນຂອບເຂດນັ້ນ, ເຂົ້າກໍຂາດເຂີນ, ນ້ຳກໍອຶດ ແຕ່ສັດຕູພັດປ່ອງບ້າໄສດາຍທຳການບຸກໂຈມຕີບໍລິເວນດັ່ງກ່າວ ຢ່າງລຽນຕິດ. ດັ່ງນັ້ນ ຈຳນວນພົນທີ່ມີໜ້ອຍເກັນທີ່ນັ້ນຈະແບ່ງໄປຫາກິນກໍບໍ່ມີ, ສະຫາຍອ້າຍນ້ອງບາງຄົນທີ່ງ້າກຽ່ງຕໍ່ການປະເຊີນໜ້າກັບອຸປະສັກຢ່າງນີ້ແລ້ວບໍ່ທົນນັ້ນກໍຮູ້ສຶກລັ້ງເລໃຈ. ໃນ

ເຄື່ອນໄຫວລ້ຽວທິວວັ່ນນີ້, ສະຫາຍສະແຫວງຈຶ່ງໄດ້ສະແດງເປັນນັກຮົບທີ່ມີລິດທິເດດໃນໝູ່ປາທັງຫລາຍ.

ແຕ່ເພື່ອກູ້ເອົາພວກມັນອອກຈາກໄພພິບັດແຫ່ງການ ປະລາໄຊຢ່າງຕໍ່ເນື່ອງກັນມານັ້ນ: ໃນກາງເດືອນ 2/1973 ນີ້ສັດຕູໄດ້ໃຊ້ກຳລັງເຖິງ 2 ກອງພັນປ່ວງບ້າເຄື່ອນທັບ ຫວັງບຸກບຶດເຂົ້າບໍລິເວນຜາຫຸງ,ຜາແຫລມຢ່າງຂະໜາດໃຫຍ່. ເມື່ອເຫັນສະພາບເປັນດັ່ງນັ້ນ, ສະຫາຍໄດ້ແບ່ງອ້າຍນ້ອງອອກເປັນ 2 ຈຸເພື່ອສະກັດກັ້ນການເຄື່ອນທັບຂອງສັດຕູ; ແຕ່ກຳລັງຂອງສັດຕູພັດລື່ນດິນຢ່າງຫລວງຫລາຍ ແນວນີ້ເຮັດແນວໃດຈຶ່ງຈະປົກປັກຮັກສາດິນດອນດອນ ຫຍ້າອັນສຸດທີ່ຫວງແຫນນີ້ໄດ້. ຍາມນັ້ນສະຫາຍພ້ອມອ້າຍນ້ອງທັງດັ້ງໜ້າດ້ານທານການບຸກລຸກບຸກບຶດຂອງສັດຕູ ແລະ ກໍທັງແບ່ງກຳລັງໄປວິ່ງຕໍ່ຂໍກຳລັງໄຟມາຊ່ວຍ. ໃນເທື່ອນີ້ ສະຫາຍເອງພ້ອມອ້າຍນ້ອງສອງຄົນ ໄດ້ສະກັດສັດຕູຢູ່ລະຫວ່າງກາງຜາຫຸງແລະລອງງູ, ເຂົາເຈົ້າໄດ້ປະທະກັບສັດຕູເປັນເວລາ 3 ຊົ່ວໂມງແລ້ວ. ແຕ່ສັດຕູຜູ້ດື້ດ້ານກໍຍັງບໍ່ຍອມລ້າຖອຍເທື່ອ, ສະຫາຍຈຶ່ງໄດ້ແຕ່ງໃຫ້ອ້າຍນ້ອງ 2 ຄົນທີ່ຢູ່ກັບສະຫາຍນັ້ນໄປວິ່ງຕໍ່ອີກ. ໃນເວລາທີ່ເອົາເປັນເອົາຕາຍນີ້ຄົງເຫລືອແຕ່ສະຫາຍສະແຫວງຜູ້ດຽວທີ່ແລ່ນໄດ້ ແລ່ນ

ເໜືອບຸກທາງໜ້າ, ຕີທາງຫລັງຂອງສັດຕູດ້ວຍຍຸດທະວິ
ທີວີແບບນິກແຊວ, ແຕ່ສັດຕູກໍຍັງຄົງປ່ວງບ້າສຸມກຳລັງ
ໄຟມາໃສ່ສະຫາຍຢ່າງດຸເດືອດ ແລະບໍ່ຂາດໄລຍະ.

ຜ່ານການສູ້ຮົບກັນເປັນເວລາເຫິງສົມຄວນນັ້ນ, ສັດຕູພິ
ສູດໄດ້ວ່າ: ກຳລັງທີ່ວ້ານທານກັບມັນຢູ່ໃນຂະນະນີ້ມີໜ້ອຍ
ທີ່ສຸດ. ດັ່ງນັ້ນພວກມັນຈຶ່ງຫວັງປິດລ້ອມອ້ອມຈັບເອົາທັງ
ເປັນໃຫ້ໄດ້. ແຕ່ຄວາມຫວັງອັນນັ້ນ, ມັນໄດ້ກາຍເປັນຄວາມ
ໄຝ່ຝັນແບບໃນຕົວ, ໂງ່ງ່າວທີ່ມັນປຽບທຽບໃສ່ຄວາມເປື່ອຍ
ເປື່ອຍຊຸດໂຊມຂອງກຳລັງມັນເອງນັ້ນ, ມັນໄດ້ເພິ່ງພໍໃຈໄວ
ເກີນໄປເສຍແລ້ວ. ແຕ່ຄວາມຈິງ "ເຫລັກກ້າບໍ່ຫ່ອນປ່ຽນ
ທາດເປັນຂີ້ຄັ່ງຈັກເທື່ອ" ເຖິງວ່າຕ້ອງໄດ້ປະສົບກັບແປວ
ໄຟອັນແຮງກ້າຫລືຄວາມລຳບາກຍາກແຄ້ນຢ່າງບໍ່ມີຫຍັງ
ປຽບປານໃດກໍຕາມ, ແຕ່ດວງໃຈທີ່ພຸດຜ່ອງ, ສັດຊື່ສຸດຈະລິດ
ແລະຄວາມຈົງຮັກພັກດີຕໍ່ປະເທດຊາດນັ້ນ, ມັນໄດ້ກາຍ
ເປັນຄວາມເດັດຂາດແບບໜຶ່ງບໍ່ມີສອງ. ໃນເວລາທີ່ຂາທັງ
ສອງເບື້ອງຂອງສະຫາຍຖືກບາດເຈັບຢ່າງໜັກໜ່ວງ, ສັດ
ຕູພັດໄລ່ວິດການຕີສະຫາຍຢ່າງໃກ້ຊິດແຕ່ເສັ້ນທາງຂວາງ
ໜ້າຂອງສະຫາຍ ພັດແມ່ນແຕ່ຜາສູງຄາດຊັນ ທີ່ໜ້າ
ຫວາດສຽວ ແລະໂຫງ່ນຫີນທີ່ເຫລື້ອມລ້ຳຕ່ຳສູງເປັນຊົ່ງ

ອັນເປັນອຸປະສັກອີກອັນໜຶ່ງທີ່ກີດຂວາງເສັ້ນທາງເດີນ ສະຫາຍຄ່ອຍເຄື່ອນໄປດ້ວຍຄວາມຍາກຊາທີ່ສຸດ ແລະ ການເຄື່ອນທັບດ້ວຍຂາອັນໃຄ່ພອງທັງເຂົ້າບໍ່ດີກທ້ອງຈັກເມັດນີ້ໄດ້ເຮັດໃຫ້ສຸຂະພາບສະຫາຍ ຊຸດໂຊມ ຢ່າງ ໜັກ ໜ່ວງ, ແຕ່ສະຫາຍກໍກັດແຂ້ວແຂງໃຈຄ່ອຍເອົາກົ້ນຕູດໄປເທື່ອລະຄືບ ເທື່ອລະສອກ ຕາມຄວາມຕັ້ງໃຈຂອງຕົນ.

4 ມື້ແລ້ວທີ່ສະຫາຍ ໄດ້ທົນກັບຄວາມເຈັບປວດ ແລະຄວາມຫິວໂຫຍ, ສະຫາຍທັງເຈັບທັງຫິວ, ທັງຕ້ອງໄດ້ຕ້ານທານ ກັບການໄລ່ລີດການລືຂອງສັດຕູ, ພໍຮອດໂກນຫ້ວຍແຫ່ງໜຶ່ງທີ່ຫ່າງຈາກບ່ອນທີ່ສະຫາຍໄດ້ປະທະກັບສັດຕູຫວ່າງ 3–4 ມື້ກ່ອນໄດ້ເດີນແລ້ວ, ຄູ່ຕາຂອງສະຫາຍຫລຽວ ພຸ້ນ ມອງ ພີ້ ເໜືອນ ກັບ ຊອກ ຫາ ອັນໃດໜຶ່ງທີ່ສະຫາຍ ຕ້ອງການທີ່ສຸດ, ສະຫາຍຄ່ອຍຕູດລົງໄປຫາໂສກເລີກທີ່ ມີປ່າກ້ວຍອັນດົບໜາທີ່ຖອນປີແລ້ວນັ້ນດ້ວຍຄວາມຝຶດເຄືອງ. ເວລານັ້ນສະຫາຍທົນຕໍ່ຄວາມຫິວ ບໍ່ໄດ້ອີກແລ້ວ, ແຕ່ຈະເຮັດແນວໃດ ມີດດວງໜຶ່ງພໍຈະໄດ້ປ້າຕົ້ນກ້ວຍກໍບໍ່ມີ, ສະຫາຍຈໍາຕ້ອງໄດ້ໃຊ້ປືນໃນກໍາມືຂອງຕົນບຶງເອົາ. ເມື່ອໄດ້ໝາກປີແລ້ວ ຈະກິນດິບກໍມີລົດຝາດ ແລະລົດຮື່ນ, ສະຫາຍຈຶ່ງຄິດວ່າຕ້ອງດັງໄຟໝົກໝາກປີນີ້ກ່ອນ

ພໍໃຫ້ໄດ້ກິນຫຼຸເລົາຄວາມຫິວ: ແຕ່ກໍຈັ້ງແນ່ນ ເວນ ເອົາ ແຫ້ ໆ, ເມື່ອໄດ້ຍິນສຽງປືນດັງຢູ່ບ່ອນໃດພວກສັດຕູພັດໄລ່ຕິດຕາມມາອີກ.

ໃນເວລາທີ່ສະຫາຍ ພວມຈະໜີກໝາກປີ່ຢູ່ນັ້ນ, ບັງເອີນຍິນສຽງຮ້ອງນາບໜີ:ແຮງວ່າ: "ປຸດປ່າວີງຖ້າບໍ່ປາກຕາຍ ? ຍ້ອນໄຫວພິບອັນສະຫລາດຄ່ອງແຄ້ວ ແລະ ຈິດໃຈອົງອາດກ້າຫານສະຫາຍໄດ້ປະເຊີນໜ້າກັບຄວາມເປັນຄວາມຕາຍເຫລົ່ານັ້ນດ້ວຍຄວາມ ທຸ່ນທ່ຽງ ເບື້ອກເປັນສະຫາຍ ທຳທ່າຄ່ຽງ ຍົກມືເບື້ອງໜຶ່ງຂຶ້ນ ແຕ່ຄູ່ຕາຂອງສະຫາຍພັດຈ້ອງມອງຕິດຕາມທຸກການເຄື່ອນໄຫວຂອງສັດຕູຢ່າງໃກ້ສິດ, ເມື່ອເຫັນສັດຕູເບິ່ງໜ້ອຍໜຶ່ງ, ຊິວພັບຕາດຽວສະຫາຍຄວ້າມືຈັບປືນທັງຕັ້ງໃຈເອົາຕີນກະໂດດເຂົ້າຫາທີ່ກຳບັງ ແລ້ວຍິງຕ້ານທານສັດຕູ ຄືນຢ່າງ ໄວພະລັນ ປານຟ້າຜ່າປືນລັ່ນແຕງ ເຫວການທີ່ຜັ້ນແປບໍ່ພໍກໍ່ໃດນາທີນັ້ນລູກຫອງຂອງສະຫາຍໄດ້ສັງຫານສັດຕູລົ້ມອີກ 2 ຄົນ. ພວກທີ່ເຫລືອຕາຍກໍແຕກໜີຈົນອົກສັ່ນຂວັນຫາຍ.

ພາຍຫລັງໄດ້ສູ້ຮົບ ກັນອີກຄັ້ງໜຶ່ງ ສະຫາຍ ຮູ້ສຶກຫອດຫິວເຕັມທີ່, ເວລານັ້ນ ເຖິງວ່າສະຫາຍ ໄດ້ໃຊ້ຄວາມພະຍາຍາມຈົນສຸດຂີດ, ແຕ່ສະຫາຍກໍບໍ່ສາມາດຈະຊູເອົາ

ຮ່າງກາຍ ທີ່ຫລ່າເຫລືອງ ແລະ ຄູ່ຂາທີ່ໃຄ່ພອງ ຂອງສະຫາຍ ເຄື່ອນໄປໃສໄດ້ອີກແລ້ວ. ແຕ່ຈິດໃຈ ທີ່ສະເໜືອນທ່ອນເຫລັກກ້ານັ້ນ ພັດໄດ້ວາງຄຳຂວັນປະຈຳໃຈວ່າ "ເດັດດ່ຽວບໍ່ຍອມຈຳນົນ" ເມື່ອນັ້ນ ເຖິງວ່າສະຫາຍ ສະແຫວງຕົກຢູ່ໃນສະພາບທີ່ອັດຕະຄັດທີ່ສຸດ, ແຕ່ມືທັງສອງເບື້ອງຂອງສະຫາຍ ຄົງກຳປືນໃນມືຂອງຕົນໃຫ້ແໜ້ນໃນທ່າກຽມພ້ອມຮັບມືກັບສັດຕູ ໃນທຸກກໍລະນີ. ສິ່ງທີ່ໄດ້ບົກອອກມາເວົ້ານີ້ ກໍ່ບັງເປັນ ພຽງແຕ່ໄລຍະໜຶ່ງ ຂອງດ້ານໜຶ່ງໃນຊີວິດ ຂອງສະຫາຍໄດ້ພົບ ແຕ່ເມື່ອຈະເວົ້າເຖິງ ເສັ້ນທາງແຫ່ງຊີວິດ ທີ່ສະຫາຍປະສົບ ແລະ ຜ່ານຜ່າ ຢູ່ໃນບັ້ນຮົບຕ່າງໆແລ້ວ, ພວກເຮົາກໍ່ບຶງຈະເຂົ້າໃຈ ແລະ ງຶດງ້ນາບະຈິດອັນສູງສົ່ງ ແລະ ແບບແຜນການດຳລົງຊີວິດ, ສິນທຳປະຕິວັດຂອງສະຫາຍ, ໂດຍສະເພາະແມ່ນເວລາສະຫາຍປະຕິບັດໜ້າທີ່ຢູ່ ພູແກ່ວໜາກມີ້, ພູວາຍ; ກິ່ວຫລວງ, ນົກຄະບ້ານສວນ, ຫ້ວຍເປັນ ແລະ ບ່ອນອື່ນໆ, ສະຫາຍລ້ວນແຕ່ ເປັນຜູ້ ເປັນຫ່ວງເປັນໃຍ ບຳທຸກສິ່ງ ທຸກຢ່າງ. ພະ ນັກ ງານ ແພດ ທີ່ ໜຸ່ມນ້ອຍ ຜູ້ນີ້ ບໍ່ວ່າແຕ່ ຢູ່ ສະໜາມ ຮົບ ບ່ອນ ໃດ ສະ ຫາຍ ບໍ່ ຈັກ ກຽມ ການ ສູ້ຮົບ ຮ່ວມກັບອ້າຍນ້ອງບໍ່ຈັກເອົາໃຈໃສ່ປິ່ນປົວຄົນເຈັບ ໃນ

ບັ້ນຣົບໜຶ່ງຢູ່ພູແກ່ວໜາກມີ, ເມື່ອສະຫາຍຮູ້ຂ່າວວ່າອ້າຍ
ນ້ອງຖືກບາດເຈັບຢູ່ເທິງປ້ອມ 2 ຄົນ, ຄວາມຮັບຜິດຊອບຕໍ່
ໜ້າທີ່ວຽກງານຂອງຕົນນັ້ນ ໄດ້ເລັ່ງລັດໃຫ້ສະຫາຍ ຕ້ອງ
ລົງມືປະຕິບັດຢ່າງປະຈຸບັນທັນດ່ວນ.ເວລານັ້ນ ສະຫາຍທັງ
ຫລາຍ ທີ່ຢູ່ເທິງປ້ອມໄດ້ຖອນຈາກຈຸດດັ່ງກ່າວເສຍແລ້ວ,
ສຽງປືນທີ່ປ່ວງບ້າຂອງສັດຕູຍັງຄົງດັງຢູ່ບໍ່ຂາດ, ເຖິງວ່າມີ
ກໍລະນີທີ່ກັນດານແບບນີ້ຂວາງໜ້າຢູ່ກໍຕາມ ສະຫາຍບໍ່ໄດ້
ກົວແຕ່ຫນ້ອຍດຽວສະຫາຍແລ່ນຜ່ານຫ່າກະສຸນໄປຢ່າງບໍ່
ຫ່ວງ ຫຍັງ ໃນ ຊີ ວິດ ຂຶ້ນ ໄປ ເຈ່ບ ເອົາ ສະ ຫາຍນີ້ລົງມາ
ເຊື່ອງຢູ່ຂຸມຄອງແລ້ວ, ຈຶ່ງໄປເຈ່ບເອົາສະຫາຍນັ້ນມາອີກ
ເພື່ອກູ້ເອົາຊີວິດ ຂອງຫມູ່ຄູ່ດ້ວຍຄວາມຮັບຜິດຊອບ ແລະ
ຄວາມຮັກແພງເພື່ອນຮ່ວມຮົບ. ມີເທື່ອໜຶ່ງໃນບັ້ນຣົບພູ
ວາຍ, ໃນຂະນະທີ່ເຂົາເຈົ້າໄປເຄື່ອນໄຫວກວດກາສາລະເວ
ໄດ້ຕົກເຂົ້າວົງສະກັດຂອງສັດຕູ, ພວກມັນປ່ວງບ້າສຸມປືນ
ນ້ອຍ, ປືນໃຫຍ່ລະເບີດມືມາໃສ່ຢ່າງຮ້າຍແຮງ. ນອກນັ້ນຝູງ
ຍົນອາກາດອາເມລິກາຍັງໄດ້ແສ່ວໄດ້ເຈີດເຫນືອຖິ່ນລະເບີດ
ບົງທຳລາຍຢ່າງຮ້າຍກາດປ່າເຖື່ອນ ເຮັດໃຫ້ອ້າຍນ້ອງເຮົາ
ຖືກບາດເຈັບ 5 ສະຫາຍພາບດຽວ, ໃນເງື່ອນໄຂແນວນັ້ນ
ບໍ່ແມ່ນສະຫາຍສະແຫວງ ໄດ້ພົບເປັນເທື່ອທຳອິດດອກ.

ແຕ່ສະຫາຍກໍເຄີຍໄດ້ປະສົບພົບພໍ້, ເຄີຍໄດ້ແກ້ໄຂຜ່ານຜ່າ ແລະ ກໍເຄີຍເອົາຊະນະມາຫລາຍແລ້ວ ຕໍ່ຫນ້າເງື່ອນໄຂ ທີ່ມີແຕ່ຄົນຜູ້ດຽວຄືນເຈັບຊ້ຳພັດຫລາຍນີ້, ເຮັດແນວໃດຈຶ່ງ ຈະຫລ້ອນວຽກ, ແຕ່ເຖິງແນວໃດກໍຕາມ, ສະຫາຍກໍຍັງຄິງ ໝູນໃຊ້ຫລັກຫມັ້ນເກົ່າທີ່ສະຫາຍເຄີຍໄດ້ເຮັດມາ ນັ້ນຢ່າງ ບໍ່ຄອນແຄນ, ສະຫາຍໃຊ້ຄວາມອາດຫານທຸ່ນທ່ຽງ ແລະ ຄວາມສາມາດຂອງຕົນ ຄ່ອຍເຈ່ຍເອົາເທື່ອລະຄົນໄປເຊື່ອງ ໄວ້ໃນຖ້ຳທີ່ຫ່າງຈາກສະໜາມດັ່ງກ່າວປະມານ 2 ກິໂລ ແມັດ: ຖ້ຽວນີ້ເປັນຖ້ຽວສຸດທ້າຍ ທີ່ສະຫາຍຫລົບຄືນມາ ເອົາສົບຂອງສະຫາຍທີ່ຖືກເສຍສະຫລະ, ສະຫາຍເຈ່ຍ ເອົາສົບຂອງໝູ່ເພື່ອນກ້າວໄປດ້ວຍ ບາດ ກ້າວ ທີ່ ໜັກ ໜ່ວງທີ່ສຸດ ແລະ ກໍໃນຂະນະນັ້ນເອງສະເກັດລູກປືນໃຫຍ່ ຂອງສັດຕູ ທີ່ບິ່ງດິກຫນ້າດິກຫລັງນັ້ນ ພັດເຈົ້າມາຖືກຂາ ຂອງສະຫາຍ, ສະຫາຍຮູ້ສຶກມຶດຫູລາຍຕາ, ແລ້ວກໍຈົມລົງ ສູ່ວານມືດອັນມະຫາສານຢ່າງບໍ່ຮູ້ຫນ້າຮູ້ຫລັງ. ຈົນຫລາຍ ສິບນາທີເຕີບສະຫາຍຈຶ່ງຄ່ອຍຮູ້ເນື້ອຄືງ, ເມື່ອມືນຕາຂຶ້ນມາ ສະຫາຍພະບະບານລຸກນັ່ງ, ແຕ່ສະຫາຍບໍ່ຮູ້ຈັກວ່າຕົນ ມານີ້ເຮັດຫຍັງ? ແລະເປັນຫຍັງຕົນຈຶ່ງຕົກຢູ່ສະພາບແນວ ນີ້ແຕ່ຜູ້ດຽວ? ຄຳຖາມທຳນອງນີ້ ໄດ້ມີຂຶ້ນຢູ່ຫ່ວງນຶກຄິດ

ຂອງສະຫາຍ ຢ່າງບໍ່ມີທາງແກ້ຖືກສະຫາຍພະຍາບານ ຄົນຄິດຄົນເດີບ ຈຶ່ງຟື້ນສະຕິຄືເກົ່າມາໄດ້, ສະຫາຍຟ້າວ ຄວ້າກາລົບຂອງເພື່ອນ ຕົບແລ້ວກໍກັດແຂ້ວສືບຕໍ່ມຸ່ງຫນ້າ ໄປຫາຈຸດທີ່ຫມາຍ ດ້ວຍຄວາມພະຍາບານ ທີ່ສູງກ່ວາ ບານໃດຫມົດ. ຈາກນັ້ນເຖິງ 50 ນາທີສະຫາຍຈຶ່ງໄດ້ພົບ ຫມູ່ກູ່ທີ່ມາຊ່ວຍຊູ ສະຫາຍແລະພ້ອມກັນປະຕິບັດຫນ້າທີ່ ຈົນສຳເລັດ.

ຈາກບົດບາດທີ່ເປັນແວ່ນແຍງ ອັນໄສແຈ້ງຂອງນັກຮົບ ປະຕິວັດ ແລະ ຈາກຜົນງານອັນລ້ຳເລີດນີ້, ໃນກອງປະຊຸມ ນັກຮົບແຂ່ງຂັນຊຸດທີ 3 ຂອງແຂວງຫລວງພະບາງ, ສະ ຫາຍສະແຫວງໄດ້ຮັບການຍ້ອງຍໍສັນລະເສີນ ຈາກສູນກາງ ແລະ ກອງບັນຊາການສູງສຸດ ດ້ວຍການປະດັບຫລຽນໄຊພິ ລະອາດຫານຊັ້ນ 1 ຢ່າງສົມກຽດ.

ຫ້າມຈຳໜ່າຍ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ຮັບໃຊ້ວຽກງານຂອງຊາດຢ່າງສຸດໃຈ

* ພໍແສງອາລຸນໄດ້ແຜ່ລັດສະ ໝີສີເຫລືອງອ່ອນລົງມາຍ້ອມທຳມະຊາດແຫ່ງນັ້ນ ໃຫ້ມີສີສັນ ອັນສວຍງາມແລະ ເພີ່ມຄວາມມີຊີວິດຊີວາຂຶ້ນຕື່ມອີກນັ້ນ, ຕາມທຳມະດາປານນີ້ ນາງອຸ່ນຄຳໄດ້ກັບມາແຕ່ໄປເພີ່ມພູນ ແລະ ເຂົ້າເຮັດວິຊາສະເພາະແກ່ເທິງແລ້ວ, ນີ້ນີ້ກໍຄືໄລຍະຜ່ານມານາງເຄີຍເປັນຜູ້ເປັນຫ່ວງເປັນໃຍນຳວຽກນັ້ນ ງານນີ້ສະເໝີ. ນິດໄສໃຈຄໍທີ່ໝັ້ນຂະຫຍັນພຽນ, ຮອບຄອບ ແລະສຸພາບອ່ອນໂຍນນັ້ນໄດ້ເຮັດໃຫ້ຜູ້ໃດກໍຮັກແພງນາງເປັນພິເສດ.

ຄືນໜຶ່ງໃຕ້ແສງເດືອນເພັງທີ່ສົດໃສ, ພວກຂ້ອຍເຂົາກັນນັ່ງຫລິ້ນຢູ່ຮິມດິນກະແຄມເຮືອນ, ສາຍລົມເຢັນໃນຍາມຫົວຄ່ຳໄດ້ໂຊຍມາເປັນຮູວເບົາໆເຮັດໃຫ້ກິ່ງໄມ້ໃບຫຍ້າຂະບເຂດນັ້ນ ໂອນເອນແກ່ວງໄກວເໝືອນກັບວ່າມັນກໍຢາກມີຊີວິດຊີວາອັນເຫລື້ອມໃສຄືໄວໜຸ່ມຮຸ່ນນີ້ເອງ, ສາຍລົມຕ້ອງໃບໄມ້ໄດ້ສົ່ງສຽງດັງວູ່ງໆປະສານກັບສຽງຫົວ, ສຽງໂອ້ລົມ

ສິນທະນາອັນສະໜິດສະໜົມຂອງໝູ່ຍິງສາວທີ່ນັ່ງຈຸ້ມກັນຢູ່ໃຕ້ຮົ່ມໄມ້, ປະກົດວ່າໄດ້ເຮັດໃຫ້ບັນຍາກາດຍາມຄໍ່າຄືນໃນສໍານັກງານຂອງພວກຂ້ອຍມີຊີວິດຊີວາຂຶ້ນຕື່ມ.

ໃນທ່າມກາງບັນຍາກາດມ່ວນຊື່ນແບບເປັນກັນເອງດັ່ງກ່າວ, ນາງບົວວອນໄດ້ເລົ່າເລື່ອງສູ່ພວກຂ້ອຍຟັງເລື່ອງຕິດເລື່ອງຕໍ່. ແຕ່ເລື່ອງທີ່ຂ້ອຍຈັບໃຈກ່ວາໝູ່ແມ່ນການເລົ່າປະຫວັດນາງວອນ ຂອງນາງອຸ່ນຄໍາເພື່ອນສະໜິດສະໜົມຂອງລາວ, ດັ່ງນັ້ນຂ້ອຍຈຶ່ງເອົາໃຈໃສ່ເຈາະຈີ້ມແລະຮ້ອງຂໍໃຫ້ນາງບົວວອນເລົ່າເລື່ອງລະອຽດສູ່ຂ້ອຍຟັງ. ເພື່ອກຽມຈິດກຽມໃຈໃຫ້ແກ່ການເລົ່າເລື່ອງເທື່ອນີ້ ນາງບົວວອນໄດ້ຫາຍໃຈຮູດຍາວໆ ປະກົດວ່າລາວພວມເຕົ້າໂຮມເອົາສິ່ງທີ່ຕົນຮູ້ທັງໝົດນັ້ນມາສະເໜີໃຫ້ ໝູ່ຮູ້ນໍາແລ້ວລາວເອີ່ຍຂຶ້ນດ້ວຍຄວາມສັນລະເສີນຄຸນງາມຄວາມດີ ແລະແບບຢ່າງອັນດີເດັ່ນຂອງອຸ່ນຄໍາ, ຈາກນັ້ນລາວໄດ້ເວົ້າເຖິງຊີວິດຄາວຍັງເດັກຂອງນັກຮົບທີ່ໜ້າສັນລະເສີນຜູ້ນີ້ວ່າ: "ອຸ່ນຄໍາເປັນລູກກໍາພ້າພໍ່ມາແຕ່ຄາວນາງມີອາຍຸ 7–8 ປີ. ເວລານັ້ນເຖິງວ່າອາຍຸອັນອ່ອນນ້ອຍຂອງນາງ ບໍ່ສາມາດຈໍາໄດ້ທຸກພາບທີ່ໜ້າເຈັບແຄ້ນແໜ້ນໃຈ ທີ່ນາງເຄີຍປະສົບກ່ອນນັ້ນຢ່າງຄົບຖ້ວນກໍຕາມ. ແຕ່ນາງກໍບໍ່ສາມາດຫລີກລືມພໍ່ຜູ້ບັງເກີດ

ເກົ້າຂອງນາງທີໄດ້ສິ້ນຊີວິດໄປ ຍ້ອນນ້ຳມືອັນເປື້ອນເລືອດ
ຂອງພວກໄຮ້ມະນຸດສະທຳ ທີ່ເປັນລູກມືອາເມລິກາໃນຂະ
ນະທີ່ພໍ່ຂອງນາງພວມສ້າງປູ່ທຳກິນນຳໄຮ່ນາວາກ້າ.

ພາຍຫລັງທີ່ພໍ່ຂອງນາງໄດ້ສິ້ນຊີວິດໄປແລ້ວ, . ເຮືອນ
ຊານບ້ານຊ່ອງພັງຖືກລະເບີດຂອງໂຈນອາກາດ ອາເມລິກາ
ເຜົາຜານຈົນກ້ຽງ, ອີກບໍ່ພໍອ້າຍຂອງນາງທີ່ພວມບວດເປັນ
ພະສົງຢູ່ນັ້ນ ກໍໄດ້ເສຍຊີວິດ ຍ້ອນລູກລະເບີດຂອງໂຈນອາ
ກາດອາເມລິກາ ທີ່ໄດ້ຖິ້ມລົງເຜົາຜານວັດວາອາຮາມບ່ອນ
ເຄົາລົບບູຊາຂອງປວງຊົນລາວເຮົາ,

ຈາກສິ່ງທີໄດ້ຮູ້ ໄດ້ເຫັນໂຫດກຳອັນລົ້ນຟ້າເຫລືອແຜ່ນ
ດິນຂອງຝູງມານຮ້າຍດັ່ງກ່າວ, ນາງໄດ້ເກັບໂຮມເອົາຄວາມ
ຄຽດແຄ້ນທັງໝົດນັ້ນຝັງເລິກເຂົ້າໃນດວງໃຈຂອງນາງຢ່າງ
ບໍ່ມີວັນຫລົງລືມໄດ້. ແຕ່ນັ້ນເປັນຕົ້ນມານາງໄດ້ຄອງມື້ຄອຍ
ວັນທີ່ຕົນເອງ ຈະເຕີບໃຫຍ່ມີກຳລັງວັງຊາທີ່ສາມາດປະ
ກອບສ່ວນເຂົ້າໃນວຽກງານຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມ
ລິກາ ແລະລູກມືລ້າງແຄ້ນແທນພໍ່, ແທນອ້າຍແລະແທນ
ຍາດພີ່ນ້ອງ ອື່ນໆ ທີ່ປະສົບເຄາະຮ້າຍແບບດຽວກັບຄອບ
ຄົວຂອງນາງ. ດັ່ງນັ້ນຄວາມທຸກຄວາມທໍລະມານ ແລະ
ຄວາມບອບຊ້ຳໃນຊີວິດຜ່ານມາຂອງນາງ ຈຶ່ງກາຍເປັນ

ຫອນໄຟແຫ່ງຄວາມຄຽດແຄ້ນ ລວກລົນຈິດໃຈຂອງນາງຕະຫລອດມາ. ຈົນກະທັ້ງຮອດກາງປີ 1967 ການຄອງຄອຍມາແຕ່ດົນນານຂອງນາງຈຶ່ງໄດ້ປະສົບເປັນຈິງ.

ພາຍຫລັງ ທີ່ນາງໄດ້ເຂົ້າຢູ່ໜ່ວຍວິຊາສະເພາະພົນດີດ ເວົ້າແທ້ສະພາບຂອງນາງເວລານັ້ນມີຫລາຍອັນຫຍຸ້ງຍາກສັບສົນ ແຕ່ບ່ອນຈິດໃຈຄຽດແຄ້ນສັດຕູຢ່າງເລິກເຊິ່ງນັ້ນໄດ້ລະດົມນາງໃຫ້ມີຈິດໃຈເຂັ້ມແຂງ ທົນທານຜ່ານຜ່າທຸກອຸປະສັກຫຍຸ້ງຍາກ, ຝຶກຝົນຫລໍ່ຫລອມຕົນເອງດ້ວຍຄວາມທໍລະຫົດອົດທົນ ນາງຮັບໃຊ້ວິຊາສະເພາະຂອງຕົນດ້ວຍຈິດໃຈຮັບຜິດຊອບຂອງນັກປະຕິວັດ ຜູ້ທີ່ມີສິນທຳປະຕິວັດອັນຖືກຕ້ອງຢ່າງບໍ່ໂອນອຽງ, ຈິດໃຈປະຢັດສັດທ່ຽງ ຮັກສາເຄື່ອງຂອງສ່ວນລວມນັ້ນ ປະກົດວ່າໄດ້ກາຍເປັນນິດໄສທີ່ເກີດກັບລາວເອງ, ລາວແພງແລະປະຢັດເຈັ້ບເໝືອນກັບພໍ່ນາແພງເຂົ້າທີ່ເປັນສິ່ງລ້ຽງຊີວິດຂອງຄົນເຮົາ, ແພງຈັກເໝືອນດັ່ງແມ່ແພງລູກ, ເວລາໃດລາວກໍໄດ້ເອົາໃຈໃສ່ບົວລະບັດຜັດສີເຄື່ອງຈັກໃຫ້ສະອາດສະອ້າງ, ເວລານຳໃຊ້ຫລືບົກຍ້າຍເຄື່ອງຈັກກໍເຮັດດ້ວຍຄວາມລະມັດລະວັງຄ້າຍ ກັບວ່າລາວມີຄວາມຕັ້ງໃຈຮັກສາສີສັນເດີມ ຂອງມືກຳມະກອນຜູ້ສະຫລາດເກັ່ງກ້ານັ້ນໃຫ້ມີປະກາຍເຫລື້ອມສະເໝີ, ການ

ກະທຳເຊັ່ນນັ້ນຂ້ອຍຄິດວ່າ: ຄົງບໍ່ແມ່ນເພື່ອຮັກສາຮູບຮ່າງ ແລະສີສັນຂອງຈັກເທົ່ານັ້ນ ແຕ່ສຳຄັນກວ່າເພີນນັ້ນແມ່ນ ຈິດໃຈປົກປັກຮັກສາເຄື່ອງຂອງສ່ວນຮວມ, ເພື່ອຮັບປະກັນ ຕໍ່ໜ້າທີ່ແລະຕອບສະໜອງກັບທິດທາງທີ່ສູນກາງ ແລະ ກອງບັນຊາການສູງສຸດວາງອອກນັ້ນ ຢ່າງຖືກຕ້ອງເໝາະ ສົມ. ດັ່ງນັ້ນໃນຫລາຍປີມານີ້ນາງບໍ່ລະເພາະແຕ່ເປັນຜູ້ຊຳ ນິຊຳນານທາງດ້ານເຕັກນິກວິຊາສະເພາະເທົ່ານັ້ນ, ພ້ອມ ນັ້ນນາງຍັງໄດ້ສ້າງຕົນໃຫ້ກາຍເປັນຜູ້ທີ່ຫ້າວຫັນ, ດຸໝັ່ນ, ປະຢັດສັດທ່ຽງແລະນຳໜ້າໃນທຸກວຽກງານອີກດ້ວຍ. ເພື່ອ ເປັນສິ່ງຢັ້ງຢືນ ໃຫ້ແກ່ສິ່ງທີ່ລາວເວົ້າມາຂ້າງເທິງ, ບົວ ວອນໄດ້ຍົກເອົາບາງເຫດການມາເລົ່າສູ່ຟັງອີກຄື: ບັ້ນລຳ ລຽງຂົນສົ່ງຮັບໃຊ້ແນວໜ້າໃນກາງເດືອນ 8/1971, ປີນັ້ນ ປະກົດວ່າຝົນຫລາຍເອົາແທ້ໆ, ໃນເດືອນ 8 ຕໍ່ເດືອນ 9 ຄື ຈັ່ງບໍ່ມີ ມື້ໃດຝົນຊິບໍ່ລົນ, ຝົນຕົກຟ້າລົນລຽນ ຕິດ ລຽນ ຕໍ່, ຫ້ວຍຮ່ອງຄອງບຶງທຸກສາຍໃນຂົງເຂດນັ້ນ ນອງຈົນລົ້ນຝັ່ງ, ທຳມະຊາດເຫລົ່ານັ້ນ ມັນໄດ້ເປັນອຸປະສັກໃຫ້ແກ່ການສັນ ຈອນໄປມາກໍ່ຄືການລຳລຽງຂົນສົ່ງຢູ່ບໍ່ໜ້ອຍ.

ເວລານັ້ນສັດຕູອາວຄິດວ່າສິ່ງກີດຂວາງ ໂດຍທຳມະ ຊາດເຫລົ່ານັ້ນ ຈະຊ່ວຍໃຫ້ພວກເຂົາບຽດບຶດເຂົ້າເຂດປົດ

ປ່ອຍພວກເຮົາໄດ້ຢ່າງງ່າຍດາຍ ພວກເຂົາຈຶ່ງແຫ່ແຫນ
ກັນມາປານໝູ່ມົດໝູ່ປວກ ແລ້ວທຳການບຸກຣຸກບຽດບຶດ
ເຂົ້າບໍລິເວນທົ່ງໄຫຫີນ, ພູເກງ, ພູກວກ, ແລະພູຊັນຢ່າງ
ຈອງຫອງ.

ຕໍ່ໜ້າສະພາບການດັ່ງກ່າວ, ພະນັກງານ, ນັກຮົບ
ພວກເຮົາຕ່າງກໍຮ້ອນອົກຮ້ອນໃຈ ຢ້ານເສັຽໂອກາດບໍ່ໄດ້ປະ
ກອບສ່ວນໃນການຕີສັດຕູດ້ວຍສີມືຂອງຕົນເອງ ໃນເທື່ອນີ້.
ສຳຫລັບອຸ່ນຄຳແລ້ວ ກໍ່ປະກົດວ່າລາວເປັນຜູ້ໜັກອົກໜັກ
ໃຈກວ່າເພື່ອນ, ນາງຈຶ່ງລັກຂຽນຄຳເວົ້າບາງຄຳທີ່ເປັນຄະຕິ
ເຕືອນໃຈເຂົ້າໃນພັບບັນທຶກຂອງລາວເອງວ່າ: "ຮັບໃຊ້ວິຊາ
ສະເພາະສຸດຂີດ. ຫ້າວຫັນແລະເປັນແບບຢ່າງໃນທຸກວຽກ
ງານ, ຜ່ານຜ່າທຸກອຸປະສັກຫຍຸ້ງຍາກສັບສົນ. ກຽມພ້ອມ
ຕະລຸມບອນຮັບໃຊ້ແນວໜ້າສະເໝີ" ຄວາມຈິງກໍແມ່ນ
ແນວນັ້ນແທ້, ເຖິງນາງບໍ່ມີເງື່ອນໄຂຕໍ່ສູ້ປະຈັນບານແບບ
ເຊິ່ງໜ້າກັບສັດຕູກໍຕາມ, ແຕ່ນາງໄດ້ລົງໜ້າປະກອບສ່ວນ
ເຂົ້າໃນຂະບວນການຕ່າງໆ ຢ່າງຫ້າວຫັນແລະບໍ່ຮູ້ອິດຮູ້
ເມື່ອຍ.

ເພື່ອຕອບສະໜອງກັບຄຳຂວັນທີ່ວ່າ: ທຸກສິ່ງທຸກຢ່າງ
ເພື່ອແນວໜ້າ, ທຸກສິ່ງທຸກຢ່າງ ເພື່ອຕີເອົາຊະນະຈັກກະ

ພັດອາເມລິກາ ແລະ ລຸກນີ ໃນ 3 ຫ້ອງຄື: ຫ້ອງການເມືອງ, ຫ້ອງເສນາທິການ ແລະ ຫ້ອງພະລາທິການ ກໍຄືກົມກອງທີ່ຢູ່ແນວຫລັງ ຕ່າງກໍຊ່ວງເສັ້ງກັນ ຕະລຸມບອນໄປຮັບໃຊ້ແນວໜ້າຢ່າງເປັນຂະບວນ, ສຳລັບຫ້ອງການເມືອງແມ່ນໄດ້ຖືກມອບໝາຍໃຫ້ລຳລຽງປືນໃຫຍ່ 120 ມມ ພ້ອມລູກປືນໃຫຍ່ 3 ຊຸດ ໃຫ້ຮອດຈຸດທີ່ໝາຍກ່ອນກຳນົດ ວັນບັດໝາຍສູ້ຮົບ. ດັ່ງນັ້ນໜ້າທີ່ລຳລຽງປືນໃຫຍ່ເທື່ອນີ້ ຈຶ່ງເປັນໜ້າທີ່ອັນໜັກໜ່ວງ ແລະ ຮີບຮ້ອນທີ່ສຸດ.

ຂະບວນລຳລຽງປືນໃຫຍ່ ໄດ້ເຄື່ອນທັບ ແຕ່ພໍຮຸ່ງຄືວນິວຈົນເທົ້າຕາເວັນສິ້ນແສງ ກໍຍັງບໍ່ທັນໄປຮອດໃສ່ເທື່ອ ເວລານັ້ນເຖິງວ່າຟ້າຫລັ່ງຝົນລິນ, ຄ່ຳຄືນເດິກດຶ່ນປານໃດກໍຕາມ, ແຕ່ໂຈນອາກາດອາເມລິກາ ກໍບໍ່ໄດ້ລົດລະ ໃນການປ່ວງບ້າຖິ້ມລະເບີດ ຍິງທຳລາຍເຂັ່ນຂ້າຮາວີ ຊີວິດຊັບສົມບັດ ຂອງປະຊາຊົນເຮົາຕະຫລອດມາ. ບົນເສັ້ນທາງຍາວໄກ, ເມືອກນື້ນ ຂຶ້ນພູລົງຫ້ວຍ, ດັ້ນດອນຊອນປ່າ ແລະ ເຄື່ອນໄປພາຍໃຕ້ຫ່າລະເບີດຂອງອາເມລິການັ້ນ, ມັນລ້ວນແຕ່ແມ່ນບາດກ້າວ ທີ່ຜ່ານຂ້າມຄວາມທຸລະກັນດານ. ຄວາມຫຍຸ້ງຍາກສັບສົນ ຂອງເສັ້ນທາງ ສິ່ງທິບຄວາມ ອຶດຫລັບ ທົ່ວນອນ ແລະ ຄວາມໜັກໜ່ວງຂອງສັດຕູ ໄດ້ເຮັດໃຫ້ບັນດາຜູ້ຄົນທີ່

ພວມທົນທານຕໍ່ຄວາມໜັກໜ່ວງນັ້ນອິດເໝື່ອຍຫິວໂຫຍ.

ອຸ່ນຄຳເຖິງເປັນຄົນບໍ່ໃຫຍ່ປານໃດ, ແຕ່ເບິງນ້ຳໜັກໃນການແບກຫາບລຳລຽງເທື່ອນີ້ ນາງໄດ້ເອົາລື່ນນ້ຳໜັກຂອງລາວບໍ່ໜ້ອຍ, ນ້ຳໜັກຂອງເລົາປືນ 120 ໄດ້ເຮັດໃຫ້ນາງຮູ້ສຶກອິດເໝື່ອຍ, ແມ່ນແທ້ນາງຄວນພັກຜ່ອນ ຫລືຜັດປ່ຽນເອົາເຄື່ອງເບົານຳໝູ່. ແຕ່ກົງກັນຂ້າມນາງພັດແລ່ນໄປປ່ຽນອ້າຍຜູ້ຫາມຕີນຕັ້ງ ທີ່ພວມລົ້ມລຸກຄຸກຄານບີບຕົວກ້າວຂຶ້ນມາປູ່ນັ້ນ. ຂະນະນັ້ນອ້າຍບຸນເຕັ້ມ ແລະ ອ້າຍບົວແກ້ວ ໄດ້ຫ້າມລາວວ່າ: "ນ້ອງຈົ່ງພັກຜ່ອນກ່ອນ, ເບິ່ງແມ້ ບໍ່ຈັກເທື່ອອາບໜ້າ ໄຄຄ້າວອາບຫລັງ ແລ້ວເດຫັ້ນນາ, ຊ້ຳບໍ່ໜຳພັດແມ່ນແມ່ບິງ" ເວລານັ້ນອຸ່ນຄຳໄດ້ປ່ອຍຮອຍຍິ້ມອັນນິ້ມນວນ ແລະ ເປັນໜ້າຮັກ ທີ່ເປັນນິດໄສປະຈຳຕົວ ຂອງນາງອອກມາ ທັງບິກະເຂນຂຶ້ນເຊັດນ້ຳເຫື່ອ ທີ່ອາບໜ້າອາບຕາ, ແລ້ວເອົາມືຊວ້ານຜົມ ທີ່ປ່ອຍລົງປົກຕານັ້ນ ທັງຕອບວ່າ: "ນ້ອງບໍ່ເໝື່ອຍປານໃດດອກ". ແລ້ວກໍຟ້າວຄວາມືໄປຍາດເອົາໄມ້ຄານ ທີ່ມັດຕິດໃສ່ກົນຕັ້ງຂຶ້ນບ່າ ແລ້ວຊວນອ້າຍບົວລາຫາມໄປ. ໃນເວລາຫາມຕີນຕັ້ງໄປນັ້ນ ອ້າຍບົວລາ ຊາຍສະກັບ ຜູ້ທີ່ມີກຳລັງວັງຊາປານນັ້ນ ກໍຍັງຮູ້ສຶກອິດເໝື່ອຍແລ້ວ, ໃຜກໍຄົງຕວງບາກປູ່ວ່າ: ອຸ່ນຄຳຈະອິດເໝື່ອຍ

ສ່ຳໃດ. ອ້າຍບົວລາ ຈຶ່ງໄດ້ເລືອດຕາເບິ່ງອຸ່ນຄຳ ດ້ວຍແສງຕາທີ່ເຈາະຈິງ ຄືຈັ່ງລາວຢາກຢັ່ງເບິ່ງລະດັບຄວາມອົດທົນຂອງນາງ ມີໜ້ອຍຫລາຍປານໃດ? ແຕ່ອີກອັນໜຶ່ງ ລາວກໍຄາດຄະເນວ່າ: ອີກບໍ່ດົນນີ້ ອຸ່ນຄຳອາດຊວນພັກ. ຄວາມຈິງພັດບໍ່ຖືກຕາມການຄາດຄະເນໄວ້ຂອງລາວ. ອຸ່ນຄຳເຖິງວ່າຮູ້ສຶກໜັກຢູ່ແລ້ວ, ແຕ່ນາງຍັງຄົງກ້າວໄປ ດ້ວຍບາດກ້າວທີ່ໜັກແໜ້ນ, ທະນົງອົງອາດ ແລະ ບືນຕົວກ້າວໄປຢ່າງບໍ່ຢຸດຢັ້ງ.

ດ້ວຍຈິດໃຈເດັດດ່ຽວ ໜຽວແໜ້ນ ບໍ່ງ້ທ່ຽງ ຕໍ່ຄວາມຫຍຸ້ງຍາກກັນດານນານາປະການນັ້ນ ປືນໃຫຍ່ ແລະ ລູກປືນໄດ້ຮອດຈຸດທີ່ໝາຍ ຕາມລະດັບຄາດໝາຍ ຂັ້ນເທິງບົ່ງໄວ້ຈາກນັ້ນບໍ່ຫລາຍຊົ່ວໂມງ ປືນໃຫຍ່ບອກນັ້ນ ກໍຄືບອກອື່ນໆກໍໄດ້ປະສານກັບ ສຽງປືນຕະລຸມບອນ ຂອງເຫລົ່າຮົບ ທະຫານລາວແຂ່ງຂັນກັນພົ່ນແປວໄຟ ແຫ່ງຄວາມຄຽດແຄ້ນຂອງນາງກໍຄືຜູ້ອື່ນໆ ໄປເຜົາຫົວຝູງມານຮ້າຍ ລູກມືອາເມລິກາປານທ່າຝົນ. ລູກປືນອັນແມ່ນຢຳຂອງບັນດາເຫລົ່າຮົບ ໄດ້ສັງຫານສັດຕູ ທີ່ດື້ດ້ານຢ່າງສົມນ້ຳໜ້າ, ກູ້ເອົາດິນແດນອັນແສນຮັກ ແລະ ຫວງແຫນແຫ່ງນັ້ນມາໄດ້ຢ່າງມີໄຊ.

ພາຍຫລັງໄດ້ພ້ອມກັບສຳເລັດໜ້າທີອັນສະຫງ່າງາມ ດັ່ງກ່າວ, ບັນດາອ້າຍເອື້ອຍນ້ອງປູໃດກໍດີອົກດີໃຈ ແລະ ຫ້າວຫັນມ່ວນຊື່ນກັບດື່ມກິນກອງ. ເມື່ອເມື່ອຮອດສຳນັກ ອຸ່ນຄຳບັງບໍ່ຍອມພັກຜ່ອນເທື່ອ, ຍ້ອນຄວາມດີໃຈຫລາຍ ນາງໄດ້ແລ່ນໄປເອົາຈັກ, ເຈັ້ບແລະອື່ນໆອອກມາເຮັດວຽກ ໂລດເມື່ອເຫັນດີແນວນັ້ນນາງວັນດີຜູ້ທີ່ຖືກໃຫ້ເຮັດວຽກແລະ ເຝົ້າສຳນັກກໍຟ້າວແລ່ນມາໃສ່ທັງເວົ້າວ່າ: "ເຈົ້າກໍຊິໂພດ ຊີ:ຫລືອຫລາຍ, ເມື່ອຍປານນັ້ນກໍພັກຜ່ອນກ່ອນລະບໍ!" ແຕ່ ອຸ່ນກໍາກໍບໍ່ເອົາຫົວຊາ ແລະ ກົ້ມໜ້າເຮັດວຽກດ້ວຍຄວາມ ຊື່ນໃຈ.

ຕາມທຳມະດາທຸກໆປີພາຍຫລັງເລີກການແລ້ວ, ບັນດາພະນັກງານນັກຮົບທ້ອງການເມືອງ ກອງບັນຊາການ ເຂດຊຽງຂວາງ ຕ່າງກໍໄດ້ແບ່ງປັນກັນໄປເຮັດໄຮ່:ຮັດສວນ, ຫາຫລົວຫາຟືນແລະອື່ນໆ ແລງມື້ນັ້ນອຸ່ນກໍາກັບເອື້ອຍ ຄຳສີໄດ້ສະໜັກໄປຫາຜັກມາໃຫ້. ໃນຂອບເຂດນັ້ນໃຜດີ ໄປແນມເຫັນຕົ້ນກ້ວຍ.ແລະ ຜັກປ່າອື່ນໆ ເພາະບ້ອນໂຈນ ອາກາດອາເມລິກາ ຖອກເທລະເບີດລົງລ້າງຜານຈົນເປົ່າ ແປນປານເດີ່ນບ້ານ. ວຽກນີ້ເປັນວຽກທີ່ຍາກກ່ວາທຸກວຽກ ແຕ່ນາງກໍສະໜັກກ່ອນໝູ່ບ້ອນຄວາມຮັບຜິດຊອບ ເຖິງວ່າ

ຫຍຸ້ງຍາກ ພຽງໃດກໍຕາມ ແຕ່ນາງກໍສາມາດຜ່ານຜ່າສຳເລັດໜ້າທີ່ຂອງຕົນ ດ້ວຍໝາກຜົນອັນຈົບງາມ. ພໍແຕ່ໄດ້ພັກຫາຍ້າເຕັ້ນແຮງ ນາງຮູ້ສຶກເບີກບານໃຈ ທີ່ຕົນໄດ້ສຳເລັດໜ້າທີ່, ຕາມສາຍທາງກັບຄືນ ເຖິງວ່ານາງບໍ່ແມ່ນນັກຮ້ອງເພງ ນັກສະແດງ ຫຍັງດອກ, ແຕ່ນາງກໍພໍຮູ້ຮ້ອງເພງ ຮູ້ຂັບທ້ອງຖິ່ນບາງເລັກໜ້ອຍ, ເພງທີ່ນາງມັກຮ້ອງກ່ວາໝູ່ນັ້ນ ກໍແມ່ນເພງຊົມເຊີຍໄຊຊະນະຊຽງຂວາງ. ທີ່ນາງຈັບສະໜອນຫາກໍແຕ່ງ ພາຍຫລັງນັ້ນ ຮົບ ກູ້ ກຽດ, ນາງຮ້ອງເພງນັ້ນຍັງບໍ່ທັນສຸດ ບັງເອີນໄດ້ຍິນສຽງຍົນເບ-52 ຂອງອາເມລິກາ ຫວ່ານລະເບີດລົງຂອບເຂດນັ້ນປ່າງປ່າເຖື່ອນອັນໄດ້ຊຸດກົ້ນທຳລາຍພຶກສາຊາດ ໃນຂອບເຂດນັ້ນທີ່ເປົ່າແປນຢູ່ແລ້ວ ຍິ່ງເປົ່າແປນຕື່ມ, ສອງເອື້ອຍນ້ອງໄດ້ຖືກສະເກັດລະເບີດຕັດເຄື່ອງນຸ່ງຫົ່ມຂາດສ້ອຍ ແລະ ຂາເບື້ອງຊ້າຍ ຂອງນາງອຸ່ນຄຳກໍໄດ້ຖືກສະເກັດລະເບີດ ປາດໄປເປັນບາດຮອຍນັກໃຫຍ່, ຂະນະນັ້ນຄວາມເຈັບປວດໄປບັງຄັບໃຫ້ນາງຫລົງສະຕິໄປເປັນເທື່ອ ເປັນເທື່ອ, ແຕ່ນາງກໍພະຍາຍາມຕັ້ງສະຕິ, ເວລານັ້ນ ນາງປະກົດເຫັນພາບແຫ່ງຄວາມເຈັບຊ້ຳ ຂອງຊີວິດເບື້ອງຫລັງ ສາຍຜ່ານສາຍຕາຂອງນາງ ພໍເປັນເງົານາງໆ ນາງປະກົດເຫັນໃບໜ້າ

ຂອງພໍ່ ແລະ ອ້າຍທີໄດ້ສູນເສຍຊີວິດຢ່າງໜ້າສົນເພດນັ້ນ, ຄວາມຄຽດແຄ້ນທີ່ນາງມີຢູ່ແລ້ວນັ້ນ ຍິ່ງປຸ້ນຂຶ້ນປານອົກຊິແຕກ, ນາງພະຍາຍາມຊູຕົວຂຶ້ນດ້ວຍຄວາມເຈັບປວດ, ເວລານັ້ນອ້າຍສີວານ ແລະ ອ້າຍບຸນທັນໄດ້ແລ່ນໄປໂຊມເອົານາງ ທັງຮ້ອງອ້າຍຄໍາວັນຮີບມາພັນບາດໃຫ້ອຸ່ນຄໍາທັງແບ່ງຄົນໄປຊ່ວຍເອົາເອື້ອຍສີ.

ອາການເຈັບຂອງນາງໜັກໜ່ວງ ດັ່ງນັ້ນຜູ້ໃດກໍ່ສຸດທີ່ເປັນຫ່ວງເປັນໃຍ ແລະ ອິດົກກັງວົນນໍານາງ, ແຕ່ນາງກໍ່ບັງອົດສາສົ່ງສຽງອອກມາຄ່ອຍໆ ວ່າ: "ຈົ່ງໄປຊອກຫາເອື້ອຍສີແລ້ວຈິ່ງມາວ້ອນເອົານ້ອງກໍ່ໄດ້." ເວລານັ້ນອຸ່ນຄໍາຕ້ອງໃຊ້ຄວາມອົດທົນກັບຄວາມເຈັບປວດ ແລະ ນາງກໍ່ບໍ່ສະເພາະແຕ່ບໍ່ຮ້ອງບໍ່ຄາງເທົ່ານັ້ນ, ແຕ່ຍັງໄດ້ສັ່ງໝູ່ເພື່ອນວ່າ: "ເຮົາຖືກບາດເຈັບແລ້ວ, ຍັງມີແຕ່ພວກເພື່ອນເຮັດວຽກຢູ່ເຮືອນ, ດັ່ງນັ້ນພວກເພື່ອນຈົ່ງພະຍາຍາມເຮັດວິຊາສະເພາະລໍຖ້າເຮົາເຮົາຈາກພວກເພື່ອນໄປບໍ່ດົນຈະກັບຄືນມາ ພ້ອມກັບສືບຕໍ່ເຮັດຫລ້ອນໜ້າທີ່ຂອງຊາວ ແລະ ຂັ້ນເທິງມອບໝາຍໃຫ້".

ຈາກຜົນງານ ແລະ ຄຸນງາມຄວາມດີຂອງນາງໃນບັ້ນສະຫລຸບຜົນງານປີ 1971 ອຸ່ນຄໍາໄດ້ຖືກຄັດເລືອກເປັນນັກ

ຣົບ 3 ເກົ້າ ແລະໄດ້ຮັບຫລຽນໄຊອິດສະຫລະຊັ້ນ 2 ປ່າງ
ສົມກຽດ ຈາກນັ້ນນາງໄດ້ຮັບກຽດກາງກອງປະຊຸມສາກົນ
ກ່າວປະນາມໂທດກຳຂອງອາເມລິກາ. ແບບຢ່າງອັນດີເດັ່ນ
ໃນການຮັບໃຊ້ຊາດ,ຮັບໃຊ້ປະຊາຊົນຢ່າງບໍ່ມີຂອບເຂດຂອງ
ນາງອຸ່ນຄຳໄດ້ກາຍເປັນແວ່ນແຍງ ອັນປະເສີດໃຫ້ແກ່ພະ
ນັກງານ ແລະ ນັກຮົບໃນກອງທັບປົດປ່ອຍປະຊາຊົນລາວ.
ແຕ່ນັ້ນມານາງໄດ້ຖືກຄົນທັງຫລາຍຂະໜານນາມ ໃຫ້ວ່າ:
" ນັກຮົບພົມດິດທີ່ໜ້າສັນລະເສີນ "

ບຸນສົ່ງ ແກ້ວບົວສາຍ

## ໑໓

## ຊີວິດກອງຫລອນ ຂອງ ສ.ຫ.
## ເບັ້ງຢ່າຫ່າວ

* ເບັ້ງຢ່າ ເປັນຜູ້ໜຶ່ງໃນຂະບວນກອງຫລອນ ເມືອງ ປາກແຊງ, ແຂວງຫລວງພະບາງ. ສະຫາຍເປັນຄົນວ່ອງໄວ ມີໄຫວພິກສະຫລາດຄ່ອງແຄ້ວ ແລະ ສຸດທີ່ໝັ້ນໜຽວ ຫີນຫານ, ຄວາມບາກບັ່ນຂະຫຍັນພຽນ ແລະ ຄວາມຊື່ສັດບໍລິສຸດຕໍ່ປະເທດຊາດ ຢ່າງບໍ່ມີຂອບເຂດ ຂອງລາວນັ້ນ ໄດ້ຊຸກຍູ້ໃຫ້ລາວ ເປັນຜູ້ທີ່ ເປັນຫ່ວງເປັນໄຍ ບໍາຊາວກໍາ ຂອງຊາດ, ເປັນຫ່ວງ ເປັນໄຍນໍາໜ້າທີ່ວຽກງານຢູ່ສະເໝີ. ດັ່ງນັ້ນ ຕະຫລອດເກືອບ 20 ປີ ທີ່ໄດ້ກິ້ງເກືອກລີ້ເລືອ ແລະ ດໍາເນີນການຕໍ່ສູ້ ອັນສຸດແສນລໍາບາກ ຍາວນານ ແລະ ລະອຶດ ລະອ້ຽວນັ້ນ, ລາວຈຶ່ງໄດ້ກາຍເປັນຜູ້ໄດ້ແບກຫາບພາລະໜ້າທີ່ ໜັກໜ່ວງທີ່ສຸດ ແຕ່ລາວກໍບໍ່ໄດ້ອ່ອນເພຍເສຍກໍາລັງໃຈ ຫລື ທວາດຫວັ່ນແຕ່ປະການໃດ, ສະຫາຍໄດ້ຕັ້ງໜ້າພະຍາຍາມ ແບກຫາບພາລະໜ້າທີ່ ອັນສໍາຄັນນັ້ນ

ປຽບເໝືອນສິ່ງທີ່ຂາດບໍ່ໄດ້ໃນຊີວິດຂອງລາວ. ຄວາມທຸລະ
ກັນດານ ແລະ ຄວາມລຳບາກຍາກເຂັນ ຮ້ອຍປິ່ນພັນຕ່າວ
ທີ່ລາວເຄີຍປະສົບມາກ່ອນນັ້ນ ໄດ້ກາຍເປັນທຶນຮອນອັນປະ
ເສີດສຳລັບຊີວິດຂອງກອງຫລອນຂອງລາວ ທີ່ຈະໄດ້ອຸທິດ
ພົນງານ ໃຫ້ແກ່ ພາລະກິດ ປະຕິວັດ ນັບວັນ ນັບຫລວງ
ຫລາຍ ສະງ່າງາມ.

ເມື່ອຫວນຄິດຄືນໄລຍະທາງແຫ່ງຊີວິດທີ່ສະຫາຍເນັ່ງ
ປ່າ ແລະ ອ້າຍນ້ອງ ກອງຫລອນ ຊົນຊາດຕ່າງໆ ໃນເມືອງ
ປາກແຊງ, ແຂວງຫລວງພະບາງໄດ້ສູ້ຊົນໝື່ນທຸກ ເຄີຍ
ໄຫວກໍ່ສູ້ຢ່າງລຳບາກ ກາກກຳ ແລະ ເອົາຊະນະມາໄດ້ນັ້ນ
ອາດເວົ້າໄດ້ວ່າ ສະຫາຍເນັ່ງປ່າ ເປັນຜູ້ບັນຊາການ ທີ່ສະ
ຫລາດແຫລມຄົມຜູ້ໜຶ່ງ ທັງມີຫົວຄິດປະດິດສ້າງ ປ່າງ
ໜ້າຫັດສະຈັນທີ່ສຸດ ນອກນັ້ນສະຫາຍຍັງເປັນຫົວໜ້າ
ພະລາທິການໃຫ່ຍ ແລະ ເປັນຫົວໜ້າອົງການປົກຄອງ
ທີ່ຊຳນິຊຳນານຜູ້ໜຶ່ງອີກດ້ວຍ.

ເວລານັ້ນຊີວິດຂອງກອງຫລອນ ເມືອງປາກແຊງ ບໍ່
ຕ່າງຫຍັງກັບລົ້ນໄມ້ປ່ຽວເທິງຈອມດອຍ ທີ່ເວລາໃດກໍ່ຕ້ອງ
ໄດ້ສູ້ທົນກັບລົມແຮງ ທຸກສາຍທີ່ພັດມາຈາກສາລະທິດ,
ເຂົາເຈົ້າເວລາໃດກໍ່ອາໃສຄວາມໝັ້ນໜຽວ ແລະ ຄວາມ

ເຂັ້ມແຂງທີ່ມາຈາກຈິດໃຈອັນຜ່ອງໃສ ຂອງຄວາມຮັກເຊື້ອແພງຊາດ ແລະຫວງແຫນບ້ານເກີດເມືອງນອນອັນສູງສົ່ງນັ້ນ, ສູ້ຊົນ ແລະ ຜາບແພ້ທຸກສິ່ງທຸກຢ່າງທີ່ເປັນອຸປະສັກຂັດຂວາງເສັ້ນທາງເດີນຂອງເຂົາເຈົ້າ.

ໃນລະດູຝົນປີ 1໙໕໙ ກໍຈັ່ງແມ່ນຝົນຫລາຍເອົາແທ້ເອົາວ່າ, ຝົນຕົກຟ້າລົບປູ່ຢ່າງບໍ່ມີເວລາເອັ້ຍ ເວລາເຊົາ, ສັດສາວາສິ່ງໃນປ່າດົງນັ້ນຈົນບໍ່ມີເວລາໄດ້ຮ້ອງແລະໄດ້ທ່ຽວຫາກິນ, ດິນຟ້າອາກາດລະດູນັ້ນຊ່າງກໍ່ຄວາມຫຍຸ້ງຍາກລຳການໃຫ້ແກ່ການດຳລົງຊີວິດຂອງມວນມະນຸດ ແລະ ເດຍລະສານອີຫລີ, ສວນໂອກາດທີ່ປະຊາຊົນເຮົາ ພວມປະສົບກັບຄວາມຫຍຸ້ງຍາກ ຂັດສົນໃນຫລາຍດ້ານນີ້ ຈັກກະພັດອາເມລິກາ ແລະ ລູກມືໄດ້ໃຊ້ກຳລັງ ຢ່າງ ຫລວງຫລາຍອອກເຄື່ອນໄຫວກວາດລ້າງປາບປາມປຸ້ນລະດົມເຂັ່ນຂ້າຮາວີ ຊີວິດຊັບສົມບັດ ຂອງປະຊາຊົນ ຢ່າງປ່າເຖື່ອນສຸດຂະໜາດ ອັນແນໃສ່ບາບຢູ່ຈິດໃຈຕໍ່ສູ້ອັນເດັດດ່ຽວ ຂອງຂະບວນກອງຫລອນໃນທ້ອງຖິ່ນດັ່ງກ່າວ ໃຫ້ລົດນ້ອຍຖອຍລົງ ແລ້ວໃນທີ່ສຸດ ກຳລັງປະຕິວັດທີ່ຍັງອ່ອນນ້ອຍ ແລະ ຫລ້າຫລັງນີ້ ກໍຈະຖືກດັບສູນໃຫ້ມຸດມອດໄປ ຢ່າງສິ້ນເຊີງ. ແຕ່ຄວາມຝັນແບບນັ້ນ ມັນຄິດງ່າຍເກີນໄປສາແລ້ວ, ລາງຝັນທາງປືນ

ຂອງພວກຂາຍຊາດ ດັ່ງກ່າວ ມັນບໍ່ສະເພາະແຕ່ຈະບໍ່ໄດ້ຮັບຜົນປະໂຫຍດຫຍັງທີ່ນັ້ນ, ແຕ່ມັນຍັງເປັນລາງຮ້າຍ ທີ່ພວກເຂົາແກ້ບໍ່ຕົກອີກດ້ວຍ. ພວກສັດຕູປ່ອນຕີນເຂົ້າມາບໍລິເວນເມືອງປາກແຊງ ເວລາໃດກໍບໍ່ຕ່າງຫຍັງກັບເອົາຕີນຊຸກເຂົ້າບ້ວງແຮ້ວ. ພວກມັນຈະເຕັ້ນຈະດີດ ອີກເມື່ອຍຈົນປາງຕາຍອອກ ກໍບໍ່ມີທາງທີ່ຈະ ຫລຸດພົ້ນ ອອກຈາກວົງລ້ອມອັນແໜ້ນໜາຂອງສົງຄາມປະຊາຊົນໄດ້.

ເມື່ອຄົນທັງຫລາຍໄດ້ຍິນຄຳວ່າ ສົງຄາມກອງຫລອນຫລືສົງຄາມປະຊາຊົນນັ້ນ ຫລາຍຄົນກໍອາດຈະໃຫ້ຄວາມສົນໃຈແຕກຕ່າງກັນຫລາຍຮ້ອຍແບບວ່າ: " ກອງຫລອນເມືອງປາກແຊງຕໍ່ສູ້ດ້ວຍວິທີການໃດ ຈິ່ງເອົາຊະນະກັບສັດຕູທີ່ມີກຳລັງພົນຫລວງຫລາຍແລະມີອາວຸດທີ່ທັນສະໄໝນັ້ນໄດ້ " ເມື່ອເວົ້າເຖິງໝາກຜົນຂອງການຕໍ່ສູ້ນັ້ນ ມັນກໍແມ່ນເລື້ອງຍາກແສນຍາກແທ້. ເພາະອາວຸດໃນກຳມືຂອງເຂົາເຈົ້າເວລານັ້ນມີພຽງແຕ່ປືນກ່ານ (ປືນລາວສູງ) ງ້າວ, ດາບ, ແລະ ຂວາກ ຮ່າວ ຫຼາວແຫຼມທີ່ນັ້ນ ທີ່ເປັນອາວຸດພື້ນເມືອງ ອັນຫລ້າສະໄໝ ພໍແຮງແລ້ວ ຕ້ານກັບ ອາວຸດທັນສະໄໝຂອງຈັກກະພັດອາເມລິກາ: ອາວຸດທີ່ເຂົາເຈົ້າຖືວ່າ ເຄື່ອນທີ່ອ່າວ ສະດວກ ແລະ ອ່າວໃຊ້ການໄດ້ແດ່ນັ້ນ

ກໍມີແຕ່ປືນກ່ານ, ເວົ້າສຳລັບປືນກ່ານແລ້ວ ແມ່ນປືນຊະ
ນິດໜຶ່ງທີ່ຍິງດ້ວຍໝໍ້ ທີ່ປະດິດດ້ວຍຂະເຈັບ. ນາດ ແລະ
ຖ່ານ ປືນຊະນິດນີ້ ເມື່ອຍິງບາດໜຶ່ງແລ້ວຕ້ອງໄດ້ເອົາໝໍ້
ທີ່ບັນຈຸ ໄວ້ພົກແຂວນແອວ ໄປນຳນັ້ນບັດໃສ່ແລ້ວ ທັ້ງໃຫ້
ແໜ້ນດີ ຈຶ່ງຍິງອີກ, ການຮັກສາ ໝໍ້ປືນ ແລະ ລູກປືນ
ເພື່ອສົງຫານສັດຕູນັ້ນ ບໍ່ວ່າງຫຍັງກັບ ຮັກສາ ເຄື່ອງຄ້ຳ
ຂອງຄູນ ໃນຊີວິດ ຂອງ ເຂົາເຈົ້າ ໂດຍສະເພາະ ຢ່າງຍິ່ງ
ແມ່ນເວລາຝົນຕົກ ເຂົາເຈົ້າໄດ້ເອົາໃຈໃສ່ ຮັກສາພົກໝໍ້ນັ້ນ
ກ່ວາລູກເຕົ້າທີ່ເປັນກ້ອນໂລຫິດທີ່ແທ້ຈິງຂອງຕົນ, ເວລາ
ນັ້ນ ປະກົດວ່າ ຄວາມຫຍຸ້ງຍາກກັບການ ທັງໝົດ ທີ່ມີໃນ
ໂລກນີ້ໄດ້ສຸມໃສ່ແຕ່ເຂົາເຈົ້າຜູ້ດຽວ, ເຂົາເຈົ້າ ບໍ່ຈັກລົ້ມລຸກ
ຄຸກຄານ, ຂຶ້ນພູລົງເຫວ ເລາະຫ້ວຍນັ້ນ ລົງຫ້ວຍນີ້ ຕາກ
ໝອກກາກຝົນຈົນຕະຫລອດປີ, ໃບກ້ວຍ ແລະໃບພຸກເປັນ
ເຄື່ອງກັນຝົນໃນການເຄື່ອນໄຫວ ປະຕິບັດ ໜ້າທີ່ຂອງເຂົາ
ຜາສູງ ເຫວຊັນ ອັນເປັນໜ້າຫວາດສຽວບ່ອນໃດກໍ່ມີຮອຍ
ຕີນໄປກວດກາ ສາລະເວຂອງເຂົາເຈົ້າ. ຜ່ານການສູ້ຮົບອັນ
ດຸເດືອດສັບສົນຫລາຍຄັ້ງຫລາຍຄາວນັ້ນໄດ້ຝຶກຝົນໃຫ້ເຂົາ
ເຈົ້າສະຫລາດຂຶ້ນທຸກທີ, ມັນສະໜອງທີ່ສັດຕູໝັ້ນປະ
ໝາດວ່າໂງ່ຈ້າຫລ້າຫລັງນັ້ນ ກໍ່ສາມາດປະດິດສ້າງໄດ້ອາ

ວຸດຫລາຍແບບທີ່ໃຊ້ສັງຫານສັດຕູ. ສະຫາຍໄດ້ເອົາໃຈໃສ່ຄົ້ນຄ້ວາແລະຊອກຮູ້ການຕຳລາເດີມ ຂອງເຖົ້າແກ່ລາວສູງທີ່ປະດິດຂຶ້ນປ້ອງກັນສັດຮ້າຍໃນເມື່ອກ່ອນ. ເຜັ່ງຢ່າໄດ້ຄົ້ນຄ້ວາເຮັດປືນໃຫຍ່ໄດ້ 2 ຊະນິດຄື: ຊະນິດໜຶ່ງເຮັດດ້ວຍໄມ້, ອີກຊະນິດໜຶ່ງນັ້ນ ແມ່ນເຮັດດ້ວຍໜັງງົວ, ຄຸນນະພາບຂອງປືນ 2 ຊະນິດນີ້ປາກຄ້າຍຄືກັນ, ແຕ່ປະສິດທິພາບມີອັນຫລຸດລົ່ນກັນຈັກໜ້ອຍ, ປືນທີ່ເຮັດດ້ວຍໄມ້ແມ່ນຍິງໄດ້ໄລຍະໄກ 100 ແມັດ, ແລະຍິງໄດ້ພຽງແຕ່ 2 ບາດທໍ່ນັ້ນເລົາປືນກໍແຕກໃຊ້ການບໍ່ໄດ້ອີກ, ສ່ວນປືນໜັງງົວນັ້ນຍິງໄດ້ໄລຍະໄກ 150 ແມັດ, ຊະນິດນີ້ຍິງໄດ້ 4 ບາດຈຶ່ງແຕກ, ອາວຸດ 2 ຊະນິດນີ້ມີແຕ່ໃຊ້ໃນເວລາຈັ້ງທ່າສະກັດກີສັດຕູທີ່ນັ້ນ. ເຖິງແນວນັ້ນກໍຕາມໃນປີນັ້ນເຂົາເຈົ້າໄດ້ຕີໃຫ້ບັ້ນກວດລ້າງຂອງສັດຕູເຂົ້າມາແສງບາໂພໃຫ້ປະລາໄຊເຖິງ 4 ບັ້ນໃຫຍ່ ແລະພ້ອມນັ້ນເຂົາເຈົ້າຍັງໄດ້ເອົາໃຈໃສ່ຂົນຂວາຍກໍ່ສ້າງພື້ນຖານໄດ້ເຖິງ 6 ບ້ານ, ຂົນຂວາຍທະຫານມາກໍໄດ້ 1 ກອງຮ້ອຍ, ທະຫານຝ່າຍຂວາ 1 ກອງຮ້ອຍ. ຈາກຜົນງານທີ່ເວົ້າມາຂ້າງເທິງນັ້ນ ໄດ້ເຮັດໃຫ້ອິດທິພົນຂອງກອງຫລອນເມືອງປາກແຊງເດັ່ນຊັດຂຶ້ນຊັ່ກໃຊ້.

ມື້ໜຶ່ງໃນກາງເດືອນ 8/1959 ສະຫາຍເຜັ່ງຢ່າໄດ້ນຳ

ພາອ້າຍນ້ອງ 6 ຄົນອອກໄປກວດກາສາລະເວຕິດຫາດຊ່ອງ ແລະ ຫ້ວຍສະຂິງ ເຂົາເຈົ້າໄດ້ແບ່ງກັນເປັນ 2 ຈຸ, ຈຸໜຶ່ງ ມີ 3 ຄົນຈຸທີ 2 ມີ 4 ຄົນນັບທັງສະຫາຍເອງ. ພໍແຕ່ໄປ ຮອດບ້ານລ້ອງແອ່ນ ບັງເອີນໄດ້ຍິນສຽງປືນປົກກະຕິດັງຂຶ້ນ, ທັນໃດນັ້ນ ສະຫາຍກໍຈຳແນກໄດ້ໂລດວ່າສຽງທີ່ພວມດັງ ອຶກກະທຶກຢູ່ນັ້ນ ແມ່ນອນແມ່ນສັດຕູອອກເຄື່ອນໄຫວປາບ ປາມປະຊາຊົນບ້ານລ້ອງແອ່ນແລ້ວ, ສະຫາຍຟ້າວນຳພາ ອ້າຍນ້ອງລັດປ່າຜ່າດົງໄປຫາຈຸດດັກສະກັດ ທີ່ເຂົາໄດ້ຕວງ ໄວ້ກ່ອນນັ້ນຢ່າງໄວວາ, ເວລານັ້ນອ້າຍນ້ອງບາງຄົນທີ່ຍັງບໍ່ ເຄີຍຜ່ານການສູ້ຮົບກໍສະແດງຄວາມງົ້ທ່ຽງແລະວິຕົກກັງ ວົນທີ່ສຸດທີ່ເຫັນສັດຕູມີກຳລັງລື່ນດົນດັ້ງຫລາຍເທົ່າ ແລະ ທັງມີອາວຸດທັນສະໄໝຈົນຄົບມື, ສະຫາຍໄດ້ໃຊ້ ຄວາມ ທຸ່ນທ່ຽງເບື້ອກະເປັນ ແລະວິທີການອັນແນບນຽນຂອງລາວ ອົບຮົມອ້າຍນ້ອງ ໃຫ້ເຊື່ອໝັ້ນກຳລັງຕົນເອງ, ເຊື່ອອາວຸດ ພື້ນເມືອງທີ່ຫລ້າສະໄໝ ກໍສາມາດດີເອົາຊະນະອາວຸດທີ່ ທັນສະໄໝໄດ້, ກຳລັງໜ້ອຍກໍສາມາດເອົາຊະນະກັບກຳລັງ ຫລາຍໄດ້, ປະລິມານບໍ່ທ່ອນທໍ່ຄຸນນະພາບ.

ພາຍຫລັງເຂົາເຈົ້າ ໄປເຖິງປ່ຳເລົາອ່ອນ ແຫ່ງໜຶ່ງ ທີ່ມີໂພນປວກພຽງໂພນດຽວ ຢູ່ຂ້າງທາງ ທີ່ສັດຕູເຄີຍ

ຫຼວງໄປກໍ່ກຳທຳເຂັນແກ່ປະຊາຊົນ   ຕາມຫມູ່ບ້ານຕ່າງໆ
ນັ້ນກໍ່ຈັ້ງແນ່ນເຫມາະສົມ ກັບການດັກສະກັດຂອງເຂົາເຈົ້າ
ອືຫລື. ຄ້າຍກັບວ່າດິນດອນ.ວອນຫາຍ້າທີ່ບໍ່ມີວິນຍານນັ້ນກໍ
ໄດ້ເປັນໃຈກັບເຈົ້າຫ້ອງຖິ່ນ ທີ່ໄດ້ກຳເນີດເກີດກັບ  ພູມລຳ
ເນົາແຫ່ງນີ້: ຈາກນັ້ນບໍ່ເຫິງພວກນີ້ເປົ້າ  ທີ່ອອກໄປສ້າງ
ກຳທຳເວນໃຫ້ແກ່ປະຊາຊົນນັ້ນກໍພາກັນ ຍ່າງຊິກເຊັກມາ
ຈັກຜູ້ພາຍເສື້ອ, ຜູ້ເອົາປືນຄອນໄກ່  ຜູ້ຈັບແກ້ວເຫລົ້າມາ
ຢ່າງບໍ່ເປັນລະບຽບ, ສະຫາຍທັງ 4  ທີ່ລໍຖ້າສັງຫານສັດ
ຕູເພື່ອແກ້ແຄ້ນແທນພໍ່ແມ່ປະຊາຊົນ   ນົດຢູ່ຫລັງຈູມນັ້ນ
ໄດ້ສັກແສງຕາຕິດຕາມສັດຕູ  ທຸກບາດຍ່າງ.ເຂົາເຈົ້າຄ່ອຍ
ໃຫ້ສັດຕູຫຍັບເຂົ້ານໍ່ໆເພື່ອໃຫ້ເຂົາເຈົ້າມີໂອກາດໄດ້ລັ້ນໄກ
ປືນໄວ, ອາວຸດພົ້ນເມືອງແລະອາວຸດທີ່ເຂົາບາດມາໄດ້ຈາກ
ສັດຕູທັງ 4 ກະບອກໄດ້ຊ້ອງນາຫາສັດຕູເປັນຊາບລາບຢູ່
ຈາກນັ້ນບໍ່ພໍທໍ່ໃດນາທີປ່າດົງພົງໄພ ທີ່ມິດມີເປັນຢ່າງບໍ່ມີ
ສຽງຈີ່ຫລ່ ຈີນາຍຮ້ອງນັ້ນໄດ້ຫລອນຟົດສະຫນັ່ນຂຶ້ນ ຈົນ
ກ້ອງຟ້າລະເທືອນດິນ  ກໍລະນີທີ່ສັດຕູບໍ່ກາວຝັນນັ້ນໄດ້ມາ
ເຖິງພວກມັນກ່ອນຢ່າງບໍ່ຮູ້ສຶກຕົວ, ການສູ້ປົ້ນລະຫວ່າງ 4
ສະຫາຍກັບສັດຕູເກືອບ 40 ຄົນນັ້ນກໍໄດ້ອຸບັດຂຶ້ນຢູ່ແຫ່ງ
ນັ້ນຢ່າງດຸເດືອດພວກສັດຕູ  ທີ່ບໍ່ຮູ້ທີ່ບຮູ້ແດນນັ້ນໄດ້ສູ້ຄືນພໍ

ຊາມຊາຕາຍ, ເຂົາເຈົ້າສູ້ກັບໄປໄດກັບມາຈົນເຖິງ 30 ນາທີແລ້ວສັດຕູຜູ້ດື້ດ້ານຍັງບໍ່ທັນຍອມຫນີເທື່ອ, ເນັ່ງຢ່າງຜູ້ສະຫລາດໄດ້ຊອກວິທີການ ຫລອກ ສັດຕູຢ່າງມີໄຫວພິບ, ທັນໃດນັ້ນ ພວກມັນກໍຖືກເສັບລັບ ແລະພ້າວຕັດຂາຫມາດໍ່ປົບຄາຍຢ່າງບໍ່ມີທີ່ທົບ.

ຫລັງຈາກຖືກປະລາໄຊ ຢ່າງອັບອາຍຂາຍຫນ້າເປັນເທື່ອທຳອິດນັ້ນແລ້ວ ກໍໄດ້ເພີ້ມກຳລັງມາທຳການກວາດລ້າງ ປາບປາມ ປະຊາຊົນ ໃນບໍລິເວນ ດັ່ງກ່າວນັ້ນ ອີກ ຢ່າງເປັນທະວີຄູນ, ກອງຫລອນເມືອງປາກແຊງໄດ້ກາງເປັນເປົ້າຫມາຍທີ່ເບິ່ງກາຍບໍ່ໄດ້ຂອງສັດຕູ ແລະ ພວກມັນກໍໄດ້ຖືວ່າປະຊາຊົນທ້ອງຖິ່ນນີ້ເປັນສົ່ງນເປັນຫນາມ ແລະ ເປັນສັດຕູພິດຂອງພວກມັນ ດັ່ງນັ້ນເຖິງວ່າພວກມັນ ຖືກກອງຫລອນ ແລະ ປະຊາຊົນທ້ອງຖິ່ນດັ່ງກ່າວ ຕີໃຫ້ຫົວແຕກຫົວຫວະ ຕັ້ງຫລາຍໆເທື່ອແລ້ວກໍຕາມ ແຕ່ຍ້ອນສັນດານເຈັບບໍ່ຫລາບຊາບບໍ່ຈື່ ຂອງພວກອາດສະຍາກອນສົງຄາມນັ້ນໃນປີ 1967 ພວກມັນພັດສົ່ງທະຫານຂອງມັນຈຳນວນ 3 ກອງຮ້ອຍມາທຳການກວາດລ້າງ ປະຊາຊົນຢູ່ທີ່ດບ້ານລ້ອງແອ່ນ ແລະພູຫນໍ່ຫວານອີກ.

ເພື່ອປົກປັກຮັກສາຊີວິດ ແລະ ຊັບສົມບັດຂອງປະຊາ

ຊົນ, ສະຫາຍເພັ່ງປ່າ ໄດ້ຟ້າວນຳນົບຫານີ້ໄປປຶກສາຫາລື ນຳໝູ່ຄະນະ ເພື່ອວາງແຜນການລະອຽດ ໃນການຕ້ານທານກັບບັ້ນບຸກລຸກບຽດບີດອັນໃຫຍ່ໂຕຂອງສັດຕູໃນເທື່ອນີ້

ສະຫາຍໄດ້ຮຽກໂຮມ ເອົາອ້າຍນ້ອງ ກອງຫລອນທີ່ມີພຽງແຕ່ 8 ຄົນນັ້ນມາແບ່ງໜ້າທີ່ລະອຽດແລ້ວ ສືບຕໍ່ປະຕິບັດ. ເຂົາແບ່ງກັນອອກເປັນ 2 ຈຸ, ຈຸໜຶ່ງມີໜ້າທີ່ຕີລົບກວນ ສະກັດກັ້ນການຄືບໜ້າຂອງສັດຕູ. ຈຸທີ່ສອງມີໜ້າທີ່ວັກສະກັດທາງຂ້າງນອກ. ເມື່ອເຂົາເຈົ້າໄດ້ເປັນເອກະສັນກັນ ເວລາກໍເດີກດື່ນພໍສົມຄວນແລ້ວ, ເພື່ອໃຫ້ທັນກັບສະພາບ ອັນເຄັ່ງຮ້ອນດັ່ງກ່າວ ເຂົາເຈົ້າໄດ້ມຸ່ງໜ້າໄປຫາດັກສະກັດລັດຕີສັດຕູ, ເຂົາກ້າວໄປຕາມທາງທີ່ເມືອກນື່ນ ທັງມືດປານກຳລາບົ່ນລະຫລອດຄືນ, ເຖິງຈະອຶດຫລັບງ້ວງນອນ ແລະ ອຶດເມື່ອຍຫິວໂຫຍປານໃດກໍຕາມເພື່ອເຮັດໃຫ້ການສູ້ຮົບຂອງເຂົາເຈົ້າ ໃນຊຸດນີ້ໄດ້ຮັບຜົນດີ, ເຂົາເຈົ້າຟ້າວວິ່ງເຕັ້ນຊອກຫາສະຖານທີ່ ກຳບັງທີ່ເໝາະສົມທີ່ສຸດເພື່ອກຽມຮັບມືກັບສັດຕູໃນບໍ່ຊ້ານີ້.

ອາລຸນຂອງມື້ໃໝ່ ເລີ້ມເບີກຟ້າແລ້ວບັນດານົກໜູທີ່ບໍ່ຮູ້ດຽງສາກໍບຸທ່າງອອກຊອກຢູ່ກາກິນຕາມປະສາສັດ. ແຕ່ອ້າຍນ້ອງກອງຫລອນທີ່ມີເສັ່ງຊອນສະພາບການອາດຈະ

ພັນແປໄປຢ່າງດວງບໍ່ຖືກນັ້ນ ພັດຄອງຄອບດ້ວຍຫົວໃຈທີ່
ຮ້ອນຮົນເຫມືອນໄຟເຜົາ. ເວລານາທີ່ພວມເຄື່ອນຍ້າຍນັ້ນ
ພັດຜ່ານໄປ ຜ່ານໄປຈົນສວາຍເດີບຈຶ່ງເຫັນສັດຕູ 3 ບັກ
ພາຍບີດິງອີລຸງປຸງບັງ ຍ່າງມາທິດເຂົາພວມດັກສະກັດຢູ່
ນັ້ນ ຢ່າງບໍ່ຫ່ວງຫນ້າຫ່ວງຫລັງ. ເພື່ອເປີດສາກໃຫ້ແກ່
ການລັ່ນປືນຊຸດນີ້ ເຂົາເຈົ້າໄດ້ສັ່ງຫານສັດຕູ 3 ບັກນີ້ກັບ
ບ່ອນແລ້ວ ຟ້າວອ່ວຍປາກປືນທັງໝົດຍິງສຸ່ມໃສ່ກະບານ
ຫົວຂອງສັດຕູປານຫ່າຝົນ. ເມື່ອສັດຕູຕົກທ່າຮັບແນວນັ້ນ
ພວກມັນໄດ້ໃຊ້ອາວຸດທັນສະໄຫມ ທຸກຊະຫນິດນັບທັງປືນ
ຈັກ, ປືນກົນ ແລະ ປືນຄົກຊະຫນິດຕ່າງໆຍິງໂຕ້ຕອບຄືນ
ຢ່າງຈອງຫອງ ແລະ ໃຊ້ກຳລັງທະຫານລາບຢ່າງຫລວງ
ຫລາຍທີ່ເຂົາຖືວ່າ "ອ່າວບອກໄດ້ໃຊ້ຟັງ" ນັ້ນຄືບການຍື້ນ
ມາເປັນພຶງບາບໆ, ເຂົາເຈົ້າທັງ 4 ໄດ້ຍິງຊ້າຍຍິງຂວາ
ເປັນປືນໆວົນໆຈົນບໍ່ໄດ້ຢູ່ໄດ້ເຊົາ, ຢາດເຫື່ອອາບຕາແລ້ວຍັງ
ຂຸຫລີ່ນລົງເຫມືອນຮວດຫມາກປັດຂາດ, ເຄື່ອງນຸ່ງຂອງຄື
ທີ່ປຽກຊຸ່ມຈົນຫມົດໂຕນັ້ນ ໄດ້ປ່ຽນຈາກສີດຳ ມາເປັນສີດ່າງ
ດາວຈົນບໍ່ສາມາດບອກໃຫ້ຖືກໄດ້, ໃບຫນ້າທີ່ສະອາດສະ
ອ້າງຂອງເຂົາເຈົ້າ ຫມົນຫມອງໄອບເຕັມໄປດ້ວຍ ຄວັນໝື້
ຄວັນເຈບ, ແຕ່ດວງຕາຂອງເຂົາເຈົ້າຍັງເສາະໃສແລະວ່ອງ

ໄວປານຕາໄກ່ປ່າ. ດັ່ງນັ້ນວ່າແຕ່ສັດຕູຕົວໃດຫານໄປໃສຫົວ ຂຶ້ນປືນອັນແມ່ນຢໍາຂອງເຂົາເຈົ້າກໍໄດ້ພົບກະສຸນໄປຫາເປົ້າ ດີບນັ້ນຢ່າງກະທັນຫັນ ຈົນເຮັດໃຫ້ສັດຕູເງີບຫົວເງີບຄໍ ບໍ່ ຂຶ້ນ. ຕະຫລອດ 24 ຊົ່ວໂມງທີ່ດໍາເນີນການຕໍ່ສູ້ອັນສຸດທີ່ ເດັດດ່ຽວຫນຽວແຫນ້ນ ແລະ ອົງອາດ ກ້າກັ່ນນັ້ນຫນ່ວຍ ກອງຫລອນທີ່ສັດຕູຖືວ່າ " ພ້າຂຶ້ນຫນ້ຽງລ້າງ " ນັ້ນຟາດ ຟັນສັດຕູລ່າຖອຍໄປຢ່າງເຈັບແສບຄານໆກັນ.

ເພື່ອກູ້ເອົາໄມ້ມືມັນລອດພົ້ນອອກຈາກໄພພິບັດ ແຫ່ງ ຄວາມພິນາດ ຈິບຫາຍ ທີ່ພວນຕົກເຂົ້າສະຫນົມເລີກຂອງ ສົງຄາມປະຊາຊົນນັ້ນ, ສັດຕູໄດ້ໃຫ້ບິນເດ 28 ສອງລໍາ ບິງທໍາລາຍບໍລິເວນອ້າຍນ້ອງເຮົາວັກສະກັດປູ່ນັ້ນຢ່າງໂຫດ ຮ້າຍປ່າເຖື່ອນ, ປືນປູ່ກໍ່ກັບນ້າສະພາບ ຄວາມເປັນຕາຍໃນ ນາທີທົວລ້ຽວທົວຕໍ່ ແນວນັ້ນເຂົາເຈົ້າກໍບໍ່ໄດ້ອ່ອນຫລືເສັຽ ກໍາລັງໃຈແຕ່ຢ່າງໃດ. ແນວຄິດເດັດດ່ຽວ ແລະ ບອມເສັຽ ສະຫລະທຸກສິ່ງທຸກຢ່າງເພື່ອປະຊາຊົນນັ້ນເຂົາເຈົ້າໄດ້ວາງ ເປັນຄໍາຂວັນປະຈໍາໃຈໄວ້ວ່າ: " ຍອມຕາຍ ແຕ່ບໍ່ຍອມຈໍານົນ." ດັ່ງນັ້ນ ຜ່ານ 24 ຊົ່ວໂມງແຫ່ງການຕໍ່ສູ້ອັນດູເດືອດ ກັບດານ ເຂົາເຈົ້າໄດ້ຕີໃຫ້ນັ້ນບຸກລຸກ ທີ່ມີກໍາລັງໄຟຊ່ວຍ ຫນຸນຢ່າງຫນາແຫນ້ນຂອງສັດຕູໃຫ້ແຕກທະລາຍໄປ 15

ຄັ້ງ, ຂ້າສັດຕູຕາຍຄາທີ່ 9 ບັກໃນນັ້ນມີຊຸ້ນຮ້ອຍໂຫບັກ ຫນຶ່ງ, ເຮັດໃຫ້ບາດເຈັບ 30 ກວ່າບັກແລ້ວສັດຕູທີ່ເສຍຂວັນກໍ່ແຕກກະຈັດກະຈາຍໄປຄົນລະທິບລະແຫ່ງ.

ພາຍຫລັງສັດຕູເກົ້າໂຮມກຳລັງ ທີ່ແຕກທັບນັ້ນ ໄດ້ສ່ວນໃດສ່ວນຫນຶ່ງແລ້ວ, ພວກມັນໄດ້ທຳການກວາດລ້າງບໍລິເວນບ້ານກະລາງກອງ ຢ່າງຊິ້ວຊ້າ ປ່າເຖື່ອນຕື່ມອີກ, ເມື່ອສະພາບ ທີ່ເປັນອັນຕະລາຍຮ້າຍກາດແນວນັ້ນ, ເຮັດແນວໃດຈິ່ງຈະຕ້ານທານໄດ້? ສະຫາຍເນັ້ງປ່າຈິ່ງຮຽກໂຮມເອົາປະຊາຊົນທັງໝົດມາລຸໄລ່ງແລ້ວ ມີຄຳສັ່ງໃຫ້ປະຊາຊົນຂ້າໝາ ແລະ ໄກ່ຜູ້ຈົນໝົດແລ້ວກຽມບົກຍ້າຍໃນທັນໃດ. ເວລານັ້ນ 2 ບັນຫາໃຫຍ່ທີ່ບໍ່ອາດໂບະຍານໄດ້ນັ້ນໄດ້ຊ້ອງຂຶ້ນພ້ອມໆກັນ, ເນັ້ງປ່າບໍ່ຈັກຮ້ອນໃຈນຳການສູ້ຮົບຕົບຕີ, ບໍ່ຈັກເປັນຫ່ວງເປັນໃຍນຳພໍ່ແມ່ພີ່ນ້ອງ, ຫົວໃຈຂອງລາວເວລານັ້ນ ຮ້ອນຂຶ້ນວູ່ງ ເຖິງແນວນັ້ນກໍ່ການເບິ່ງທ່າທີເຄັ່ງຮ້ອນ ແຕ່ເບືອກເປັນຂອງລາວນັ້ນເຮັດໃຫ້ລາວຄິດໄດ້ຖ້ວນຖີ່ແລະແນບນຽນດີ. ນີ້ແຫລະຈິ່ງສົມກັບຄຳທີ່ວ່າ :
"ແປວໄຟກ້າທົດສອບຄຳສົດ, ມີພຽນອົດຈຶ່ງເຫັນໄຊກ້າ"
ເຂົາເຈົ້າໄດ້ໃຊ້ຄວາມອາດຫານແລະຄວາມອົດທົນສູງກ່ວາທຸກສິ່ງທຸກຢ່າງ, ເຂົາເຈົ້າໄດ້ແບ່ງໃຫ້ອ້າຍນ້ອງກອງຫລອນ

ຊົນຊາດລາວສູງ 2 ສະຫາຍໄປດັກສະກັດຢູ່ເໜືອບ້ານກະລາງກອງ, ໃຫ້ 3 ສະຫາຍປ້ອງກັນແລະນຳພາປະຊາຊົນຍົກຍ້າຍ, ສຳຫລັບເບັ້ງຢ່າແລ້ວຍັງຈະໄດ້ກັບຄືນສຳນັກເນືອງດ່ວນ; ຕາມທາງເມືອສຳນັກທີ່ຄຸ້ນເຄີຍຂອງສະຫາຍໃນເທື່ອນີ້ ມັນຕ່າງກັບທຸກໆ ເທື່ອທີ່ລາວເຄີຍໄປເຄີຍມາ, ສະຫາຍບໍ່ມີໂອກາດຫລຽວຊ້າຍຽວຂວາ, ເວລານັ້ນຫູທັງສອງເບື້ອງຂອງສະຫາຍປະກົດວ່າ ຕຶບວັນຈົນບໍ່ໄດ້ຍິນຫຍັງໝົດສະຫາຍມີແຕ່ຄິດວ່າ : ເຮັດແນວໃດຈຶ່ງຈະຮັບປະກັນໄຊຊະນະ? ເຮັດແນວໃດຈຶ່ງປົກປັກຮັກສາຊີວິດຊັບສົມບັດຂອງປະຊາຊົນໄດ້? ນັ້ນເປັນຂອດສຳຄັນທີ່ພວມວຸ້ນວາຍໃຫຍ່ໃນມັນສະໝອງຂອງລາວບາດກ້າວທີ່ຫ່າງຈາກປະຊາຊົນແຕ່ລະກ້າວແມ່ນບາດກ້າວແຫ່ງຄວາມຫ່ວງໃຍອາໄລອາວອນ. ແຕ່ສະຫາຍກໍຈຳໃຈຕ້ອງປະຕິບັດແລະປະຕິບັດຢ່າງເຄັ່ງຮັດ.

ພໍແຕ່ມາຮອດສຳນັກ ສະຫາຍນັ່ງເຊົາແຮງ ເທື່ອຍັງບໍ່ທັນມຸດເທື່ອ ປະກົດໄດ້ຍິນສຽງປືນ ດັງຢູ່ທາງຫລັງເປັນລວາດໆ. ທັນໃດນັ້ນໃບໜ້າທີ່ຫວັ່ນວິຕົກນຳປະຊາຊົນຂອງສະຫາຍເສົ້າລົງຢ່າງກະທັນຫັນ. ເວລານີ້ສະຫາຍບໍ່ອາດອົດຢູ່ໄດ້ອີກແລ້ວ, ສະຫາຍຟ້າວມອບໜ້າທີ່ອັນຈຳເປັນ

ໃຫ້ໝູ່ຄະນະແລ້ວກໍຫັນໜ້າກັບຄືນຢ່າງຟ້າວຟັ່ງ, ຄວາມເປັນຫ່ວງເປັນໃຍ ທີ່ຝັງໄວ້ໃນຊວງອົກຂອງລາວນັ້ນໄດ້ຈັດເລັ່ງໃຫ້ສະຫາຍຕ້ອງຖິກບາດກ້າວໄວເທົ່າທີ່ຈະໄວໄດ້.ເມື່ອໄປຮອດບ່ອນແລ້ວ ສະຫາຍ ໄດ້ພ້ອມກັບອ້າຍນ້ອງກອງຫລອນທີ່ຫລັງເຈ່ຍລູກ ໜ້າພາຍປືນ ຕີສັດຕູຢ່າງພີລະອາດຫານ.

ເພື່ອປ້ອງກັນປະຊາຊົນແລະເດັກຂາດບໍ່ໃຫ້ສັດຕູຈັບໄດ້ ເຂົາເຈົ້າໄດ້ເດັດດ່ຽວສູ້ຊົນຈົນສຸດຄວາມສາມາດ, ແຕ່ຍ້ອນກຳລັງໂຕນກັນຫລາຍໂພດ ເຂົາເຈົ້າທັງຕີທັງປ້ອງກັນໃຫ້ປະຊາຊົນຖອຍ. ປະຊາຊົນຫລາຍກອບຄົວທັງເຈ່ຍລູກເລັກເດັກແດງ, ທັງຫາບເຄື່ອງເປ້ຂອງສຸດທີ່ໜັກໜ່ວງ ແລະເຄື່ອນໄປຢ່າງລຳບາກ, ແຕ່ກໍບໍ່ມີໃຜຈົ່ມວ່າແຕ່ປະການໃດນອກຈາກໄດ້ພ້ອມກັນ ຕັ້ງໃຈເອົາຕົນຫລົບຫລີກອອກຈາກເງື້ອມມືອັນເປື້ອນເລືອດຂອງພວກຂາຍຊາດ ລູກມືອາເມລິກາ. ໃນເວລາສຸດທີ່ກັນດານແນວນັ້ນ ບັງເອີນກ້ອນເມກທີ່ເລື່ອນລອຍເທິງເວຫານັ້ນໄດ້ຕ່ຳລົງເຮັດໃຫ້ອານາເຂດທີ່ສະຫວ່າງສະໄຫວມື້ເຊົ້ານັ້ນມືດກຸບເຂົ້າແລ້ວຝົນຫ່າໃຫຍ່ກໍ ທັ່ງເທລົງມາປານຖອກນ້ຳ. ທຳມະຊາດນີ້ຊ່າງເປັນອີຫລີຄ້າຍກັບວ່າມັນມີເຈດຕະນາຊຸ້ມຫົ່ມເອົາປະຊາຊົນໄວ້ ໃນມ່ານມືດ

ອັນມະຫາສານຂອງມັນປິດຫູບັງຕາ ຂອງພວກໝາປ່ານີ້ ບໍ່ໃຫ້ເຫັນໄດ້ເຫັນເໜືອ ແລະຈິ່ງບໍ່ໃຫ້ເຫັນຮອດຮ່ອງຮອຍທີ່ປະຊາຊົນຜ່ານໄປນັ້ນອີກ, ເມື່ອໂອກາດອຳນວຍແນວນີ້: ອ້າຍນ້ອງກອງຫລອນໄດ້ນຳພາປະຊາຊົນ 100 ກ່ວາຄອບຄົວທີ່ມີທັງ 3 ຊົນຊາດລາວເທິງ, ລາວສູງ, ລາວລຸ່ມນັ້ນຫລົບຫລີກຢ່າງຕະຫລອດປອດໄພ ແລະໄດ້ຂ້າສັດຕູຕາຍຫລາຍນັກ, ເຮັດໃຫ້ບາດເຈັບ 6 ນັກ ແລະ ຍຶດໄດ້ເຄື່ອງຂອງຈຳນວນໜຶ່ງ.

ພ້ອມໆ ກັບການສູ້ຮົບເກັ່ງແລະມີສະຕິລະວັງຕົວສູງຢູ່ທຸກເວລາ, ອ້າຍນ້ອງກອງຫລອນເມືອງປາກແຊງຍັງເປັນພະນັກງານຂົນຂວາຍທີ່ມີປີຊາສາມາດແລະກໍ່ສ້າງພື້ນຖານເກັ່ງໂດຍມີຜົນງານຕົວຈິງດັ່ງນີ້ ຂົນຂວາຍພື້ນຖານໄດ້ 11 ບ້ານ, ຂົນຂວາຍທະຫານນາກກີໄດ້ 1 ກອງຮ້ອຍມີຈຳນວນ 120 ຄົນ, ອາວຸດ 200 ກະບອກໃນນັ້ນມີປືນຈັກ 5 ບອກ, ປືນຄົກ 60 ມ/ມ 2 ບອກ, ໝາກແຕກ 500 ໜ່ວຍ, ມີນ 100 ໜ່ວຍ, ລູກປືນຊະນິດຕ່າງໆ 360 ກ່ວາລູກ, ຂົນຂວາຍທະຫານຝ່າຍຂວາໄດ້ 1 ກອງຮ້ອຍ. ພ້ອມນັ້ນເຂົາເຈົ້າຍັງໄດ້ອອກແຮງຊ່ວຍເຫລືອປະຊາຊົນ ປຸກປ້ວແປງເຮືອນ, ເຮັດໄຮ່ແລະເຮັດວຽກງານຕ່າງໆ ຢ່າງຫລວງຫລາຍ

ນອກນັ້ນເຂົາເຈົ້າຍັງໄດ້ເຮັດໄຮ່ສຳຮອງ ເພື່ອຊ່ວຍເຫລືອປະຊາຊົນຕື່ມອີກ.

ຜົນງານທັງໝົດທີ່ບົກຂຶ້ນມານັ້ນ ລ້ວນແຕ່ມີການປະກອບສ່ວນອັນສຳຄັນຂອງສະຫາຍເນັ້ງປ່າ, ດັ່ງນັ້ນເພື່ອຕອບສະໜອງຄຸນງາມຄວາມດີ ທີ່ບັນດາສະຫາຍໄດ້ອຸທິດໃຫ້ແກ່ພາລະກິດປະຕິວັດສູນກາງ ແລະກອງບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ກໍຄືກອງບັນຊາການແຂວງຫຼວງພະບາງ ໄດ້ຕົກລົງມອບຫລຽນໄຊອິດສະຫລະຊັ້ນ 3 ແກ່ສະຫາຍເນັ້ງປ່າໜ່ວຍໜຶ່ງ, ພ້ອມນັ້ນສະຫາຍຍັງໄດ້ຕັດສິນໃຈວ່າ: "ບໍ່ວ່າເວລາໃດ, ກໍລະນີໃດສະຫາຍກໍຈະເດັດດ່ຽວປົກປັກຮັກສາໝາກຜົນ ຂອງການປະຕິວັດຈົນເຖິງວິນາທີສຸດທ້າຍ"

24/VII
ห้ามจำหน่าย

ບຸນລື່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ຄວາມຈອງຫອງຂອງພວກປະຕິການໄທ ໃນເຫດການວັນທີ 9 ກຸມພາ 1977

ໂດຍ : ອິນທາ

ຈະເປັນເພື່ອນບ້ານກັນ ຫລືຈະເປັນສັດຕູກັນ?

ນີ້ຄືຄຳຄິດຂອງຂ້າພະເຈົ້າ ໃນຂະນະທີ່ລູກກະສຸນຂອງເຈົ້າໜ້າທີ່ປະຕິການໄທ ໄດ້ມາເດັດຊີວິດ ຂອງສະຫາຍວັນໄຊນັກຮົບປ້ອງກັນຊາຍແດນ ທີ່ແສນຮັກຂອງພວກເຮົາ ຢູ່ຫາດດອນຈັນ ໜ້າເຈັບໃຈອີ່ຫລີ ເຖິງວ່ານັກຮົບຜູ້ນັ້ນຈະສິ້ນໃຈໄປແລ້ວກໍ່ຕາມ ຫ່າກະສຸນປືນຂອງພວກມັນກໍຍັງຄົງບົງສຸມມາໃສ່ເລົາຄົງ ທີ່ປາສະຈາກ ວິນຍານຂອງສະຫາຍວັນໄຊຢູ່ກະຫລອດ; ເຫດການທັງໝົດເລົ່ານີ້ຂ້າພະເຈົ້າໄດ້ເຫັນດ້ວຍຕາຕົນເອງ ຢູ່ກາງແຈ້ງ ຕັ້ງແຕ່ ເວລາເລີ່ມເກີດເຫດ.

ມື້ນັ້ນ (ວັນທີ 9 ເດືອນກຸມພາ 1977) ແມ່ນ້ຳຂອງໃນລະດູແລ້ງ ທີ່ມີຫາດດອນຈັນພົ້ນຂຶ້ນຢູ່ລະຫວ່າງກາງກະ

ແສນ້ຳ ທີ່ພວກໄທລົງສູ່ທິດໃຕ້ ຢ່າງງຽບໆນັ້ນ ເວລາ 9 ໂມງ 30 ນາທີ ສຽງປືນ ໄດ້ດັງຂຶ້ນ ຢູ່ທາງຄຸ້ມ ທ່າສີຖານ ເໜືອນະຄອນວຽງຈັນ. ໃນສະຕິເປັນນັກຂ່າວຜູ້ໜຶ່ງ ຂ້າພະເຈົ້າກໍ່ຟ້າວໄປຫາບ່ອນທີ່ສຽງປືນ ດັງມານັ້ນໃນທັນທີ ໂລດ. ພໍໄປຮອດຕະຫລິ່ງ ຂອງ (ແຄມຝັ່ງຂອງ) ທັນໃດນັ້ນກໍ່ປາກົດເຫັນ ເຮືອ ບ. ປ. ຂ. ສີດຳຂອງໄທ 3 ລຳ ພວມແລ່ນຜ່ານກາງໜ້ານ້ຳລ່ວງລ້ຳເຂດແດນ ເຂົ້າມາຮັບເອົາຄົນລາວທີ່ໜີກົດໝາຍ 2 ຄົນຢູ່ກາງບ້ານທີ່ມໍ່ກັບ ຕະຝັ່ງຂອງລາວ. ໃນເວລາດຽວກັນນັ້ນ ຕຳລວດຊາຍແດນລາວກໍ່ພວມໄລ່ຕິດຕາມຄົນຮ້າຍດັ່ງກ່າວ ຕາມໜ້າທີ່ ຢູ່ໃນເຂດບ້ານແດນດິນຂອງຕົນໃນຖານະເປັນເຈົ້າໜ້າທີ່ຂອງປະເທດໜຶ່ງ ທີ່ເປັນເອກະລາດຢ່າງສົມບູນ. ແຕ່ໃນທັນໃດນັ້ນ ຫ່າກະສຸນປືນກົນ 12 ມີລີ 7 ທີ່ຕັ້ງຢູ່ເທິງເຮືອເຫລັກ 3 ລຳຂອງພວກປະຕິການໄທກໍ່ໄດ້ຍິງກວາດມາໃສ່ນັກລົບລາວທັງ 3 ຄົນໃນພາບດຽວຢ່າງບັງອາດຈອງຫອງທີ່ສຸດ. ທັນໃດນັ້ນ ອ້າຍນ້ອງທັງ 3 ຕ່າງກໍ່ພາກັນຍອບໝູບລົງ ກາງຫາດຊາຍທີ່ເປົ່າແປນ ສຽງປືນຄົກແອມ 79 ແລະປືນກົນທຸກຊະນິດຢູ່ໃນເຮືອ ບ. ປ. ຂ. ແລະຢູ່ເທິງຝັ່ງສີຊຽງໃໝ່ (ປະເທດໄທ) ກໍ່ສົມທົບກັນລະດົມຍິງສຸມມາໃສ່ນັກລົບລາວທັງ 3 ຄົນທີ່

ບອນໝູບປູ່ກາງຫາດຊາຍນັ້ນ ພ້ອມທັງໄດ້ຍິງກວາດມາ ໃສ່ຝັ່ງວຽງຈັນ ຊຶ່ງເປັນນະຄອນຫລວງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຢ່າງປ່ວງປ້າຈອງຫອງທີ່ສຸດ, ອັນໄດ້ເຮັດໃຫ້ເຮືອນປູ່ແລະໂຮງຮຽນຄຸ້ມສີຖານເໜືອຖືກກະສຸນທະລຸໄປຕັ້ງຫລາຍຫລັງ, ເຮັດໃຫ້ ປະຊາຊົນໃນເຂດນັ້ນຕ້ອງແຕກຕື່ນບໍ່ສະຫງົບອຸ່ນອຽນໃຈ.

ຂ້າພະເຈົ້າບັງຄົງຢືນສັງເກດ ເບິ່ງເຫດການປູ່ຕໍ່ໜ້າດ້ວຍຄວາມແຄ້ນເຄືອງໃຈເປັນທີ່ສຸດ. ໃນເວລາທີ່ໃຈບັງບໍ່ທັນຂາດ, ສະຫາຍວັນໄຊກໍໄດ້ພະຍາຍາມພິກຄົງຄືນຫລັງ ແຕ່ພໍເໜັງຕີງໜ້ອຍໜຶ່ງ ປືນຂອງພວກນິມານທີ່ປູ່ບ່ອນສູງເທິງຝັ່ງສີຊຽງໃໝ່ກໍຍິງກວາດມາໃສ່ໂລດ, ລູກກະສຸນໄດ້ມາຕົກແຕກປູ່ອ້ອມໂຕຄີງຂອງວັນໄຊ ສຽງດັງປານຂື້ວເຂົ້າກອກແຕກປູ່ເທິງໜ້າຂາງ ອັນໄດ້ເຮັດໃຫ້ດິນຊາຍໄຫງ່ກຸບຂຶ້ນ. ແຕ່ສະຫາຍວັນໄຊກໍບັງພະຍາຍາມລີເລືອຄອບມາທາງຫລັງເທື່ອລະຄືບ. ແຕ່ໜ້າເສຍດາຍໃນເວລາ 10 ໂມງ 15 ນາທີ ຮ່າງຄີງອັນທໍລະຫົດອົດທົນ ແລະ ພີລະອາດຫານຂອງສະຫາຍວັນໄຊໄດ້ປຸດປູ່ກັບທີ່, ໃນວິນາທີສຸດທ້າຍສະຫາຍບັງອົດທົນໂງຫົວຂຶ້ນ ແລະ ບົກມືຂອງຕົນຂຶ້ນກັວກອຳລາເພື່ອນຝູງທີ່ປູ່ທາງຕະຫລິງວຽງຈັນ ແລະ

ອຳລາວນະຄອນຫລວງທີ່ແສນຮັກແລະຫວງແຫນ. ພໍເຫັນພາບດັ່ງກ່າວ ນ້ຳຕາຂອງຂ້າພະເຈົ້າກໍໄຫລຊຶມບ່າໜ່ວຍອອກບ່າວໆ, ພວກເພື່ອນຕຳລວດຊາຍແດນທີ່ຢູ່ແປະຂ້າງຂ້າພະເຈົ້ານັ້ນ ຕ່າງກໍນ້ຳຕາໄຫລ ແລະທັງກັດແຂ້ວສະແດງຄວາມຄຽດແຄ້ນຫາອັນປຽບບໍ່ໄດ້, ມີນັກຮົບຫລາຍຄົນອົດບໍ່ໄດ້ກໍສາກລູກກະສຸນເຂົ້າລຳກ້ອງ ແລະປາກພູດແລ່ນລົງໄປກູ້ເອົາເພື່ອນຮ່ວມຮົບຂອງຕົນ, ກູ້ເອົາສະຫາຍວັນໄຊ, ແຕ່ໃນຂະນະດຽວກັນນັ້ນ ຄະນະບັນຊາປ້ອມຕຳລວດຊາຍແດນຂອງຝ່າຍເຮົາຕ່າງກໍແລ່ນໄປແລ່ນມາ ແລະອອກຄຳສັ່ງຢ່າງເດັດຂາດບໍ່ໃຫ້ບິງໄດ້ກອນ ຊຶ່ງເປັນຄຳສັ່ງອັນເດັດຂາດຂອງຂັ້ນເທິງ. ມີອ້າຍນ້ອງຫລາຍຄົນຮ້ອງຂຶ້ນເກືອບພ້ອມໆ ກັນວ່າ:

ມັນບິງຄົນເຮົາຈົນຕາຍບັງຊີໃຫ້ອົດເບິງລ້າງຊັ້ນຫວະ?

ນີ້ແມ່ນຄຳສັ່ງ! ຜູ້ບັນຊາທັງເວົ້າທັງບ່າງໄປຕັກ ເຕືອນປ້ອມຍາມແຕ່ລະບ່ອນຕາມຝັ່ງແມ່ນ້ຳຂອງ.

ແມ່ນ, ຂ້າພະເຈົ້າຮູ້ດີວ່າບ້ອນສະພາບເຄັ່ງຮ້ອນສະນັ້ນສະຫາຍຜູ້ບັນຊາ ບໍ່ອາດຈະມາອະທິບາຍເຫດຜົນໃຫ້ອ້າຍນ້ອງໂດຍລະອຽດໄດ້, ລະບຽບທະຫານໃນຍາມເສິກເຮັດແນວນັ້ນແມ່ນຖືກຕ້ອງ. ເຖິງບໍ່ອະທິບາຍຂ້າພະເຈົ້າກໍຮູ້ດີ

ແລ້ວວ່າຄຳສັ່ງຂອງຂັ້ນເທິງ ແມ່ນຖືກຕ້ອງບ້ອນວ່າສາທາລະນະລັດປະຊາທິປະໄຕປະຊາຊົນລາວເຮົາ ຍາມໃດກໍເປັນເຈົ້າການເພື່ອຮັກສາສາຍສຳພັນອັນດີຕໍ່ກັນລະຫວ່າງ 2 ປະເທດລາວ-ໄທ. ຍາມໃດກໍປຶດໝັ້ນຕາມຈິດໃຈຂອງປະກາດຖະແຫລງຮ່ວມລາວໄທສະບັບວັນທີ 3 ສິງຫາ 1976 ເພື່ອສ້າງຊາຍແດນລາວ-ໄທ ໃຫ້ກາຍເປັນຊາຍແດນສັນຕິພາບອັນແທ້ຈິງ. ແລະຂ້າພະເຈົ້າກໍຮູ້ດີວ່າທຸກການກະທຳເກາະຜິດອັນຊົ່ວຊ້າສາມານດັ່ງກ່າວ ມັນບໍ່ແມ່ນປະຊາຊົນໄທຢູ່ທາງຝາກຂອງເບື້ອງນັ້ນເປັນຜູ້ເຮັດ, ແຕ່ຫາກແມ່ນພວກປະຕິການຂຸນເສິກໄທ ທີ່ກະຫາຍສົງຄາມຕ່າງຫາກເປັນຕົວການກໍ່ຂຶ້ນ.

ພາຍຫລັງສະຫາຍວັນໄຊ ໄດ້ເສຍສະລະຊີວິດໄປແລ້ວ ເຈົ້າໜ້າທີ່ປະຕິການໄທກໍຍັງຄົງໃຊ້ເຮືອນ້ອຍໃຫຍ່ແລ່ນສືບສວານໄປມາຢູ່ຕາມໜ້ານ້ຳໃນບໍລິເວນດັ່ງກ່າວແລະຍັງສືບຕໍ່ຍິງມາໃສ່ຊາກສົບຂອງສະຫາຍວັນໄຊແລະອ້າຍນ້ອງເຮົາຢູ່ກາງຫາດອັນເປັນດິນແດນຂອງລາວແທ້ໆ ນັ້ນຊ້ຳແລ້ວຊ້ຳອີກ.

ຄຽງຄູ່ກັບນັ້ນ ພວກເຂົາ ຍັງໃຊ້ລະບົບໂທລະໂຄ່ງ ຮ້ອງອອກຄຳສັ່ງ ຢ່າງຈອງຫອງທີ່ສຸດ ໃຫ້ນັກຮົບເຮົາ ທີ່ຍັງມີຊີ

ວິດ ນອນລີ້ຢູ່ໃນຂຸມດິນຊາຍນັ້ນ ວາງອາວຸດ ຍອມຈຳນົນ ພ້ອມທັງໄດ້ຮ້ອງໂຮ່ ປ້ອນດ່າ ປະເທດສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຢ່າງຫຍາບຊ້າທີ່ສຸດ. ຈັ່ງແມ່ນພວກສັນດານ ຫຍາບແທ້ໆ, ນັກລົບລາວ ປະຕິບັດໜ້າທີ່ຢູ່ເທິງແຜ່ນດິນລາວແທ້ໆ ດ້ວຍເຫດໃດພວກປະຕິການໄທຈຶ່ງກ້າວິໄດເປັນນາຍອອກຄຳສັ່ງໃຫ້ລາວ ວາງອາວຸດຍອມຈຳນົນຢ່າງບັງອາດ ຄືແນວນີ້? ອັນນີ້ກັບບໍ່ແມ່ນການທ້າທາຍເກາະພິດແນບຄົນພານແລ້ວມັນຊິແມ່ນຫຍັງ?.

ຍ້ອນການທົນຕໍ່ການ ດູໝິ່ນຢຽດຫຍາມດັ່ງກ່າວນີ້ບໍ່ໄດ້ ຂ້າພະເຈົ້າຈຶ່ງຟ້າວໄປພົບ ສະຫາຍຫົວໜ້າຕຳລວດຊາຍແດນ ແລະ ຖາມເພິ່ນວ່າ: "ພວກເຮົາຈະບໍ່ມີວິທີການໃດໄປກູ້ເອົາ ບ້ານນ້ອງເຮົາບໍ?" ສະຫາຍ ຕອບຢ່າງເຂັ້ງຂືນວ່າ: "ການໄປກູ້ເອົາຫລືການໂຕ້ຕອບ ແມ່ນເປັນເລື່ອງງ່າຍທີ່ສຸດ, ແຕ່ພວກເຮົາລໍຖ້າຄຳສັ່ງສາກ່ອນ ເພາະຖ້າຫາກເອົາກຳລັງໄປດຽວນີ້ ມັນຈະເກີດມີການ ປະທະກັນດ້ວຍອາວຸດໂລດ ແລະ ສິ່ງສຳຄັນແມ່ນພວກເຮົາ ຕ້ອງປະຕິບັດຄຳສັ່ງຂອງຂັ້ນເທິງ ຄືພວກເຮົາຈະບໍ່ແກ້ໄຂ ດ້ວຍອາວຸດຫາກຈະແກ້ໄຂກັນດ້ວຍສັນຕິວິທີ. ເພື່ອບໍ່ຢາກໃຫ້ຂ້າພະເຈົ້າສົງໄສສະຫາຍຫົວໜ້າປ້ອມໄດ້ເວົ້າ ຢ່າງໜັກແໜ້ນວ່າ

– ສະຫາຍ ບໍ່ຕ້ອງນ້ອຍໃຈພວກເຮົາບໍ່ຍິງໂຕ້ຕອບນັ້ນ ບໍ່ໄດ້ໝາຍຄວາມວ່າ ພວກເຮົາອ່ອນແອ, ພວກເຮົາເປັນຝ່າຍທີ່ມີສັດຈະທຳແທ້, ພວກເຮົາແມ່ນຮັບຜິດຊອບຕໍ່ຄຳເວົ້າທຸກຄຳ ຂອງພວກເຮົາທີ່ໄດ້ໃຫ້ເປັນຄຳໝັ້ນສັນຍາໄປແລ້ວຢູ່ໃນປະກາດ ຖະແຫລງຮ່ວມ ລາວ–ໄທ, ຖ້າພວກເຂົາປາກລົບລ້າງຄຳໝັ້ນສັນຍານີ້ ພວກເຂົາກໍຈະຕ້ອງຮັບຜິດຊອບຕໍ່ຜົນຮ້າຍທຸກຢ່າງ ທີ່ພວກເຂົາເອງ ເປັນຜູ້ກໍ່ຂຶ້ນ ສະຫາຍຄວນຮູ້ດີວ່າກອງທັບປົດປ່ອຍປະຊາຊົນລາວ ແມ່ນເປັນກອງທັບ ທີ່ເຄີຍມີມູນເຊື້ອວີເອົາຊະນະ ຂ້າເສິກຜູ້ຮຸກຮານໂຕໃຫຍ່ກວ່າພວກນີ້ມາຫລາຍແລ້ວ, ເລື່ອງສ່ຳນີ້ຄັນພວກເຮົາແກ້ມືມັນກໍບໍ່ເປັນປາຫຍັງດອກ.

ສຽງປືນຂອງພວກເກາະຜີດ ຍັງຄົງສືບຕໍ່ຍິງສຸມມາໃສ່ຝັ່ງລາວເປັນຮູດໆ ຕາມສັນດານຂອງພວກຄົນພານຈົນກະທັ້ງຮອດເວລາບ່າຍ 3 ໂມງ ເຄິ່ງ ພວກທູດານຸທູດຕ່າງປະເທດປະຈຳລາວ ລົງໄປພິສູດຫລັກຖານໂຕຈິງຢູ່ກາງຫາດພ້ອມດ້ວຍຄົນລາວ ທີ່ລົງໄປກູ້ເອົາເພື່ອນຮ່ວມຊາດ ແລະປະຕິບັດໜ້າທີ່ຢູ່ບົນດິນແດນຂອງຕົນ, ພວກປະຕິການຂຸນເສິກໄທ ກໍຍັງໃຊ້ໂທລະໂຄ່ງກົງຄໍຮ້ອງບັນຊາ ຍັບເປັນການແຊກແຊງວຽກງານພາຍໃນຂອງລາວ ຢ່າງບັງອາດ ຈອງ

ຫອງທີ່ສຸດ, ຈົນຮອດອຸປະທູດ ໄທ ເອງທີ່ຢູ່ໃນຂະບວນທູຕາ
ນຸທູດ ໄປພິສູດເຫດການຕົວຈິງ ກໍບໍ່ໄດ້ຮັບຄວາມເຄົາລົບ
ຈາກພວກເຂົາຈັກເມັດ ພວກເຂົາໄດ້ເອີ້ນສັ່ງໃຫ້ " ເຊັດນະ
ວະລັດ " ບົກມືຂຶ້ນສະເໜີຕົວຕໍ່ພວກເຂົາ ຕັ້ງຫລາຍຄັ້ງ,
ຍິງພະບົດກ່າວນີ້ອີກພວກເຂົາ ຍັງຮ້ອງສັ່ງ ຢ່າງບັງອາດ
ໃຫ້ນັກລົບລາວທີ່ຍັງມີຊີວິດຢູ່ນັ້ນ ຕ້ອງວາງອາວຸດກ່ອນຈຶ່ງ
ອອກຈາກຂຸມຄອງໄດ້. ຕໍ່ເຫດການດັ່ງກ່າວ ບໍ່ຖ້າຂ້າພະ
ເຈົ້າອະທິບາຍບັນດາຜູ້ອ່ານກໍຕີລາຄາໄດ້ວ່າ ພວກເຈົ້າໜ້າ
ທີ່ປະຕິການໄທ ມັນບັງອາດຈອງຫອງ ເຖິງຂັ້ນໃດແລ້ວ .!
ດິນລາວ ປະຕິບັດໜ້າທີ່ ຢູ່ເທິງດິນແດນຂອງລາວ ມັນມີ
ຫຍັງແຕ່ທີ່ໄປຮ້ອນໄປເດືອງເຖິງໄສ້ພຸງຂອງພວກເຂົາ.

ຈາກເຫດການຕົວຈິງ ດັ່ງກ່າວ ໄດ້ພິສູດໃຫ້ເຫັນວ່າ,
ຄວາມເຄັ່ງຕຶງ ທີ່ເກີດຂຶ້ນຢູ່ດານຊາຍແດນ ລາວ–ໄທ ທີ່
ຍາວຢຽດເຖິງ 1.500 ກິໂລແມັດນັ້ນລ້ວນແຕ່ແມ່ນເກີດຂຶ້ນ
ຍ້ອນພວກໜາພານ ສັນດານຫຍາບທີ່ພວກປະຕິການໄທ
ໄດ້ຢາຍໄວ້ຢູ່ດານຊາຍແດນ, ແລະ ກໍແມ່ນພວກນັ້ນເອງທີ່
ເປັນຜູ້ກໍ່ຄວາມເສົ້າໝອງ ໃສ່ສຳພັນທະໄມຕີອັນດີງາມລະ
ຫວ່າງປະຊາຊົນ 2 ຊາດ ລາວ–ໄທ.

ຖ້າປາກເຮັດໃຫ້ຈິດໃຈ ຂອງ ປະກາດ ຖະແຫລງຮ່ວມ

ລາວ–ໄທ ສະບັບ ວັນທີ 3 ສິງຫາ 1976 ໄດ້ຮັບການປະຕິບັດໃຫ້ປາກົດຜົນເປັນຈິງ, ກ່ອນອື່ນໝົດ ພວກເຂົາ ຕ້ອງສະສາງ ພວກໝາພານ ສັນດານຫຍາບເຫລົ່ານັ້ນໃຫ້ສູນສ້ຽງໄປຈາກຊາຍແດນ ເພື່ອຫລີກເວັ້ນເຫດຮ້າຍອັນບໍ່ເພິ່ງປາຖະໜາ, ຖ້າບໍ່ດັ່ງນັ້ນ ເຫດຮ້າຍທັງໝົດທີ່ຈະເກີດຂຶ້ນໃນພາຍໜ້າ ເຈົ້າໜ້າທີ່ໄທ ຈະຕ້ອງເປັນຜູ້ຮັບຜິດຊອບແຕ່ຝ່າຍດຽວ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ເດັດດ່ຽວສຳເລັດໜ້າທີ່ໃຈກາງ

ນັບແຕ່ເລີ່ມອອກເດີນທາງ ຝົນກໍເລີ່ມ ໂຮຍເມັດລົງມາ ນິບໆ, ອັນໄດ້ເຮັດໃຫ້ສິ່ງເສື້ອເຄື່ອງຂອງ ອ້າຍນ້ອງທີ່ພວມ ເຄື່ອນທັບຢູ່ນັ້ນປຽກຊຸ່ມ, ຕົນຕົວຂອງເຂົາເຈົ້າ ໄດ້ປ່ຽນຈາກ ຄວາມອົບອຸ່ນ ມາໜາວເປັນເຖິງແນວນັ້ນກໍຕາມສະຫາຍ ວັນຄຳ ໄດ້ນຳພາອ້າຍນ້ອງຈຳນວນນຶ່ງພ້ອມກັບທະຫານ ເມືອງ ເມືອງຄູນ 3 ຄົນບຸປ່າຜ່າດົງໄປຫາຈຸດທີ່ໝາຍຂອງ ຕົນຢ່າງຟ້າວຟັ່ງ.

ພໍຂຶ້ນຮອດພູຫຍ້າຄາ ໜ່ວຍນຶ່ງ ເຂົາເຈົ້າໄດ້ຫລຽວ ເຫັນເສັ້ນທາງເລກທີ 13 ເປັນສາຍແປບເອີດເດີດຍາວຢຽດ ໄປຕາມເປີ້ນພູທາງທິດຕາເວັນຕົກ ຂອງພູຜາຫລັງໜູ. ເມື່ອບອກອ້າຍນ້ອງພັກຜ່ອນຊົ່ວຄາວແລ້ວ, ສະຫາຍວັນຄຳ ໄດ້ຍົກກ້ອງສ່ອງຕິດຕາມພູມີປະເທດອ້ອມແອ້ມນັ້ນ, ພິເສດ ແມ່ນໄດ້ເອົາໃຈໃສ່ຕິດຕາມເບິ່ງການເຄື່ອນໄຫວ ຂອງສັດຕູ ຕາມສາຍທາງ. ເວລານີ້ຮູບພາບຂອງລົດສັດຕູທີ່ແລ່ນມາ

ຈາກທີ່ດວງຈັນ ໄປຫາຫລວງພະບາງນັ້ນໄດ້ແລ່ນຜ່ານຫນ້າກ້ອງສ່ອງ ຂອງເຂົາເປັນລຳດັບ, ວັນຄຳງວາກຫນ້າມາຫາອ້າຍນ້ອງ ພ້ອມທັງເວົ້າວ່າ "ມື້ນີ້ລົດສັດຕູຂຶ້ນແລ້ວໄດ, ບາງທີມື້ອື່ນນີ້ ຣົມັນຈຶ່ງຈະລົງ, ດັ່ງນັ້ນພວກເຮົາຕ້ອງພະຍາຍາມ ເຂົ້າໄປໃຫ້ເຖິງເສັ້ນທາງກ່ອນຕາເວັນຂຶ້ນໃນມື້ອື່ນ" ພໍເວົ້າສຸດຄວາມພວກອ້າຍນ້ອງກໍຕອບເປັນສຽງດຽວວ່າ "ອື, ຕ້ອງໄປແບບນັ້ນລະບໍ່ຈຶ່ງຈະທັນກັບສະພາບການ. ວັນຄຳຄຶດຢູ່ຄາວຫນຶ່ງແລ້ວເວົ້າອີກວ່າ : ໄປ, ໄປດຽວນີ້ເທາະ?.

ຮອດຕອນ 3 ໂມງແລງ, ເຂົາເຈົ້າເຄື່ອນໄປນໍ່ຈະຮອດທາງລົດແລ້ວ, ຂະນະນັ້ນຢູ່ຕາມສາຍທາງ ປະກົດເຫັນພວກທະຫານມັກກີ້ຍ່າງເລາະໄປເລາະມາຢູ່, ບໍ່ດົນກໍເຫັນລົດ 5 ຄັນບັນທຸກທະຫານຂອງພວກມັນແລ່ນມາແຕ່ຊຽງເງິນ ເພື່ອເອົາກຳລັງໄປເພີ່ມໃຫ້ທະຫານຂອງພວກເຂົາທີ່ຖືກອ້າຍນ້ອງເຮົາລົງໂທດຢູ່ພູພາຫລັງໜູ ຫວ່າງສອງອາທິດກ່ອນ. ເວລານີ້ວັນຄຳໄດ້ຫັນຫນ້າມາບອກບົວເຄືອແລະອ້າຍນ້ອງວ່າ:

"ພວກສະຫາຍລໍຖ້າເຮົາຢູ່ນີ້ເນີ, ເຮົາກັບສະຫາຍເອື້ອງຈະໄປຕິດຕາມການເຄື່ອນໄຫວຂອງສັດຕູກ່ອນ.

ພໍສະຫາຍທັງສອງເຄື່ອນໄປຮອດແຄມທາງ ບໍ່ດົນສາຍລົມແຮງກໍໄດ້ອຸບັດຂຶ້ນຢ່າງກະທັນຫັນ, ໄດ້ອຸ້ມເອົາໂງ່ນເມກດຳເປັນເຫງົ້າງເລື່ອນລອຍຈາກທິດຕາເວັນອອກສ່ຽງໃຕ້ມາສູ່ສາຍພູຫລວງ ຢ່າງໄວວາ, ຟ້າ ໄດ້ແລບສຽງຮ້ອງ ຢ່າງເນື່ອງນັນ, ຊົ່ວພິບຕາດຽວ ທ້ອງຟ້າສີຄາມອັນເຕັມໄປດ້ວຍກ້ອນເມກຂາວ ທີ່ພວມລອຍອາບແດດຢູ່ນັ້ນ ກໍຖືກໂງ່ນເມກທີ່ກ່ຳດຳເລື່ອນລັບປົດບັງຢ່າງໄວວາ. ໜ້ອຍໜຶ່ງຝົນກໍຕົກຖອກເທລົງມາສົ່ງສຽງດັງຮື່ນໆ ຈົນຮ້ອງໃສ່ຫູກັນກໍເກືອບບໍ່ຮູ້ຄວາມພຸ້ນແລະ, ໃນເວລານັ້ນ ສະຫາຍວັນຄຳ ແລະ ສະຫາຍເອື້ອງໄດ້ກ່ອນເຄື່ອນເຂົ້າຄານແຄມທາງເພື່ອຊອກຫາບ່ອນສະກັດ ດ້ວຍຄວາມລະມັດລະວັງ, ເວລາດຽວກັນນັ້ນມີສຽງດັງຮື່ນໆ ຂຶ້ນຢູ່ເບື້ອງຫລັງ, ສະຫາຍວັນຄຳ ແລະສະຫາຍເອື້ອງພ້ອມກັນ ງວາກໜ້າໄປຫາບ່ອນທີ່ມີສຽງດັງກໍເຫັນລົດ ລາດຕະເວນ ຂອງສັດຕູຄັນໜຶ່ງ ແລ່ນມຸ່ງໜ້າມາຫາທີ່ເຊົາເຈົ້າພວມສະກັດນັ້ນ, ສະຫາຍທັງສອງບໍ່ລໍຊ້າອີກ, ເຂົາເຈົ້າຮີບກິ້ງເກືອກລົງກັບຮ່ອງທາງບ່ອນທີ່ມີຫຍ້າຄາປົກຢູ່ນັ້ນພ້ອມບາດ, ປ່ອຍໃຫ້ລົດຄັນນັ້ນແລ່ນກາຍໄປ.

ມື້ນັ້ນກໍຄືຫລາຍມື້ຜ່ານມາ, ສະຫາຍທັງ 6 ຄົນກໍບັງຄົງເອົາໃຈໃສ່ຕິດຕາມສະພາບການ ດ້ວຍຈິດໃຈຮັບຜິດຊອບຕໍ່

ຫນ້າທີ່ປ່າງສູງສົງ. ເວລານັ້ນເຖິງແມ່ນເຂົ້າກິນໃກ້ຈະໝົດ ແລ້ວທັງອົດນອນມາໄດ້ 2–3 ຄືນແລ້ວກໍຕາມ, ແຕ່ອ້າຍນ້ອງກໍບັງອົດທົນບໍ່ໜີຈາກບ່ອນສະກັດ; ເພາະເຂົາເຈົ້າຄິດເຫັນຄຳແນະນຳຂອງຄະນະກອງທີ່ເວົ້ານຳເຂົາເຈົ້າ ກ່ອນອອກປະຕິບັດໜ້າທີ່ ເທື່ອນີ້ວ່າ: "ເຖິງຈະພົບພໍ້ຂໍ້ຫຍຸ້ງຍາກປານໃດກໍຕາມ, ພວກສະຫາຍຕ້ອງອົດທົນຜ່ານຜ່າ, ຊອກວິທີດັບສູນສັດຕູໃຫ້ຈົນໄດ້" ຈາກນັ້ນບໍ່ຮອດ 5 ນາທີ ກໍເຫັນທະຫານແມ້ວ 2 ຄົນເປັນໝູ່ຍ່າງມາ, ພໍຮອດເຖິງບ່ອນສະກັດພວກມັນກໍພາກັນພັກເຊົາແຮງ. ແຕ່ບ້ອນຕາຝັ່ງທາງນັ້ນສູງເຖິງ 5–6 ແມດຈຶ່ງໄດ້ເຮັດໃຫ້ທະຫານແມ້ວຊຸມນີ້ບໍ່ສາມາດເຫັນອ້າຍນ້ອງຂອງພວກເຮົາໄດ້.

ພໍສອງຄົນນັ້ນ ກາຍໄປບ່ອນນັ່ງບັງບໍ່ທັນເປັນຊ້ຳພັດມີທະຫານແມ້ວອີກ 2 ຄົນພ້ອມແມ່ຍິງ 6 ຄົນຖືອາວຸດຄົນມືມາຈາກທິດພູຜາຫລັງຫນູ ໄປທາງກົວຂາມປ້ອມ ເວລານີ້ສະຫາຍຄຳກຶ້ງຕາເບິ່ງສັດຕູຢ່າງບໍ່ພັບຕາ, ແລ້ວຟ້າວງວາກໜ້າມາຫາ ວັນຄຳຊຶ່ງມີທ່າທີ ຂໍອະນຸຍາດເພື່ອຈະລົງມືສັງຫານສັດຕູ ແຕ່ວັນຄຳແກ່ວງຫົວຫ້າມໄວ້. ເມື່ອເຫັນຄືແນວນັ້ນໃບໜ້າຂອງສະຫາຍຄຳແດງຂຶ້ນຮືດໆ ຄ້າຍກັບວ່າລາວໄດ້ຂັງແປວໄຟແຫ່ງຄວາມຄຽດແຄ້ນ ໄວ້ໃນຕົວ

ຈົນເກືອບຈະແຕກແລ້ວ. ລາວຄິດເຖິງເພື່ອນຮ່ວມຮົບຂອງລາວທີ່ຖືກເສຍສະຫຼະ ໃນເວລາສູ້ຮົບຢູ່ພູຜາຫລັງໜູ, ສະຫາຍຄຳ ກະຕວງໃນໃຈຜູ້ດຽວວ່າ:

ເດັດຂາດຕ້ອງແມ່ນແນວຊູນນີ້ເພາະ:ເວລານີ້ຈິດໃຈຄຽດຊົມປາກແກ້ແຄ້ນແທນໝູ່ເພື່ອນນັ້ນ ໄດ້ເພີ່ມຂຶ້ນເປັນລຳດັບ ສະຫາຍກຳປືນຈໍ້ໄປຫາເປົ້າວິບນັ້ນຈົນເກືອບຈະຫຼົງລັ່ນໄກ, ແຕ່ບ້ອນຄວາມມີສະຕິຮັກສາຄວາມລັບເພື່ອສຳເລັດໜ້າທີ່ໃຈກາງ, ພ້ອມນີ້ສະຫາຍວັນຄຳພັດເວົ້ານຳສະຫາຍຄຳດາວ່າ» ສະຫາຍບັງຈື້ບໍ່, ຄວາມເວົ້າຂອງກະບະກອງສັ່ງວ່າ:" ພວກສະຫາຍໄປປະຕິບັດໜ້າທີ່ເທື່ອນີ້ ແມ່ນໄປລົບກວນແນວຫລັງຂອງສັດຕູ. ຈຸດໝັກແມ່ນເຄື່ອນໄຫວດັບສູນຂະບວນລົດບັນທຸກທະຫານແລະອາວຸດຂອງສັດຕູ" ແຕ່ເຖິງດຽວນີ້ ພວກເຮົາກໍຍັງບໍ່ທັນສຳເລັດໜ້າທີ່ໃຈກາງໄດ້ເທື່ອ ໃດແມ່ນບໍ່ຄຳດາ? ລະຫາຍວັນຄຳງວາກໜ້າມາເບິ່ງອ້າຍນ້ອງແຕ່ລະຄົນແລ້ວຫລຽວເບິ່ງໃນໜ້າຄຳດາ ດ້ວຍຄວາມເຫັນອົກເຫັນໃຈ.

ເວລານາທີໄດ້ປ່ຽນໄປໜ້າເລື້ອຍໆ ແຕ່ວານສາຍທາງເລກທີ 13 ລະຫວ່າງພູເລີບຫາກິວຂາມປ້ອມ ກໍຍັງບໍ່ມີຫຍັງປ່ຽນແປງ. ເວລານັ້ນ ອາດແມ່ນບ້ອນຈິດໃຈລໍຄອຍ

ປ່າງຮ້ອນຮົນຂອງອ້າຍນ້ອງ ໄດ້ເຮັດໃຫ້ເກີດຄວາມລະແວງສົງໄສວ່າ : ບ່ອນທີ່ເຂົາເຈົ້າ ພວມດັກສະກັດນັ້ນອາດຖືກເສຍລັບແລ້ວບໍ່ ສັດຕູຈຶ່ງບໍ່ມາ ? ໃນເວລາທີ່ສະຫາຍທັງ 6 ພວມປຶກສາຫາລືຊອກສາຍເຫດຢູ່ນັ້ນ, ບັງເອີນສຽງລົດດັງຮຶນໆ ມາປານຄືນຄາງຕາຍ, ທັນໃດນັ້ນກອງປະຊຸມນ້ອຍທີ່ພວມປຶກສາຫາລືກັນຢູ່ນັ້ນຖືກຍົກເລີກຢ່າງກະທັນຫັນ, ເຂົາເຈົ້າຮີບໂດດໄປປະຈຳທີ່ກຽມສູ້ຮົບຢ່າງໄວວາ.

ພາຍຫລັງທີ່ລົດໃນໂຕຄັນນັ້ນໄປຫວິດ, ສຽງລົດໂອໂຕກໍດັງມໍ່ເຂົ້າມາຊັກໃຊ້, ເວລານີ້ຫົວໃຈຂອງເຂົາເຈົ້າປະກົດວ່າ ຕໍາເຂົ້າຢູ່ຕຶກໆ ເພາະນາທີທີ່ເຂົາເຈົ້າລໍຄອຍມາຕັ້ງຫລາຍວັນນັ້ນ ຈະມາເຖິງໃນບໍ່ຊ້ານີ້, ຈາກນັ້ນບໍ່ດົນ, ລົດຄັນໜຶ່ງກໍໄປໂລຫົວມາ ສະຫາຍວັນຄໍາອອກຄໍາສັ່ງວ່າ : " ຍິງ " ບັດເດືອ ພ້າວເກາະໄກປືນຕ້ານລົດຖັງພົບກະສຸນອອກຈາກລໍາກ້ອງໄວປານຟ້າແມບ.

ພ້ອມໆ ກັບສຽງປືນສັນຍານນັດທໍາອິດ, ປືນກົນມືຂອງບັນດາສະຫາຍກໍຍິງສຸມໃສ່ລົດຄັນນັ້ນປານຫ່າຝົນ ເຮັດໃຫ້ລົດຄັນນັ້ນຕ້ອງເອົາຫົວຊົນກາຝັ່ງ, ທະຫານທີ່ຢູ່ເທິງລົດນັ້ນບໍ່ຈັກຜູ້ເຈັບບໍ່ຈັກຜູ້ຕາຍ ພົ້ງອອກຈາກລົດອີກ ກະທືກບາງຈໍານວນ ກໍລົ້ມໄຂ່ວຂີ້ນກັນຢູ່ເທິງລົດ ຢ່າງບໍ່ເປັນລະ

ບຽບ, ຈາກນັ້ນລົດຄັນທີສອງຈັກຟາງການແນວໃດບຸ ສຽງ
ປືນບັງດັງປູ່ປານນັ້ນມັນກໍບັງແລ່ນມາ, ບົວເຄືອບໍ່ລໍຖ້າກໍາ
ສັ່ງອີກ ສະຫາຍລຸກຂຶ້ນຕ້ານລົດຕັງແຕກໃສ່ລົດຄັນນັ້ນທັນ
ທີ, ພໍລູກປືນແຕກຂຶ້ນບໍ່ຈັກແຄ່ງບໍ່ຈັກຂາ ຂອງທະຫານ
ສັດຕູຟັ້ງຂຶ້ນ ແລ້ວລົດຄັນນັ້ນກໍກາຍເປັນກອງໄຟເຜົາຫົວ
ພວກຂີ້ໂຫດສາມານນັ້ນໃຫ້ສິ້ນ ຈາກໂລກນີ້ໄປຢ່າງສົມນ້ຳ
ໜ້າ, ລົດຄັນທີສາມກໍບັງວົ້ດ້ານແລ່ນເຂົ້າມາປູ່, ສະຫາຍ
ບົວເຄືອກໍຟ້າວເອົາປືນກ່າຍບາປັ້ງແບຄັກໆ ເພື່ອກຽມບໍາ
ສົ່ງພວກນີ້ເມືອເມືອງຜີອີກ, ຈາກນັ້ນບໍ່ຫລາຍນາທີລົດ 5
ຄັນໄດ້ຖືກເຜົາເປັນເຖົ່າຖ່ານຢ່າງກະທັນຫັນ, ສ່ວນຄັນທີ 6
ນັ້ນອາດແມ່ນມັນເຄີຍໄດ້ຊີມລົດຊາດ ແຫ່ງການຫລອນຕີ
ຂອງພວກເຮົາຫລາຍເທື່ອແລ້ວ, ມັນຈຶ່ງແລ່ນຫ່າງໄກໝູ່
ຕັ້ງຫລາຍຮ້ອຍແມັດ, ເມື່ອມັນເຫັນທ່າທີບໍ່ດີກໍຟ້າວແລ່ນ
ກັບຄືນຢ່າງເອົາຕົວລອດ.

ບັ້ນສະກັດຂະບວນລົດຂອງສັດຕູກໍຄືບັ້ນປະຕິບັດໜ້າທີ
ໃຈກາງຂອງເຂົາເຈົ້າໃນຊຸດທໍາອິດໄດ້ສໍາເລັດຜົນ ຢ່າງງົດ
ງາມດ້ວຍການດັບສູນທະຫານກັບທີ 67 ຄົນ, ທໍາລາຍ
ລົດ 5 ຄັນ, ເຂົາເຈົ້າກັບຄືນບ່ອນພັກຊົ່ວຄາວດ້ວຍ ຈິດໃຈ
ມ່ວນຊື່ນ ແລະດ້ວຍໃບໜ້າທີ່ທະນົງອົງອາດຂອງຜູ້ມີໄຊ.

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ເຮັດສຳເລັດທຸກວຽກງານຂອງຊາດມອບໝາຍໃຫ້

ພາຍຫລັງທີ່ກຳລັງຫລວງ ຂອງພວກເຮົາໄດ້ປົດປ່ອຍເອົາປະຊາຊົນຢູ່ບໍລິເວນບວນຫລວງ, ພູກຸ່ມຂອກຈາກແອກຄອບງຳອັນມືດມົນຂອງຈັກກະພັດອາເມລິກາ ແລະ ລູກມືແລ້ວ, ເພື່ອຮັບປະກັນຄວາມປອດໄພ ແລະຄວາມສະດວກໃນການເບິ່ງແຍງຊ່ວຍເຫລືອຊີວິດການເປັນຢູ່ ຂອງປະຊາຊົນນັ້ນກອງບັນຊາການເຂດຊຽງຂວາງ ຈຶ່ງໄດ້ຕົກລົງມອບໝາຍໃຫ້ກອງຮ້ອຍ ຊ. ເຫລົ່າວິຊາສະເພາະທີ່ເຄື່ອນໄຫວປະຕິບັດໜ້າທີ່ໃນຂອບເຂດນັ້ນເປັນຜູ້ຮັບຜິດຊອບເບິ່ງແຍງປະຊາຊົນໂດຍກົງ. ຄັນເວົ້າເຖິງວຽກງານປົກປັກຮັກສາປະຊາຊົນແລ້ວ, ມັນກໍບໍ່ແມ່ນເລື່ອງງ່າຍດາຍ, ປະຊາຊົນຫາກໍໄດ້ຮັບການປົດປ່ອຍໃໝ່, ແນວຄິດຈິດໃຈກໍຍັງບໍ່ທັນອຸ່ນອ່ຽນຫຸ່ນທ່ຽງແລະບໍ່ເຊື່ອໝັ້ນຢ່າງເຕັມອົກເຕັມໃຈເທື່ອ, ນັ້ນກໍເນື່ອງມາຈາກຄວາມເຂົ້າໃຈຜິດຂອງເຂົາເຈົ້າທີ່ໄດ້ຮັບຜົນ

ສະຫ້ອນຈາກສັດຕູ, ພວກມັນແຫກສົບແຫກປາກໂຄສະນາ, ເຫົ່າຫອນໃສ່ຮ້າຍປ້າຍສີແນວລາວຮັກຊາດຮ້ອຍແປດພັນປະການອ້າຍນ້ອງໃນກອງ ຊ. ລ້ວນແຕ່ແມ່ນພະນັກງານວິຊາສະເພາະ, ມີຫລາຍຄົນຍັງບໍ່ທັນຊິນເຄີຍກັບໜ້າທີ່ດັ່ງກ່າວນີ້, ເຖິງແນວນັ້ນກໍຕາມເຂົາເຈົ້າກໍໄດ້ຊີ້ແຈງອະທິບາຍແນວທາງອັນເປັນທຳ ຂອງສູນກາງແນວລາວຮັກຊາດ, ເພີບແປກົນອຸບາຍອັນໂຫດຫ້ຽມສ້ຽມແຫລມຂອງສັດຕູແລະໄດ້ກົ້ງເກືອກລີ້ເລືອໄກ້ຊິດຕິດແທດ, ຊ່ວຍເຫລືອປະຊາຊົນໃນທຸກກໍລະນີ, ຈາກນັ້ນປະຊາຊົນຈຶ່ງຄ່ອຍເຂົ້າໃຈແລະເຊື່ອໝັ້ນກອງທັບພວກເຮົາ. ເຂົາໄດ້ເວົ້າວ່າ: " ກອງທັບປົດປ່ອຍປະຊາຊົນນັ້ນຈຶ່ງແມ່ນກອງທັບຂອງປະຊາຊົນຜູ້ທີ່ອອກແຮງງານທີ່ແທ້ຈິງ ແລະ ເປັນຜູ້ຕໍ່ສູ້ເພື່ອສິດຜົນປະໂຫຍດຂອງປະຊາຊົນແທ້"

ແຕ່ນ້ອນສັນດານທີ່ດື້ດ້ານຈອງຫອງ, ເຈັບບໍ່ຫລາບ, ຕາບບໍ່ຈື່ ໃນວັນທີ 19/2/1973, ສັດຕູໄດ້ເປີດການບຸກລຸກບຽດບຶດເຂົ້າບໍລິເວນພູວຽງ ປາງປ່ວງບົ້າ, ເຈດຈຳນົງອັນຊົ່ວຊ້າປ່າເຖື່ອນຂອງພວກມັນດັ່ງກ່າວ ກໍແມ່ນເພື່ອຮັບໃຊ້ໃຫ້ແກ່ແຜນການກວາດຕ້ອນເອົາປະຊາຊົນ, ສ້າງທ່າສະຫລັບສັບຊ້ອນໃນເຂດປົດປ່ອຍຂອງພວກເຮົາ. ພໍຮູ້ຂ່າວນັ້ນ

ເຂົາເຈົ້າຕ່າງກໍສະແດງຄວາມຮ້ອນອົກຮ້ອນໃຈ. ຢາກໄປຕີສັດຕູ ປົກປັກຮັກສາປະຊາຊົນແລະເຂດປົດປ່ອຍບໍລິເວນ ພູວຽງໄວ້ຢ່າງປອດໄພ ທັງນີ້ກໍເພື່ອຄວາມສະຫງົບອຸ່ນອ່ຽນຂອງພໍ່ແມ່ປະຊາຊົນ ທີ່ເຂົາເຈົ້າໄດ້ມີອຸດົມຄະຕິອັນສູງສົ່ງມາແລ້ວໃນການຮັບໃຊ້ຊາດ ຮັບໃຊ້ປະຊາຊົນຢ່າງບໍ່ມີຂອບເຂດ. ຈາກສິງເຫລົ່ານັ້ນເອງເຂົາເຈົ້າຈຶງຄອງແລ້ວຄອງອີກທີໂອກາດດີຫາຍາກນັ້ນ ຈະມາເຖິງເຂົາເຈົ້າ. ບ້ອນໂຊກແນວໃດບຸຄວາມມຸ່ງຫວັງ ແລະ ການຄອງຄອຍອັນຮ້ອນອົກຮ້ອນໃຈເຂົ້າເຈົ້ານັ້ນ ຈຶງມີສິງມາດົນບັນດານໃຫ້ເຂົາເຈົ້າໄດ້ດັ່ງປະສົງ.

ພາຍຫລັງທີ່ໄດ້ຮັບຄຳສັ່ງ ຈາກກອງບັນຊາການເຂດ, ເຂົາເຈົ້າໄດ້ສົມທົບກັບທະຫານທ້ອງຖິ່ນໄລ່ຕິດຕາມດັບສູນສັດຕູທີ່ເສຍຂັວນປົນຕາຍມາຈາກເມືອງສູ້ຍຊຶ່ງມຸ່ງໜ້າມາທາງທິດເຂົາເຈົ້າປູ່ນັ້ນຢ່າງທັນການ. ຂະນະທີ່ຄວາມດີອົກດີໃຈຂອງເຂົາເຈົ້າ ໄດ້ລົ້ນນອງປານນ້ຳລົ້ນຝັ່ງໃນກາງເດືອນສິບ, ສະຫາຍ ບ. ໄດ້ນຳພາອ້າຍນ້ອງໃນໜ່ວຍຮົບເງົາເຂດຊຽງຂວາງ 5–6 ຄົນ ໄປສົມທົບກັບ ທະຫານທ້ອງຖິ່ນແລະກອງຫລອນເດີນທາງໄປຫາຈຸດທີ່ໝາຍດ້ວຍທ່າທີອັນ ສະງ່າຜ່າເຜີຍຂອງບູ້ມີໄຊ.

ໄລຍະອາທິດກ່ວາ ທີ່ເຄື່ອນໄຫວ ປະຕິບັດໜ້າທີ່ນັ້ນ, ເຂົາເຈົ້າ ບໍ່ໄດ້ຂາດສະຕິ ໃນການກວດກາ ສາລະເວ, ເວນຍາມ, ໂດຍສະເພາະແມ່ນບໍລິເວນ ພູເບັ້ຍ, ເພາະພູເບັ້ຍເປັນຈຸດຍຸດທະສາດສຳຄັນທາງການທະຫານ ແລະ ນີ້ລະດັບສູງເກືອບເທົ່າກັນກັບພູວຽງ ຊຶ່ງຕັ້ງຢູ່ເຊິ່ງໜ້າກັນໃນໄລຍະ ນັ້ນບໍ່ເຫັນຫຍັງຜິດປົກກະຕິ,ອ້າຍນ້ອງບາງຄົນກໍໄດ້ສະແດງທ່າທີ ໝົດຫວັງ ທີ່ເສຍໂອກາດປະກອບສ່ວນດັບສູນສັດຕູໃນເທື່ອນີ້ ບາງຄົນກໍປາຖະໜາວ່າ: ສາທຸແມ ຖ້າບໍ່ໄດ້ຕີສັດຕູແທ້ ກໍຂໍໃຫ້ມີບົນໂຈນອາເມລິກາ ສັກຫົວມາທົດນີ້ຈັກບາດໜຶ່ງເບິ່ງດູ, ກູຊິເອົາ ລູກທອງ ເຊີນມັນໄປເມືອງຜີປ່າງທັນການໂລດ.

ເວລາໄດ້ວຽນມາເປັນ ປີ ໃໝ່ ເລື້ອຍໆ, ແຕ່ການຄອງຄອຍນັ້ນກໍຍັງບໍ່ປະກົດເປັນຈິງເທື່ອ, ເຖິງແນວນັ້ນກໍຕາມຍ້ອນຈິດໃຈຮັກຊາດ ຮັກປະຊາຊົນຢ່າງບໍ່ມີຂອບເຂດ, ບໍລິສຸດພຸດຜ່ອງ, ຂະຫຍັນທ້າວຫານແລະທົນທານໝຽວແໜ້ນທັງໝົດນັ້ນມັນໄດ້ສ້າງແນວຄິດຫລັກໝັ້ນ ຄຸນສົມບັດສົນທຳປະຕິວັດຂອງເຂົາເຈົ້າ ໃຫ້ແຂງແກ່ນເໝືອນສີລາເພັດຍ້ອນການຄອງຄອຍຫລາຍມື້ຕໍ່ຫລາຍວັນ ຄວາມມຸ່ງຫວັງເຫລົ່ານັ້ນກໍໄດ້ຫຍັບເຂົ້າໃກ້ເຂົາເຈົ້າຊັກໄຊ້ ຈົນຮອດເວລາ

3 ໂມງແລງຂອງມື້ວັນທີ 2/3 ໄດ້ມີປະກົດການຜິດປົກກະຕິຄືຢູ່ເທິງພູ ອອນທີ່ຕັ້ງຢູ່ທິດກາເວັນຕົກສ່ຽງໃຕ້ຂອງພູເບັ້ງ ມີຄວັນໄຟເປັນເລົາກ່ຳດຳ ພົ່ນຂຶ້ນສູ່ເວຫາ, ເມື່ອເຫັນເປັນຄືແນວນັ້ນ ສະຫາຍ ມ. ຊຶ່ງເປັນຜູ້ນ້ອຍກວ່າໝູ່ປະກົດວ່າຮ້ອນອົກຮ້ອນໃຈ ເອົາແທ້ໆ, ລາວເອົາມືຊີ້ໄປທິດທີ່ມີຄວັນພ້ອມທັງຫລຽວມາຫາໝູ່ຄູ່ 2–3 ຄົນທີ່ພວມປີນຈຸ້ມກັນຢູ່ນັ້ນແລ້ວວ່າ : ບ່ອນນັ້ນອາດມີສັດຕູແທ້ໃດ, ພວກເຮົາໄປດືນັ້ນເທາະ, ພໍແຕ່ສະຫາຍ ມ. ເວົ້າສຸດ ກໍ່ປະກົດມີສຽງດັງວື້ນໆມາແຕ່ໄກໆ, ສະຫາຍ ວ ເວົ້າຂຶ້ນວ່າ : ຟັງແມ່ນແມ່ນສຽງອີສັງ? ຄືສຽງ ຄົນຄາງ ໜຶ່ງນາທີຕໍ່ມາ ຈຶ່ງຈຳແນກໄດ້ແຈ້ງວ່າ ສຽງວັງ ທີ່ສົ່ງມາເມື່ອກີ້ນີ້ ແມ່ນ ສຽງບິນຂອງສັດຕູແທ້. ເວລານັ້ນອ້າຍ ບ ຫົວໜ້າໜ່ວຍ ແລະ ອ້າຍ ປ ຫົວໜ້າກອງຫລອນຜູ້ຊຳນິຊຳນານກໍໄດ້ໃຫ້ກຳສັງເກດວ່າ: ບິນລຳນີ້ອາດຈະມາຖິ້ມເຄື່ອງໃຫ້ສັດຕູຢູ່ພູອອນ. ຄວາມຈິງກໍເປັນແນວນັ້ນແທ້ ບໍ່ພໍເທົ່າໃດນາທີ ບິນລຳນັ້ນກໍປ່ຽງຈ້ອງສີຂາວໆລົງບ່ອນທີ່ມີຄວັນໄຟນັ້ນ 2–3 ຈ້ອງ, ເມື່ອມີປະກົດການຜິດປົກກະຕິແນວນີ້, ຕອນ 4 ໂມງ ແລງຂອງວັນ ນັ້ນເອງເຂົາເຈົ້າໄດ້ ຂຶ້ນໄປກວດກາພູເປົ້າ ແລະ ບໍລິເວນອ້ອມແອ້ມເພື່ອກຳສະພາບການໃນຂອບເຂດນີ້ໃຫ້ລະອຽດດີ.

ທາງຂຶ້ນສູ່ພູເປົ້ງ ຈັ່ງແມ່ນສູງແມ່ນຊັນ, ບາງບ່ອນກໍ ເປັນຄອງເລິກເອົາະເທ້ເອົາວ່າ, ບາງບ່ອນກໍເປັນຕາລີງຊັນ ເຖິງ ໔໐ ອົງສາ. ອ້າຍນ້ອງເຄີຍເອີ້ນຊື່ນາທີ່ສູງຊັນນັ້ນວ່າ ທາງຂຶ້ນເມືອງແຖນ ການເຄື່ອນໄຫວະຮັວຽກງານສຸດທີ່ລຳ ບາກກັນດານ, ແຕ່ເຂົາເຈົ້າກໍບໍ່ໄດ້ຫວັ່ນໄຫວະເສຍກຳລັງໃຈ ເຂົາເຈົ້າ ໄດ້ເອົາໃຈໃສ່ປີນພູອັນສູງຊັນວ່ອງໄວ. ໄດ້ເລີ່ມແຕ່ ໔ ໂມງ ແລງເຖິງ ໑໑ ໂມງກາງຄືນ, ເຂົາເຈົ້າໄດ້ຂຶ້ນຮອດ ຍອດສູງພູເປົ້ງ, ພໍຮຸ່ງຊິວລິວອ້າຍນ້ອງ ກໍໄດ້ກວດກາສະ ພາບເທິງພູເປົ້ງຢ່າງຮຽບຮ້ອຍ.

ຕໍ່ໜ້າສະພາບການເຊັ່ນນີ້, ໝູ່ເຂົາເຈົ້າພັດມີພຽງ ແຕ່ ໑໒ ຄົນ. ຈຳນວນຄົນສ່ວນຫຼາຍແມ່ນອ້າຍນ້ອງໃນວິຊາ ສະເພາະຮູບເງົາ. ອີກບາງຄົນກໍ່ຍັງບໍ່ໄດ້ຜ່ານສະໜາມຈັກ ເທື່ອ. ເວລານັ້ນສະຫາຍ ລ. ຜູ້ໜຸ່ມນ້ອຍຊຶ່ງແມ່ນຊົນຊາດ ລາວສູງ, ພະນັກງານວິຊາສະເພາະຮູບເງົາໄດ້ກັດເຂ້ວງ້ຳ ຄາງສັ້ກແສງກາເບິ່ງ ຮູບເຖວເຄື່ອນທັບ ຂອງສັດຕູດ້ວຍ ແສງກາທີ່ຖຽດຍົມ, ຕ້ານກັບວ່າລາວ ປາກສິ່ງແສງກາອັນ ແຫຼມຄົມຂອງລາວນັ້ນ ໄປເຜົາຜານພວກທີ່ປຸ້ນຊາດຢ່າງ ປະຈຸບັນທັນດ່ວນ. ແຕ່ຈະເຮັດແນວໃດສັດຕູມີກຳລັງລົບດີ ຫຼາຍສິບເທົ່າ. ໃນສະພາບທີ່ກຳລັງສັດຕູມີຢ່າງຫລວງ

ຫລາຍກໍແນວນັ້ນ ເຮັດແນວໃດຈຶ່ງຈະຮັບປະກັນໄຊຊະ ນະ ດັບສູນສັດຕູໃຫ້ໄດ້ຫລາຍ. ສະພາບທີ່ຫົວລ້ຽວຫົວຕໍ່ແນວນີ້ເຂົາເຈົ້າເຖິງວ່າບໍ່ເຄີຍສູ້ຮົບປະຈັນບານກັບສັດຕູຈັກເທື່ອກໍຕາມ, ແຕ່ຍ້ອນຄວາມມານະພະຍາຍາມຄວາມຄຽດແຄ້ນສັດຕູຢ່າງເລິກເຊິ່ງນັ້ນ ໄດ້ເຮັດໃຫ້ເຂົາເຈົ້າມີຄວາມຕັດສິນໃຈສູ້ຍ່ານຜ່າທຸກອຸປະສັກຫຍຸ້ງຍາກ ເດັດດ່ຽວລົງໂທດສັດຕູທີ່ດື້ດ້ານນີ້ໃຫ້ສົມອົກສົມໃຈ, ເມື່ອຄິດແນວນັ້ນແລ້ວເຂົາເຈົ້າໄດ້ແບ່ງກັນອອກໄປລັດໜ້າສັດຕູ, ໝູ່ທີ 2 ຢູ່ປະຈຳທີ່ກຽມສູ້ຮົບສົມທົບກັບໝູ່ໜຶ່ງຕາມທີ່ໄດ້ນັດໝາຍ.

ພໍແຕ່ສຽງປືນນັດໝາຍໄດ້ດັງຂຶ້ນ, ສະຫາຍ ລ ແນວນອງໝູ່ 2 ບໍ່ໄດ້ລໍຊ້າ ສະຫາຍບໍ່ຫວັ່ນໄຫວ ຕໍ່ອຸປະສັກໃດໆ ສະຫາຍໄດ້ຕະລຸມບອນກ່ອນໝູ່ ແລ່ນເລັ່ງຊີ້ໄປຫາທາງທີ່ສັດຕູພວມເຄື່ອນທັບຢູ່ນັ້ນ. ພໍໄປໃລຂຶ້ນຮອດທາງກໍພໍດີຂະໂມະກັບສັດຕູ 2 ບັກພວມລາກກະດູກຂຶ້ນພູມາເຊິ່ງມີໄລຍະຫ່າງຈາກໝູ່ນັ້ນແດ່. ເມື່ອພໍ້ກໍລະນີບັງເອີນຄືແນວນັ້ນບັກທະຫານເລວຮັບຈ້າງໄທ ທີ່ພວມອົກສັ່ນຂວັນຫາຍ ຈາກການຊີມລົດຊາດຂອງການປະລາໄຊມາແລ້ວນັ້ນໄດ້ຮ້ອງໂອບວາຍຂຶ້ນຈົນໜ້າຈືດຕາຈາງ. ພ້ອມໆ ກັບສຽງຮ້ອງຄາງຕາຍ ຂອງພວກສັດຕູສະຫາຍ ລ ໄດ້ກຳໄກ

ປືນພົບກະສູນແຫ່ງຄວາມກຽດແຄ້ນ ຂອງພົນໄປສັງຫານ
ສັດຕູປ່າງສິ້ນແຄ້ນ, ສັດຕູບັກໜຶ່ງ ໄດ້ລົ້ມຟຸບລົງກັບທີ່
ພ້ອມໆ ກັບສຽງປືນລ້າງແຄ້ນນັກທຳຍົດຂອງສະຫາຍ ລ
ປືນຫລາຍກະບອກທີ່ຢູ່ບ່ອນກຳບັງຕ່າງກໍໄດ້ພົ່ນກະສູນອັນ
ແມ່ນຢຳໄປໃສ່ກະບານຫົວຂອງສັດຕູ ຈົນພວກມັນບໍ່ ທານ
ເງີຍຫົວເງີຍຄໍຂຶ້ນໄດ້. ເວລານັ້ນມີສັດຕູບັກໜຶ່ງຈັກມັນເນົາ
ຕາຍແນວໃດ ບົກປືນ ແອັມເມີ-19 ຂຶ້ນປະທັບບ່າໝາຍ
ຈະຕ້ານຄືນແດ່ລູກກອງຂອງສະຫາຍ ລ. ພັດໄດ້ຈັດການ
ມັນກ່ອນ ແລະ ໄດ້ສົ່ງມັນໄປເມືອງຜີປ່າງທັນການ.

ເຫດການບັງເອີນທີ່ເກີດຂຶ້ນ ປ່າງປະຈຸບັນທັນດ່ວນຄື
ແນວນັ້ນໄດ້ເຮັດໃຫ້ຈຳນວນສັດຕູ ທີ່ໄປທາງໜ້ານັ້ນກະວົນ
ກະວາຍ ແລະ ບໍ່ຮູ້ຈັກວ່າແມ່ນສຽງປືນຂອງຝ່າຍໃດຫລືວ່າ
ຊາດາກຳຂອງພວກເຂົາ ຈະໄດ້ພົບກັບໄພພິບັດອັນໜ້າ
ຢ້ານກົວນັ້ນອີກ ? ບ້ອນກຳນຳສະໜອງເຖິງວ່າພວກມັນໄດ້
ແຕກທັບມາດັ້ງຫລາຍມື້ຫລາຍວັນແລ້ວກໍຕາມ, ແຕ່ມັນ
ບໍ່ສາມາດຈະຮູ້ໄດ້ວ່າ ພວກມັນຈະມີຊີວິດປູ່ຄ້ຳຟ້າໄປຮອດ
ມື້ໃດ.

ສຽງປືນບັງຄົງດັງຢູ່ບໍ່ຂາດໄລຍະ, ສຽງປືນຕ້ານທານ
ແບບຊໍ້າຊາຕາຍຂອງສັດຕູກໍບັງດັງອີກກະທົກປູ່.

ເວລານັ້ນມີທະຫານໄທບັກໜຶ່ງ ທຳທ່າ ຂຶງ ຂັງ ຮ້ອງ
ນາບຂູ່ເຂົາເຈົ້າແບບແຂງນອກໂຄ່ງໃນຕາມພາສາຂອງຄົນ
ຂີ້ປ້ານວ່າ "ຖ້າບໍ່ຢາກຕາຍຈົ່ງອອກມາບອມ" ແຕ່ຄຳ
ເວົ້າທີ່ເປັນຕາຂີ້ດຽດນັ້ນ ມັນບໍ່ໄດ້ເຮັດໃຫ້ຈິດໃຈຮັກຊາດອັນ
ດູດດື່ມຂອງເຂົາເຈົ້າຄອນແຄນໄດ້ເດັດຂາດ ນັ້ນບໍ່ສະເພາະ
ແຕ່ຂີ້ໜ່າຍຄຳເວົ້ານັ້ນແຕ່ມັນພັດໄດ້ເຮັດໃຫ້ຈິດໃຈຂອງເຂົາ
ເຈົ້າອີງອາດກ້າກັ່ນ ແລະ ເດັດດ່ຽວໜຽວແໜ້ນ ກ່ວາ ເກົ່າ
ກຳໄກປືນພົ່ນກະສຸນອອກສັ່ງຫານສັດຕູຢ່າງສິມແຄ້ນ ກ່ວາ
ເກົ່າ. ພວກສັດຕູທີ່ເຫລືອຕາຍໄດ້ພາກັນແຕກສະລຸຍຸພ່າຍ
ຢ່າງເສບຂ້ວນ.

ຍ້ອນຄວາມບໍ່ເປັນລະບຽບຂອງທະຫານແຕກທັບ ນັ້ນ
ໄດ້ເຮັດໃຫ້ຮັບແຖວເຄື່ອນທັບຂອງມັນ ຂາດສະບັ້ນ ໄປເປັນ
ຍ່ານໆ, ດັ່ງນັ້ນ, ຈັ່ງແມ່ນເວນຕາຍເອົາເຫ້ງ ເຫດການ
ໃຫຍ່ໂຕປານນັ້ນເກີດຂຶ້ນພວກມັນທີ່ຢ່າງລາກຫລັງພໍ້ ຍັງ
ບໍ່ທັນຮູ້ຈັກກົບຈັກແດນທາບັງເກືອ, ມັນຈຶ່ງໄດ້ຮ້ອງຖາມໝູ່
ຂອງມັນວ່າ: "ອະ ໄຣ, ອະ ໄຣ" ແຕ່ໝູ່ມັນ ກໍບໍ່ຕອບ,
ເພາະຜູ້ໃດ ກໍຟ້າວຫອບກະດູກພ່າຍ ຈາກແດນກັນດານ:
ເມື່ອມັນບໍ່ໄດ້ຍິນສຽງຂານຕອບ ຂອງ ໝູ່ມັນ, ມັນຈຶ່ງຮ້ອງ
ຖາມຕໍ່ອີກວ່າ: "ທະຫານລາວ ຫລື ທະຫານໄທ" ສະ

ທາຍ ວ ທີ່ໝູບຢູ່ມ່ຽງແຄມທາງນັ້ນໄດ້ຕອບວ່າ: " ແມ່ນຄົນ ເຮົາເອງຢ່າຊູ້ຍິງ " ເວລານັ້ນອາດເປັນຍ້ອນຄວາມຢ້ານກົວ ສັ່ນສາຍຂອງມັນເອງບໍ່ ຈຶ່ງບໍ່ສາມາດ ຈຳແນກໄດ້ ຄວາມ ແຕກຕ່າງຂອງພາສາລາວ ແລະ ພາສາໄທ ມັນຈຶ່ງຕອບ ວ່າ : ຜົມໄມ້ຍິງ, ຜົມໄມ້ຍິງ " ພ້ອມນັ້ນ ກໍໄດ້ເຄື່ອນ ເຂົ້າ ບ່ອນເກີດເຫດນັ້ນຊຸກໄຊ້, ເມື່ອມັນເຫັນ ຊາກສົບ ມັນ ຈຶ່ງ ເຮັດທ່າທີ່ປຸດງປ່ອນງບໍ່ຈັກຈະຄືນໜ້າບໍ່ຈັກຈະຖອຍຫລັງ ສຽງປືນ ໄດ້ດັງຂຶ້ນອີກລວາດໜຶ່ງ, ທະຫານໄທບັກນັ້ນ ຈຳ ຕ້ອງອາບເລືອດເລືອໂຄກລົງໄປ ທາໝູ່ມັນຢູ່ໂກນຫ້ວຍນັ້ນ ປ່າງເສຍຂວັນ, ເມື່ອໝູ່ມັນເຫັນພວກນີ້ເຫລືອວາຍຄືນມາ ມັນບໍ່ຮູ້ຈັກເຮັດວິທີໃດຈຶ່ງຈະລອດພົ້ນຈາກບັນຊີຂອງຈ່າຍິມ ພີບານໄດ້, ພວກມັນຈຶ່ງໄດ້ຮ້ອງນາບຂູ່ປ່າງຫລັບຫູຫລັບ ຕາວ່າ : ຈັບເອົາ, ຈັບເອົາ " ຢູ່ໃນໂກນຫ້ວຍເລິກພຸ້ນ, ຂະ ນະ ທີ່ມັນສົງສຽງຮ້ອງ ອຶກກະທຶກຢູ່ນັ້ນ ມີສຽງລະເບີດມື ຂອງພວກອ້າຍນ້ອງເຮົາໄດ້ແຕກຂຶ້ນ ຢູ່ບໍ່ບ່ອນລີ້ຊ່ອນພວກ ມັນ, ຫວິດຈາກສຽງລະເບີດແຕກຂຶ້ນ, ພວກມັນພາກັນ ຟ້າວດັດອາວຸນາດ່ຳທອບແລ່ນປ່າງບໍ່ມີທິບ.

ເພື່ອຮັກສາກຳລັງຂອງຕົນ, ເຂົາເຈົ້າໄດ້ຫາວິທີຫລົບ ຫລີກປ່າງກ່ອງແຄ້ວ, ເພື່ອອອກຈາກແຫ່ງວົງກ່າວ ປ່າງ

ທັນເວລາ.

ຮຸ່ງເຊົ້ານີ້ກໍ່ມາ, ພາຍຫລັງທີ່ໄດ້ກວດກາສະໜາມຄັກແນ່ແລ້ວ, ເຂົາເຈົ້າໄດ້ຂຶ້ນກວດກາປູ່ເທິງພູອີກ, ເມື່ອເມື່ອຮອດຈອມພູ, ອ້າຍ ສ ໄດ້ນຳພາອ້າຍນ້ອງ ຂຶ້ນຈັ້ງທ່າ ປູ່ຍອດສູງນັ້ນກ່ອນແລ້ວ, ພໍຂຶ້ນຮອດຈອມພູບັງບໍ່ທັນໄດ້ພັກເມື່ອຍເຊົາແຮງ, ພັດໄດ້ຮັບຄຳສັ່ງໃຫ້ໜ່ວຍເຂົາເຈົ້າໄລ່ຕິດຕາມດັບສູນສັດຕູ ແຕກໄປທິດບ້ານຊັນ, ບ້ານຄານ ອີກ, ເຖິງວ່າ: ເຂົາເຈົ້າຈະອິດເມື່ອຍປານໃດກໍຕາມ, ເຂົາເຈົ້າແມ່ນບໍ່ຍອມປະໃຫ້ ໂອກາດອັນດີນີ້ເສຍໄປເປົ່າໆ ເຂົາເຈົ້າໄດ້ໄລ່ຕິດຕາມດັບສູນສັດຕູຢ່າງໄກ້ຊິດ.

ພໍຮອດນ້ຳຄານ ຍາວແມ່ນ ເສຍຂັວນແຮງ. ທະຫານເລວຮັບຈ້າງໄທ ຕ້ອງຖິ້ມປືນ, ລູກແຕກ ລູກປືນ, ກະທັ້ງຮອດເຄື່ອງນຸ່ງຂອງຫົ່ມ ແລະ ຄັ້ງພະເຈົ້ານ້ອຍຫ້ອຍຄໍ ຊຶ່ງແມ່ນຂອງຮັກສາຊີວິດຂອງມັນນັ້ນ ກໍໄດ້ພ້ອມກັນ ມ້ວນລົງນ້ຳຄານໝົດ, ເຫດການ ທີ່ເກີດຂຶ້ນ ຄືເຊັ່ນນັ້ນກໍບໍ່ ແມ່ນເລື່ອງແປກປະຫລາດແຕ່ຢ່າງໃດເລີຍ, ແຕ່ຫາກແມ່ນກົດເກນທຳມະດາ ຂອງ ທະຫານເລວຮັບຈ້າງ ແລະ ລະບຽບຂອງຄົນຂີ້ຢ້ານເທົ່ານັ້ນ.

ເມື່ອໄລ່ຕິດຕາມສັດຕູໄປຮອດ ບ້ານຊັນ, ເຂົາເຈົ້າໄດ້ເອົາ

ວ່າ: ພວກເຮົາ 12 ຄົນໜຶ່ງ ກໍສາມາດ ຕີເອົາຊະນະ ທະຫານປະຕິການໄທ 2 ເປແອັນ, ພວກເຮົາພັດຮັກສາ ກຳລັງໄດ້ດີ, ບໍ່ມັນບໍ່ແມ່ນເລື່ອງທຳມະດາໃດບໍ ? ເມື່ອເປັນຜູ້ມີໄຊຄືແນວນີ້ ພວກເຮົາໄປຍິງປານາກິນ ມ່ວນຊື່ນສະຫລອງໄຊຊະນະເທາະ ? ບ້ອນຄວາມພາກພູມໃຈນັ້ນ ໄດ້ຊຸກຍູ້ໃຫ້ເຂົາເຈົ້າ ເຫັນດີພັກຜ່ອນຢູ່ແຄມນ້ຳຊັບ, ແຕ່ຈັ່ງແມ່ນເລື່ອງບັງເອີນ ບໍ່ນຶກເລີຍວ່າ ສັດຕູ ຈະແຕກດະພີດ ຕະພືຢ່າງບໍ່ມີທິດທາງຄືແນວນີ້, ເວລານັ້ນ ເຂົາເຈົ້າບາງຄົນ ກໍພວມເຜົາເຂົ້າຫລາມ, ປີ້ງປາ, ອາບນ້ຳ ແລະ ອື່ນໆ. ຂະນະນັ້ນສັດຕູ 5 ຄົນ ທີ່ໄດ້ແຕກທັບນັ້ນກໍໄດ້ນຳທາງເສັ້ນເກົ່າມຸ່ງໜ້າໄປຫາທິດພູກຸ່ມ ເມື່ອມັນໄດ້ຍິນສຽງລະເບີດ ແລະສຽງຄົນລົມກັນມັນກໍບໍ່ໄດ້ຄິດໜ້າຄິດຫລັງ ແລ້ວຮ້ອງຖາມວ່າ: "ທະຫານລາວ ຫລື ທະຫານໄທ" ເມື່ອຍິນສຽງຖາມແນວນັ້ນ ເຂົາເຈົ້າດ່າງຄົນ ກໍແລ່ນຫາທີ່ກຳບັງ ກຽມພ້ອມສູ້ຮົບ, ເຫັນດີແນວນັ້ນ ພວກມັນຈຶ່ງໃຊ້ດາບບິງປືນແອັມເມິ້ – 19 ນາໃສ່ ບິງບໍ່ໄດ້ຮັບຜົນພວກມັນບໍ່ຮູ້ ຈະເຮັດແນວໃດກໍມີແຕ່ຄອງດາບເທົ່ານັ້ນ, ຈາກນັ້ນສັດຕູທີ່ຕົກເຂົ້າໃນວົງປິດລ້ອມ ກໍໄດ້ກາຍເປັນເປົ້າຍິງທີ່ດີຂອງສີມືອັນແມ່ນຢຳຂອງເຂົາເຈົ້າຕື່ມອີກ.

ຜ່ານໄລຍະສັ້ນໆ ທີເຂົາເຈົ້າເຄືອນໄຫວປະຕິບັດໜ້າທີ ສູ້ຣົບດ້ວຍຄວາມພິລາດລະ ທະຫານນັ້ນເຂົາເຈົ້າດັບສູນສັດ ຕູໄດ້ 5 ຄົນ ຍຶດປືນໄດ້ 6 ກະບອກ, ຍຶດເຄື່ອງຂອງຕ່າງໆ ໄດ້ຈຳນວນໜຶ່ງ ເຮັດໃຫ້ທະຫານປະຕິການໄທ 2 ເປແອັນ ຕ້ອງແຕກສະລຸຍຜ່າຍ, ພາຍຫລັງເກົ້ໄດ້ຂັບໄລ່ໄຖທົວສັດ ຕູອອກຈາກແຫຼ່ງນັ້ນຮາບຄາບແລ້ວ. ແລງມື້ນັ້ນເຂົາເຈົ້າໄດ້ ກັ້ນຄືນກິນຂອງກິນດ້ວຍສີໜ້າເບີກບານມ່ວນຊື່ນ ແລະ ທ່າ ທາງອັນສະງ່າອົງອາດຂອງຜູ້ມີໄຊ.

ບຸນລື່ງ ແກ້ວບົວສາຍ
ສ. ສາຍບຸນມີ

22 MAR 2010

ພິມທີ່ ໂຮງພິມແຫ່ງຊາດ
ຈຳນວນ 15.000 ຫົວ ຂະໜາດ 13x18,4
ພິມແລ້ວ ວັນທີ 15 6-1982